ກໍ່ສ້າງພັກ

ວາລະສານເຜີຍແຜ່, ແນະນຳວຽກງານຈັດຕັ້ງ, ກໍ່ສ້າງພັກ-ພະນັກງານ
ຂອງຄະນະຈັດຕັ້ງສູນກາງພັກ

ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກໃຫ້ປະກົດຜົນເປັນຈິງ



ພິທີສະເຫຼີມສະຫຼອງວັນສ້າງຕັ້ງວາລະສານກໍ່ສ້າງພັກ ຄົບຮອບ 30 ປີ

(20 ຕຸລາ 1993-20 ຕຸລາ 2023)

ສະບັບ: 261

ປະຈຳເດືອນ ພະຈິກ 2023

Korsangphakmagazine@gmail.com

ໃນລະຫວ່າງວັນທີ 11-12 ຕຸລາ 2023 ຄະນະຈັດຕັ້ງສູນກາງພັກໄດ້ຈັດກອງປະຊຸມ ເຜີຍແຜ່ເຊື່ອມຊຶມ ຜົນສຳເລັດກອງປະຊຸມຄົບຄະນະກາງສະໄໝ ຂອງຄະນະບໍລິຫານງານສູນກາງພັກສະໄໝທີ XI ແລະ ກອງປະຊຸມ ຄົບຄະນະກາງສະໄໝທີ IX ຂອງຄະນະບໍລິຫານງານພັກຄະນະຈັດຕັ້ງສູນກາງພັກ ໃຫ້ກຽດເຜີຍແຜ່ໂດຍສະຫາຍ ນາງສີໃສ ລືເດດມູນສອນກຳມະການກົມການເມືອງ, ເລຂາທິການສູນກາງພັກ, ເລຂາຄະນະພັກ, ຫົວໜ້າຄະນະຈັດ ຕັ້ງສູນກາງພັກ, ສະຫາຍ ນາງບຸດສະດີ ທະນະເມືອງ ກຳມະການສູນກາງພັກ, ຮອງເລຂາຄະນະພັກ, ຮອງຫົວໜ້າຄະ ນະຈັດຕັ້ງສູນກາງພັກ, ມີກຳມະການປະຈຳພັກ, ກຳມະການຄະນະພັກ, ຫົວໜ້າກົມ, ຮອງກົມ ແລະ ພະນັກງານ-ລັດຖະກອນເຂົ້າຮ່ວມ.

ວັນທີ 12 ຕຸລາ 2023 ຄະນະຈັດຕັ້ງສູນກາງພັກ ໄດ້ຈັດພິທີປະກາດການສັບຊ້ອນບ່ອນປະຈຳການ ຂອງ ພະນັກງານ ແລະ ແຕ່ງຕັ້ງຕຳແໜ່ງບໍລິຫານຂັ້ນພະແນກ ໂດຍການເປັນປະທານຂອງສະຫາຍ ນາງ ສີໃສ ລືເດດ ມູນສອນ ກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ເລຂາຄະນະພັກ, ຫົວໜ້າຄະນະຈັດ ຕັ້ງສູນກາງພັກ, ມີບັນດາຄະນະພັກ, ຫົວໜ້າກົມ, ຮອງກົມ ແລະ ພະນັກງານ-ລັດຖະກອນເຂົ້າຮ່ວມ.

ຜູ້ທີ່ໄດ້ຮັບລາງວັນການປະກວດບົດຂຽນດີເດັ່ນ

ປະເພດທີ 1

ປະເພດທີ 2

ປະເພດທີ 3

ວັນທີ20ຕຸລາ2023ຄະນະຈັດຕັ້ງສູນກາງພັກ ໄດ້ຈັດພິທີສະເຫຼີມສະຫຼອງວາລະສານກໍ່ສ້າງພັກຄົບຮອບ 30 ປີ (20 ຕຸລາ 1993-20 ຕຸລາ 2023) ໂດຍການເຂົ້າຮ່ວມ ແລະ ມີຄຳເຫັນໂອ້ລົມຂອງສະຫາຍນາງ ບຸດສະດີ ທະນະເມືອງ ກຳມະການສູນກາງພັກ, ຮອງເລຂາຄະນະພັກ, ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ, ມີກຳມະການຄະນະພັກ, ຄະນະກົມ, ສູນ, ຫ້ອງການຄະນະຈັດຕັ້ງສູນກາງພັກ, ຄະນະບັນນາທິການທີ່ມາຈາກສື່ຕ່າງໆ, ພະນັກງານອາວຸໂສບຳນານ ອາດີດຄະນະບັນນາທິການວາລະສານກໍ່ສ້າງພັກ, ພະນັກງານນັກຂ່າວ, ນັກຂຽນ, ເພື່ອນຮ່ວມງານ ແລະ ແຂກທີ່ຖືກເຊີນເຂົ້າຮ່ວມ.

ວັນທີ 12 ຕຸລາ 2023 ກະຊວງແຜນການ ແລະ ການລົງທຶນ ໄດ້ຈັດພິທີມອບ-ຮັບໃບຍັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຈຳນວນ 15 ໜ່ວຍພັກ, ມອບບັດສະມາຊິກພັກສົມບູນ ຊຸດທີ IX ແລະ ມອບໃບຍ້ອງຍໍໃຫ້ພະນັກງານ ປະຈຳປີ 2022 ໂດຍການເປັນປະທານຂອງສະຫາຍ ນາງ ຄຳຈັນ ວົງແສນບູນ ຮອງເລຂາຄະນະບໍລິຫານງານພັກ ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ, ມີຄະນະປະຈຳພັກ, ບັນດາເລຂາ, ຮອງເລຂາໜ່ວຍພັກ ແລະ ສະມາຊິກພັກ-ພະນັກງານພາຍໃນກະຊວງເຂົ້າຮ່ວມ.

ວັນທີ 17 ຕຸລາ 2023 ທີ່ສະໂມສອນຄະນະຈັດຕັ້ງສູນກາງພັກ ໄດ້ຈັດພິທີເລື່ອນສະມາຊິກພັກສຳຮອງເປັນສົມບູນຂອງໜ່ວຍພັກຫ້ອງການ, ໜ່ວຍພັກກົມກໍ່ສ້າງພັກ ແລະ ຮັບມະຫາຊົນກ້າວໜ້າເຂົ້າເປັນສະມາຊິກພັກສຳຮອງ ຂອງໜ່ວຍພັກກົມຄຸ້ມຄອງພະນັກງານ ໂດຍເປັນກຽດເຂົ້າຮ່ວມຂອງສະຫາຍ ພູຂົງ ພິລາເພັດ ກຳມະການຄະນະພັກ ເລຂາໜ່ວຍພັກຫ້ອງການ, ສະຫາຍເລຂາໜ່ວຍພັກກົມຄຸ້ມຄອງພະນັກງານ, ຮອງເລຂາໜ່ວຍພັກກົມກໍ່ສ້າງພັກ, ມີຄະນະໜ່ວຍພັກ, ຕາງໜ້າຈາກ 03 ອົງການຈັດຕັ້ງມະຫາຊົນ, ແຂກຖືກເຊີນຈາກບັນດາກົມ ແລະ ສະມາຊິກພັກ 3 ໜ່ວຍພັກເຂົ້າຮ່ວມ.

ປະທານ ໄກສອນ ພົມວິຫານ

ເວົ້າເຖິງຄຸນສົມບັດ-ຄວາມພາກພຽນຂອງພະນັກງານ-ສະມາຊິກພັກ

#ການຝຶກຝົນຫຼໍ່ຫຼອມຊົນຊັ້ນກຳມະກອນ ໃຫ້ແກ່ສະມາຊິກພັກເປັນບັນຫາສຳຄັນຍິ່ງ.ພວກເຮົາບໍ່ໄດ້ລົດລະ ໃນການສຶກສາອົບຮົມລັດທິມາກ-ເລນິນ, ແນວທາງ, ແຜນນະໂຍບາຍ, ນະໂຍບາຍຂອງພັກ ໃຫ້ແກ່ສະມາຊິກພັກ, ພ້ອມກັນນັ້ນ ກໍ່ໄດ້ຕັ້ງໜ້າສູ້ກຳຈັດປັດເປົ່າບັນດາປະກົດການຂອງແນວຄິດໄຮ້ກຳມະຊີບ, ເປັນຕົ້ນແນວຄິດນາຍທຶນນ້ອຍ, ແນວຄິດຊາວນາທີ່ກະທົບໃສ່ການຈັດຕັ້ງພັກຢູ່ເລື້ອຍໆ, ເດັດດ່ຽວປົກປັກຮັກສາຄວາມຜ່ອງໃສຂອງລັດທິມາກ-ເລນິນ ກາຍເປັນລະບົບແນວຄິດແຕ່ອັນດຽວຂອງພັກເຮົາ.

#ພວກເຮົາໄດ້ເຊີດຊູນ້ຳໃຈຮັກຊາດອັນແທ້ຈິງສົມທົບນ້ຳໃຈສາກົນກຳມະຊີບອັນຜ່ອງໃສຢູ່ເລື້ອຍໆ, ເດັດດ່ຽວຕໍ່ສູ້ຕ້ານບັນດາປະກົດການແນວຄິດຊາດຄັບແຄບ, ເຫັນແກ່ຕົນເອງ, ເອື່ອຍອີງ,ຕິຕົວຕ່ຳ.ພ້ອມກັນນັ້ນກໍ່ໄດ້ເຮັດສຸດຄວາມສາມາດຂອງຕົນປະກອບສ່ວນເຂົ້າໃນການເພີ່ມທະວີກຳລັງແຮງປະຕິວັດ ແລະ ສັນຕິພາບໂລກ.

ພະນັກງານ-ສະມາຊິກພັກ ຈົ່ງເສີມຂະຫຍາຍມູນເຊື້ອອັນສະຫງ່າງາມຂອງພັກ, ຈິດໃຈປະຕິວັດເຖິງຖອງ ແລະ ນ້ຳໃຈເພິ່ງຕົນສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ປົກປັກຮັກສາ ແລະ ເພີ່ມທະວີຄວາມສາມັກຄີເປັນເອກະພາບພາຍໃນພັກ, ຮັບໃຊ້ປະຊາຊົນຜູ້ອອກແຮງງານເຜົ່າຕ່າງໆຢ່າງສຸດອົກສຸດໃຈ, ບາກບັ່ນພະຍາຍາມຮ່ຳຮຽນ, ຝຶກຝົນຫຼໍ່ຫຼອມ ເພື່ອຍົກລະດັບໃນທຸກດ້ານໃຫ້ສູງຂຶ້ນ, ເປັນແບບຢ່າງແວ່ນແຍງ, ນຳໜ້າພາທາງ ໃນການປະຕິບັດທຸກໜ້າທີ່ຂອງການປະຕິວັດ, ສົມກັບຄວາມໄວ້ເນື້ອເຊື່ອໃຈ ແລະ ຄວາມຮັກແພງຂອງປະຊາຊົນເຮົາ ແລະ ຂອງອ້າຍນ້ອງເພື່ອນມິດໃນທົ່ວໂລກ.

(ຄັດຈາກປຶ້ມ 30 ປີ ແຫ່ງການຕໍ່ສູ້ພາຍໃຕ້ທຸງຊະນະເລີດຂອງພັກ, ໜ້າທີ 29, 30, 34 ປີ 1985)

ມີແຕ່ຍົກສູງຄວາມເປັນແບບຢ່າງນຳໜ້າໃນການເຄົາລົບກົດໝາຍ ຂອງພະນັກງານ-ສະມາຊິກພັກ ຈຶ່ງເຮັດໃຫ້ພັກເຮົາເຂັ້ມແຂງ

(ລາງວັນຊະນະເລີດແຂ່ງຂັນບົດຂຽນ ເນື່ອງໃນໂອກາດສະເຫຼີມສະຫຼອງວັນສ້າງຕັ້ງ ວາລະສານກໍ່ສ້າງພັກ ຄົບຮອບ 30 ປີ)

ໂດຍ: ແຈັກ ມຸຂະພົນ

ກົດໝາຍແມ່ນລະບົບຂໍ້ກຳນົດ, ຫຼັກການກ່ຽວກັບການດັດປັບການປະພຶດຂອງຄົນໃນສັງຄົມ ໂດຍແມ່ນລັດເປັນຜູ້ວາງອອກ ມີຜົນບັງຄັບໃຊ້ທົ່ວໄປ, ກົດໝາຍເກີດຂຶ້ນພ້ອມກັບການກຳເນີດຂອງລັດ ໃນເງື່ອນໄຂທີ່ສັງຄົມມີການພັນແຍກແບ່ງເປັນຊົນຊັ້ນ ແລະ ມີການຕໍ່ສູ້ກັນຢ່າງດຸເດືອດ ທີ່ບໍ່ສາມາດປະນີປະນອມກັນໄດ້, ຊົນຊັ້ນກຳອຳນາດ ຈຶ່ງສ້າງກົດໝາຍຂຶ້ນ ເພື່ອເປັນເຄື່ອງມືປົກປ້ອງສິດຜົນປະໂຫຍດຂອງຕົນ. ສະນັ້ນ, ເນື້ອໃນກົດໝາຍ ຈຶ່ງສະແດງເຖິງເຈດຈຳນົງຂອງຊົນຊັ້ນກຳອຳນາດ ແລະ ຮັບປະກັນການຈັດຕັ້ງປະຕິບັດໂດຍລັດ ແນໃສ່ດັດປັບສາຍພົວພັນຂອງຄົນໃນສັງຄົມ. ປະທານ ໄກສອນ ພົມວິຫານ ເຄີຍກ່າວໄວ້ໃນນິພົນເລືອກເຟັ້ນ ເຫຼັ້ມ 4, ປີ 2005, ໜ້າ 502 ວ່າ: ກົດໝາຍຂອງພວກເຮົາແມ່ນກົດໝາຍ ຂອງລະບອບປະຊາທິປະໄຕປະຊາຊົນ, ການສ້າງກົດໝາຍຕ້ອງສະແດງເຖິງລັກສະນະຊົນຊັ້ນ, ລັກສະນະຊາດ ແລະ ລັກສະນະປະຊາຊົນ. ສະນັ້ນ, ກົດໝາຍຕ້ອງສ່ອງແສງຢ່າງຈະແຈ້ງເຖິງໜ້າທີ່ການເມືອງຂອງພັກ, ເຖິງຄວາມມຸ່ງມາດປາຖະໜາຂອງປະຊາຊົນເຜົ່າຕ່າງໆ ແລະ ເປັນການເສີມສ້າງຄວາມສັກສິດ ແຫ່ງການຄຸ້ມຄອງຂອງລັດ.

ອີງຕາມຂໍ້ມູນຈາກເວບໄຊ-ເພຈ ຂອງສະພາແຫ່ງຊາດ (ອັບເດດຄັ້ງຫຼ້າສຸດເມື່ອຕົ້ນປີ 2023) ໃຫ້ຮູ້ວ່າ: ມາຮອດປະຈຸບັນ ສປປ ລາວ ມີກົດໝາຍທີ່ສ້າງ ແລະ ປະກາດໃຊ້ເປັນທາງການແລ້ວ 179 ສະບັບ ເຊິ່ງໄດ້ແບ່ງອອກເປັນ 5 ຂົງເຂດໃຫຍ່ຄື: ກົດໝາຍຂົງເຂດການປົກຄອງ-ຍຸຕິທຳ 41 ສະບັບ, ກົດໝາຍຂົງເຂດ ປກຊ-ປກສ 12 ສະບັບ, ກົດໝາຍຂົງເຂດເສດຖະກິດ 84 ສະບັບ, ກົດໝາຍຂົງເຂດວັດທະນະທຳ-ສັງຄົມ 38 ສະບັບ ແລະ ກົດໝາຍຂົງເຂດຕ່າງປະເທດ 4 ສະບັບ. ແຕ່ຖ້ານັບເອົາ 3 ກົດໝາຍສ້າງໃໝ່ຫຼ້າສຸດທີ່ສ້າງ ແລະ ຖືກຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 4 ຊຸດທີ IX ເມື່ອທ້າຍປີ 2022 ທີ່ຜ່ານມາ ແຕ່ຍັງບໍ່ທັນຖືກປະກາດໃຊ້ ມີກົດໝາຍ ວ່າດ້ວຍໜັງສືຜ່ານແດນ, ກົດໝາຍ ວ່າດ້ວຍການທາງນ້ຳ ແລະ ກົດໝາຍວ່າດ້ວຍຫໍພິພິທະພັນ ລວມເຂົ້າຈະເພີ່ມເປັນ 182 ສະບັບແລ້ວ. ເມື່ອມາຮອດກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດຊຸດທີ IX ທີ່ໄຂຂຶ້ນ ແລະ ປິດລົງ ໃນລະຫວ່າງວັນທີ 26 ມິຖຸນາ ເຖິງວັນທີ 18 ກໍລະກົດ 2023 ກອງປະຊຸມ ໄດ້ພິຈາລະນາ, ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍຈຳນວນ 10 ສະບັບ ເຊິ່ງປະກອບມີກົດໝາຍສ້າງໃໝ່ 4 ສະບັບ. ນອກຈາກນັ້ນ, ກໍ່ຍັງມີບັນດານິຕິກຳລຸ່ມກົດໝາຍ ເປັນຕົ້ນແມ່ນ: ມະຕິ, ຄຳສັ່ງ, ລັດຖະບັນຍັດ, ດຳລັດ, ຂໍ້ຕົກລົງ, ແຈ້ງການ ແລະ ລະບຽບການຕ່າງໆເປັນຈຳນວນຫຼາຍ.

ໃນລັດຖະທຳມະນູນ ແຫ່ງ ສປປ ລາວ, ສະບັບປັບປຸງໃໝ່ ປີ 2015, ມາດຕາ 47 (ປັບປຸງ) ໄດ້ລະບຸໄວ້ວ່າ: ພົນລະເມືອງລາວ ມີພັນທະເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍ, ປະຕິບັດລະບຽບການອອກແຮງງານ, ລະບຽບການດຳລົງຊີວິດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມຢ່າງເຂັ້ມງວດ. ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ແຫ່ງ ສປປ ລາວ ມາດຕາ 2 ໄດ້ລະບຸໄວ້ວ່າ: ພະນັກງານ-ລັດຖະກອນ ແມ່ນພົນລະເມືອງລາວຜູ້ຖືກຮັບບັນຈຸໃຫ້ເຮັດວຽກ, ເລືອກຕັ້ງ ຫຼື ແຕ່ງຕັ້ງໃຫ້ດຳລົງຕຳແໜ່ງໃດໜຶ່ງ ໃນອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ຂັ້ນສູນກາງ ແລະ ທ້ອງຖິ່ນ ຫຼື ໄປປະຈຳການຢູ່ສຳນັກງານຜູ້ຕາງໜ້າສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຢູ່ຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ເຊິ່ງໄດ້ຮັບເງິນເດືອນ ແລະ ເງິນອຸດໜູນ ຈາກງົບປະມານແຫ່ງລັດ. ໃນນັ້ນ, ມາດຕາ 56-57 ຂອງກົດໝາຍສະບັບດັ່ງກ່າວ ຍັງໄດ້ໃຫ້ຮູ້ອີກວ່າ: ພະນັກງານ-ລັດຖະກອນ ຕ້ອງຈົງຮັກພັກດີຕໍ່ອຸດົມການສັງຄົມນິຍົມ, ສັດຊື່ບໍລິສຸດ ຕໍ່ປະເທດຊາດ ແລະ ຕໍ່ປະຊາຊົນ; ເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍ, ລະບຽບການ ແລະ ເຂົ້າຮ່ວມການເຄື່ອນໄຫວວຽກງານຕ່າງໆ ຢູ່ໃນອົງການຈັດຕັ້ງບ່ອນຕົນສັງກັດ; ເຄົາລົບສິດເປັນເຈົ້າ ຂອງປະຊາຊົນ, ຮັບຟັງ, ພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງປະຊາຊົນ, ຢູ່ພາຍໃຕ້ການກວດກາ ຂອງປະຊາຊົນ ແລະ ການຈັດຕັ້ງຂັ້ນເທິງ; ປະຕິບັດພັນທະອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ...ປະຕິບັດພາລະບົດບາດ, ໜ້າທີ່ ຄວາມຮັບຜິດຊອບຕາມການຈັດຕັ້ງມອບໝາຍໃຫ້ໂດຍສອດຄ່ອງກັບລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ; ໃຫ້ບໍລິການຕໍ່ປະຊາຊົນ ດ້ວຍຄວາມຈິງໃຈ ແລະ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

ໜຶ່ງໃນ 5 ຫຼັກການກໍ່ສ້າງ ແລະ ປັບປຸງຕົນເອງ (ກົດລະບຽບຂອງພັກ ສະໄໝທີ XI, ປີ 2021, ໜ້າ 3-4) ພັກປະຊາຊົນປະຕິວັດລາວ ຈັດຕັ້ງຕາມຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ, ພັກມີລະບຽບວິໄນເຂັ້ມງວດ, ເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຂອງລັດ; ສະມາຊິກພັກ ສະເໝີພາບກັນ ບົນພື້ນຖານກົດລະບຽບພັກ, ກົດໝາຍ ແລະ ລະບຽບການຂອງລັດ. ໃນຂະນະທີ່ໜຶ່ງໃນ 7 ໜ້າທີ່ຂອງສະມາຊິກພັກ (ກົດລະບຽບພັກ ສະໄໝທີ XI, ປີ 2021, ມາດຕາ 4, ໜ້າ 10) ກໍ່ໄດ້ກ່າວວ່າ: ເປັນເຈົ້າການປະຕິບັດແນວທາງ, ແຜນນະໂຍບາຍ, ມະຕິ, ຄຳສັ່ງ, ກົດລະບຽບພັກ, ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຂອງລັດ; ປະກອບສ່ວນເຂົ້າໃນການກໍ່ສ້າງ, ບູລະນະແນວທາງ, ແຜນນະໂຍບາຍ, ນະໂຍບາຍຂອງພັກ-ລັດ. ໃນນັ້ນ, ພັກເຮົາຍາມໃດກໍ່ຖືສຳຄັນຕໍ່ການຊີ້ນຳ-ນຳພາວຽກງານພະນັກງານ ໂດຍສະເພາະ ການເຊີດຊູຄວາມເປັນແບບຢ່າງນຳໜ້າຂອງພະນັກງານ-ສະມາຊິກພັກ ໃນການຍົກສູງສະຕິເຄົາລົບລັດຖະທຳມະນູນ ແລະ ລະບຽບກົດໝາຍ ເຊິ່ງສະແດງອອກ ໃນກົດລະບຽບຂອງພັກ ສະໄໝທີ XI, ປີ2021, ມາດຕາ 34-35, ໜ້າ 47-50 ໄດ້ລະບຸໄວ້ວ່າ: ພະນັກງານ-ສະມາຊິກພັກ ແມ່ນກຳລັງການເມືອງຫຼັກແຫຼ່ງໃນພາລະກິດປະຕິວັດຂອງພັກ, ເປັນຜູ້ຕັດສິນຜົນໄດ້-ຜົນເສຍ ຂອງການຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ, ຂອງລັດ, ເປັນຜູ້ທີ່ໄດ້ຮັບການສຶກສາອົບຮົມຈາກພັກ... ສາມາດຄົ້ນຄວ້າ, ເຊື່ອມຊຶມ, ກຳແໜ້ນແນວທາງ ກໍ່ຄືແຜນນະໂຍບາຍຂອງພັກ,

ກົດລະບຽບພັກ, ກົດໝາຍຂອງລັດ ແລະ ນຳພາຈັດຕັ້ງປະຕິບັດມີຜົນສຳເລັດ...ເຮັດວຽກມີແຜນການ, ມີໂຄງການ, ມີການຊຸກຍູ້ຕິດຕາມ, ກວດກາ, ສະຫຼຸບຕີລາຄາ, ຖອດຖອນບົດຮຽນ ແລະ ສ່ອງແສງລາຍງານເປັນປົກກະຕິ; ມີແບບແຜນນຳພາຕິດພັນກັບຮາກຖານ, ແທດຕົວຈິງ, ມີຄວາມຮັບຜິດຊອບສູງ ແລະ ເປັນແບບຢ່າງນຳໜ້າທີ່ດີ; ເອກະສານມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI, ປີ 2021, ໜ້າ 84 ໄດ້ລະບຸໄວ້ວ່າ: ປຸກລະດົມຂະບວນການຝຶກຝົນຫຼໍ່ຫຼອມຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ ແລະ ຄວາມເປັນແບບຢ່າງນຳໜ້າ ຂອງສະມາຊິກພັກ-ພະນັກງານ ເປັນຕົ້ນແມ່ນສະມາຊິກພັກ-ພະນັກງານ ທີ່ເປັນຫຼັກແຫຼ່ງນຳພາຢູ່ແຕ່ລະບ່ອນ, ແກ້ໄຂສະພາບການຖືເບົາ ການພັດທະນາຕົນເອງ...

ເພື່ອຜັນຂະຫຍາຍເນື້ອໃນຈິດໃຈພື້ນຖານ ຂອງມະຕິດັ່ງກ່າວ, ຄະນະບໍລິຫານງານສູນກາງພັກ ໄດ້ອອກມະຕິສະບັບເລກທີ 03/ຄບສພ ລົງວັນທີ 30/9/2021 ວ່າດ້ວຍເພີ່ມທະວີການນຳພາຂອງພັກ ເພື່ອສ້າງການຫັນປ່ຽນຢ່າງແຂງແຮງ ແລະ ເລິກເຊິ່ງ ວຽກງານພະນັກງານ, ໜ້າ 2 ວ່າ: ສ້າງການຫັນປ່ຽນວຽກງານພະນັກງານ ແມ່ນໜຶ່ງໃນບັນຫາສຸດທີ່ສຳຄັນ ພົວພັນເຖິງການກຳອຳນາດ ແລະ ການຄົງຕົວ ຂອງພັກເຮົາ ກໍ່ຄືຜົນສຳເລັດ ຂອງພາລະກິດປ່ຽນແປງໃໝ່ຮອບດ້ານມີຫຼັກການຂອງພັກ ທັງແມ່ນບັນຫາຮີບດ່ວນ ສະເພາະໜ້າ ແລະ ທັງເປັນບັນຫາຍຸດທະສາດ ພື້ນຖານຍາວນານ ເພື່ອສ້າງໃຫ້ມີກຳລັງຖັນແຖວພະນັກງານ (ນຳພາ-ຄຸ້ມຄອງ ແລະ ວິຊາການ) ທີ່ພຽບພ້ອມ ແລະ ປ່ຽມລົ້ນໄປດ້ວຍຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ ທີ່ໜັກແໜ້ນ, ມີນ້ຳໃຈເສຍສະຫຼະສູງ, ເປັນແບບຢ່າງທີ່ດີໃນການດຳລົງຊີວິດ, ມີຈັນຍາບັນ, ຈັນຍາທຳ, ມີຄວາມຮູ້, ຄວາມສາມາດ-ຊຳນິຊຳນານງານ, ມີແບບແຜນເຮັດວຽກແບບວິທະຍາສາດ, ຮັບໃຊ້ປະຊາຊົນ ແລະ ປະເທດຊາດຢ່າງສຸດໃຈ, ສືບທອດພາລະກິດປະຕິວັດຂອງພັກ ແລະ ຂອງຊາດລາວໃຫ້ຍືນຍົງຄົງໝັ້ນ.

ແນວໃດກໍ່ຕາມ, ເຖິງວ່າພັກປະຊາຊົນປະຕິວັດລາວ ແມ່ນພັກກຳອຳນາດ, ເປັນແກນນຳໃນລະບົບການເມືອງ, ມີພາລະບົດບາດນຳພາລັດ, ນຳພາທົ່ວສັງຄົມກໍ່ຕາມ, ແຕ່ກໍ່ບໍ່ໝາຍຄວາມວ່າພະນັກງານ-ສະມາຊິກພັກ ຈະຢູ່ເໜືອ ຫຼື ຢູ່ນອກກົດໝາຍ; ຍ້ອນວ່າໃນການເຄື່ອນໄຫວຂອງຕົນ, ພັກຍາມໃດກໍ່ຍຶດໝັ້ນຕາມທິດນຳທີ່ວ່າ: ພັກຍາມໃດ ກໍ່ເຄົາລົບລັດຖະທຳມະນູນ ແລະ ກົດໝາຍຂອງລັດ, ບໍ່ເຮັດພາລະບົດບາດຄຸ້ມຄອງ, ອຳນວຍຄວບຄຸມແທນລັດ. ດັ່ງນັ້ນ, ທຸກການເຄື່ອນໄຫວຂອງພະນັກງານ-ສະມາຊິກພັກກໍ່ຕ້ອງຢູ່ໃນຂອບເຂດລັດຖະທຳມະນູນ ແລະ ກົດໝາຍ; ມະຕິ, ຄຳສັ່ງຂອງພັກບໍ່ສາມາດປ່ຽນແທນກົດໝາຍທັງບໍ່ຂັດກັບລັດຖະທຳມະນູນ ແລະ ກົດໝາຍ, ຍ້ອນວ່າກະໂຕຂໍ້ກຳນົດກົດໝາຍ ເນື້ອແທ້ກໍ່ແມ່ນການຫັນເອົາແນວທາງນະໂຍບາຍ ຂອງພັກມາເປັນເຈດຈຳນົງຂອງລັດ, ຂອງປະຊາຊົນ ແລະ ມີຜົນບັງຄັບໃຊ້ໃຫ້ທຸກອົງການຈັດຕັ້ງ ກໍ່ຄືພົນລະເມືອງທຸກຄົນ. ພັກເປັນຜູ້ນຳພາ ຍິ່ງຕ້ອງເປັນແບບຢ່າງນຳໜ້າໃນການສ້າງສະຕິເຄົາລົບ ແລະ ປະຕິບັດກົດໝາຍ, ສະມາຊິກພັກທີ່ເປັນພະນັກງານນຳພາ ຢູ່ໃນຖານະຕຳແໜ່ງສູງເທົ່າໃດຄວາມຮຽກຮ້ອງຕ້ອງການໃນການເປັນແບບຢ່າງຍິ່ງສູງເທົ່ານັ້ນ. ປະທານ ໄກສອນ ພົມວິຫານ ໄດ້ກ່າວໃນກອງປະຊຸມໃຫຍ່ຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 10 ສະໄໝທີ IV (ປີ 1991) ໄວ້ວ່າ: ຜູ້ມີຖານະຕຳແໜ່ງ ກໍ່ຄືທຸກອົງການຈັດຕັ້ງການເມືອງ-ສັງຄົມ,

ການຈັດຕັ້ງ ເສດຖະກິດ ແລະ ພົນລະເມືອງທຸກຄົນມີພັນທະເຄົາລົບ ແລະ ປະຕິບັດກົດໝາຍຢ່າງເຂັ້ມງວດ, ບໍ່ມີການຈັດຕັ້ງ ຫຼື ບຸກຄົນໃດຢູ່ເໜືອກົດໝາຍ, ຢູ່ນອກການດັດປັບຂອງກົດໝາຍ, ໝາຍຄວາມວ່າ ທຸກຄົນມີຄວາມສະເໝີພາບຕໍ່ໜ້າກົດໝາຍ, ບັນດາອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງມະຫາຊົນກໍ່ຕ້ອງປະຕິບັດຕາມລັດຖະທຳມະນູນ ແລະ ກົດໝາຍ ນັບຕັ້ງແຕ່ປະທານພັກຈົນເຖິງປະຊາຊົນທຳມະດາໂດຍປາສະຈາກກໍລະນີຍົກເວັ້ນໃດໆທັງສິ້ນ.

ໃນໄລຍະຜ່ານມາ, ເຖິງວ່າພະນັກງານ-ສະມາຊິກພັກສ່ວນຫຼາຍ ແມ່ນໄດ້ເພີ່ມທະວີບົດບາດການນຳພາຂອງຕົນ, ເປັນຕົ້ນແມ່ນໄດ້ຈັດຕັ້ງປະຕິບັດ 7 ໜ້າທີ່ຂອງສະມາຊິກພັກທີ່ໄດ້ລະບຸໄວ້ໃນກົດລະບຽບພັກສະໄໝທີ XI ກໍ່ຄືການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ແຫ່ງ ສປປ ລາວ ໂດຍໄດ້ຍົກລະດັບຄວາມຮູ້-ຄວາມສາມາດໃນການຈັດຕັ້ງປະຕິບັດແນວທາງນະໂຍບາຍ ກໍ່ຄືກົດລະບຽບຂອງພັກ, ລັດຖະທຳມະນູນ ແລະ ກົດໝາຍຂອງລັດຢ່າງເຂັ້ມງວດກໍ່ຕາມ, ແຕ່ກໍ່ຍັງມີພະນັກງານ-ສະມາຊິກພັກຈຳນວນໜຶ່ງ ບໍ່ທັນເປັນແບບຢ່າງນຳໜ້າມະຫາຊົນເທົ່າທີ່ຄວນໃນການເຄົາລົບ ແລະ ປະຕິບັດກົດໝາຍຢ່າງເຂັ້ມງວດ, ມີການກະທຳທີ່ເຫັນແກ່ຜົນປະໂຫຍດສ່ວນຕົວ, ສວຍໃຊ້ສິດອຳນາດ ແລະ ໜ້າທີ່ຕຳແໜ່ງເພື່ອຫາຜົນປະໂຫຍດສ່ວນຕົວ, ຄ້າຂາຍເຖື່ອນ, ຫຼິ້ນກິນຟຸມເຟືອຍ, ອາດຍາສິດ, ຂົ່ມຂູ່ປະຊາຊົນ, ໂລບມາກໂລພາ, ພັກພວກ, ຈຸ້ມເຈື້ອເຊື້ອສາຍ, ຄຳເວົ້າ ແລະ ການກະທຳບໍ່ໄປຄຽງຄູ່ກັນ...ປະກົດການດັ່ງກ່າວບໍ່ພຽງແຕ່ເຮັດໃຫ້ພະນັກງານ-ສະມາຊິກພັກເຫຼົ່ານັ້ນເສື່ອມທາດຂາດຄຸນເທົ່ານັ້ນ, ແຕ່ມັນຍັງເຮັດໃຫ້ບົດບາດອິດທິພົນຂອງພັກເສົ້າໝອງ ເຊິ່ງສະແດງອອກໃນກອງປະຊຸມວຽກງານຈັດຕັ້ງທົ່ວປະເທດ ຄັ້ງທີ XI ທີ່ຍົກໃຫ້ເຫັນຈຸດອ່ອນ-ຂໍ້ຄົງຄ້າງທີ່ວ່າ: ຖັນແຖວສະມາຊິກພັກ, ພະນັກງານ-ລັດຖະກອນ, ທະຫານ-ຕຳຫຼວດຈຳນວນບໍ່ໜ້ອຍ ບໍ່ເຊື່ອມຊຶມ, ກຳແໜ້ນແນວທາງຂອງພັກ, ເສື່ອມຖອຍດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ຈັນຍາບັນ, ຈັນຍາທຳ ແລະ ຂາດມານະຈິດບຸກບືນ, ຝຶກຝົນຕົນເອງ, ນ້ຳໃຈເສຍສະຫຼະບໍ່ສູງ, ບໍ່ກ້າຕໍ່ສູ້ກັບທ່າອ່ຽງທີ່ຜິດເຂວ, ສວຍໃຊ້ໜ້າທີ່ຕຳແໜ່ງກະທຳສິ່ງທີ່ຜິດຕໍ່ກົດລະບຽບຂອງພັກ, ກົດໝາຍຂອງລັດ, ຂາດຄວາມເປັນແບບຢ່າງນຳໜ້າ, ຄວາມເປັນເຈົ້າການໃນການຈັດຕັ້ງປະຕິບັດໜ້າທີ່ ທີ່ໄດ້ຮັບມອບໝາຍ ເຮັດໃຫ້ມະຫາຊົນຂາດຄວາມເຊື່ອຖື, ປະກົດການດັ່ງກ່າວໄດ້ສົ່ງຜົນສະທ້ອນໂດຍກົງເຖິງບົດບາດການນຳພາຂອງພັກ, ການຄຸ້ມຄອງຂອງລັດ.

ການນຳພາຂອງພັກເປັນປັດໄຈຕັດສິນໃນການເພີ່ມທະວີນິຕິທຳ, ດັ່ງນັ້ນການເຊີດຊູບົດບາດການນຳພາ, ຄວາມເປັນແບບຢ່າງນຳໜ້າຂອງພະນັກງານ-ສະມາຊິກພັກໃນການສ້າງສະຕິເຄົາລົບ ແລະ ປະຕິບັດກົດໝາຍຍິ່ງມີຄວາມໝາຍສຳຄັນຢ່າງພາວະວິໄສ. ຍ້ອນວ່າພັກເປັນຜູ້ກຳນົດທິດທາງໃນການຄຸ້ມຄອງຂອງລັດໃຫ້ຫັນໄປສູ່ການຄຸ້ມຄອງດ້ວຍລະບຽບກົດໝາຍ, ສະນັ້ນ ພະນັກງານ-ສະມາຊິກພັກຕ້ອງເປັນແບບຢ່າງໃນການເຄົາລົບ ແລະ ປະຕິບັດກົດໝາຍ; ຢາກເຮັດໄດ້ແນວນັ້ນ, ກ່ອນອື່ນໝົດຄະນະພັກຂັ້ນຕ່າງໆກໍ່ຄືພະນັກງານ-ສະມາຊິກພັກແຕ່ລະສະຫາຍ ຕ້ອງມີຄວາມຮັບຮູ້ກ່ຽວກັບກົດໝາຍຢ່າງຖືກຕ້ອງ ໃນລະດັບອັນແນ່ນອນ ໂດຍສະເພາະແມ່ນກົດໝາຍທີ່ກ່ຽວພັນໂດຍກົງກັບໜ້າທີ່ວຽກງານທີ່ຕົນນຳພາ, ມີຄວາມ

ອ່ານຕໍ່ໜ້າ 16

ປັບປຸງການຈັດຕັ້ງຮາກຖານພັກ ຢູ່ເມືອງແບງ ແຂວງອຸດົມໄຊ ໃຫ້ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ

ໂດຍ: ໄຊສະຫວາດ ສຸດທິວົງ

ການຈັດຕັ້ງຮາກຖານພັກແມ່ນການຈັດຕັ້ງພື້ນຖານລຸ່ມສຸດ ຂອງພັກ, ປະກອບດ້ວຍຄະນະພັກຮາກຖານ ແລະ ໜ່ວຍພັກ ມີທີ່ຕັ້ງເປັນແກນນຳໃນລະບົບການເມືອງຢູ່ຮາກຖານ, ແມ່ນບ່ອນດຳເນີນຊີວິດ ຂອງສະມາຊິກພັກ, ບ່ອນຮັບເອົາມະຫາຊົນທີ່ກ້າວໜ້າເຂົ້າພັກ, ບ່ອນຈັດຕັ້ງປະຕິບັດກົດລະບຽບ ຂອງພັກ, ຜັນຂະຫຍາຍແນວທາງນະໂຍບາຍ ແລະ ກົດໝາຍ ຂອງລັດ ໃຫ້ປະກົດຜົນເປັນຈິງ. ການປັບປຸງ, ກໍ່ສ້າງການຈັດຕັ້ງຮາກຖານພັກແມ່ນຄວາມຮຽກຮ້ອງຕ້ອງການຈຳເປັນພາວະວິໄສທີ່ພົວພັນເຖິງການຄົງຕົວ ແລະ ຂະຫຍາຍຕົວ ຂອງພັກເຮົາເພາະວ່າ: ການຈັດຕັ້ງຮາກຖານພັກແມ່ນພື້ນຖານ ຂອງພັກ, ເປັນແກນນຳໃນລະບົບການເມືອງຢູ່ຂັ້ນຮາກຖານ; ເປັນບ່ອນດຳເນີນຊີວິດ ຂອງສະມາຊິກພັກ, ສຶກສາອົບຮົມ, ກໍ່ສ້າງ ແລະ ຮັບເອົາມະຫາຊົນກ້າວໜ້າເຂົ້າເປັນສະມາຊິກພັກ; ເປັນບ່ອນຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍ, ນະໂຍບາຍ, ກົດລະບຽບພັກ, ກົດໝາຍ ແລະ ລະບຽບການ ຂອງລັດໃຫ້ປະກົດຜົນເປັນຈິງ ແມ່ນຄວາມຮັບຜິດຊອບໜ້າທີ່ການເມືອງ ຂອງຄະນະພັກແຕ່ລະຂັ້ນຕ້ອງເປັນເຈົ້າການປັບປຸງ, ກໍ່ສ້າງຕົວເອງທີ່ມີຄຸນນະພາບ ຮັບປະກັນເຮັດຫຼ້ອນໜ້າທີ່ທີ່ພັກ ແລະ ປະເທດຊາດມອບໝາຍໃຫ້ມີຜົນສຳເລັດ ເຊິ່ງມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກໄດ້ລະບຸໄວ້ວ່າ: ປັບປຸງການຈັດຕັ້ງຮາກຖານພັກແຕ່ລະຂັ້ນໃຫ້ມີຄວາມເຂັ້ມແຂງ, ເດັດດ່ຽວແກ້ໄຂບັນຫາທີ່ຄົງຄ້າງຢູ່ພາຍໃນພັກ ແລະ ເຮັດໃຫ້ການຈັດຕັ້ງຮາກຖານພັກມີຄວາມປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ ເປັນແກນນຳໃນລະບົບການເມືອງ.

ຄະນະບໍລິຫານງານພັກເມືອງແບງ ໄດ້ເອົາໃຈໃສ່ໃນການຍົກສູງຄຸນນະພາບ ຂອງຄະນະໜ່ວຍພັກ ແລະ ສະມາຊິກພັກໃຫ້ມີຄວາມເຂັ້ມແຂງ, ໜັກແໜ້ນທາງດ້ານການເມືອງ-ແນວຄິດ, ການຈັດຕັ້ງ ແລະ ແບບແຜນວິທີນຳພານັ້ນເອງ, ປັບປຸງການຈັດຕັ້ງ ແລະ ການເຄື່ອນໄຫວຮາກຖານພັກໃຫ້ຖືກ ຕ້ອງຕາມຫຼັກການ, ທິດນຳໃນການກໍ່ສ້າງ ແລະ ປັບປຸງພັກ, ກົດລະບຽບພັກ, ປັບປຸງພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ຂອງຮາກຖານພັກ ໃຫ້ສອດຄ່ອງກັບສະພາບເງື່ອນໄຂຕົວຈິງ ໂດຍຖືເອົານິຕິກຳ ຂອງຂັ້ນເທິງວາງອອກເປັນບ່ອນອີງ ເປັນຕົ້ນແມ່ນຄຳສັ່ງ ຂອງກົມການເມືອງສູນກາງພັກ ສະບັບເລກທີ 04/ຄມສພ, ລົງວັນທີ 7 ພຶດສະພາ 2018 ກ່ຽວກັບການກະກຽມດຳເນີນກອງປະຊຸມໃຫຍ່ອົງຄະນະພັກກະຊວງ-ອົງການ, ແຂວງ-ນະຄອນຫຼວງ; ອົງຄະນະພັກເມືອງ ແລະ ຮາກຖານພັກໃນຂອບເຂດທົ່ວປະເທດ; ຄຳສັ່ງ ຂອງກົມການເມືອງສູນກາງພັກ ສະບັບເລກທີ 01/ກມສພ, ລົງວັນທີ 3 ມັງກອນ 2018 ວ່າດ້ວຍການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະ ຄຳແນະນຳ ຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 291/ຄຈສພ, ວັນທີ 26 ເມສາ 2018 ກ່ຽວກັບການຈັດຕັ້ງປະຕິບັດຄຳສັ່ງ ຂອງກົມການເມືອງ

ສູນກາງພັກ ວ່າດ້ວຍການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ເພື່ອເຮັດໃຫ້ບັນດານິຕິກຳດັ່ງກ່າວໄດ້ຮັບການຈັດຕັ້ງປະຕິບັດເຂົ້າສູ່ລວງເລິກ ຄະນະປະຈຳພັກເມືອງແບງ ໄດ້ອອກຄຳສັ່ງແນະນຳ ຂອງຕົນ ສະບັບເລກທີ 05/ຄປພມ ລົງວັນທີ 20 ສິງຫາ 2021 ວ່າດ້ວຍການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃນທົ່ວອົງຄະນະພັກເມືອງ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດແທດກັບສະພາບເງື່ອນໄຂຕົວຈິງ ສະແດງອອກໃນໄລຍະຜ່ານມາ ຄະນະບໍລິຫານງານພັກເມືອງແບງ ໄດ້ຫັນເອົາແນວທາງນະໂຍບາຍ, ມະຕິ, ຄຳສັ່ງ, ຂໍ້ກຳນົດຕ່າງໆ ຂອງພັກມາເປັນແຜນການ, ແຜນງານ ແລະ ໂຄງການອັນລະອຽດຂອງທ້ອງຖິ່ນຕົນ; ຖືເອົາການຍູ້ແຮງຂະບວນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຕິດພັນກັບຂະບວນການວຽກງານ 3 ສ້າງທັງເອົາໃຈໃສ່ນຳພາ-ຊີ້ນຳ ໃນການຈັດຕັ້ງປະຕິບັດຕົວຈິງຢູ່ຂັ້ນຮາກຖານໃນທົ່ວເມືອງໂດຍເລັ່ງໃສ່ປັບປຸງກໍ່ສ້າງພັກໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນ ສາມາດເຄື່ອນໄຫວນຳພາສອດຄ່ອງກັບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ແລະ ຮັບປະກັນໃຫ້ມີການຈັດຕັ້ງພັກນຳພາທຸກຂົງເຂດວຽກງານ.

ຈາກຄວາມເອົາໃຈໃສ່ນຳພາ-ຊີ້ນຳ ຂອງອົງຄະນະພັກເມືອງ, ອົງການເສນາທິການວຽກງານກໍ່ສ້າງພັກ-ພະນັກງານ ແລະ ປັບປຸງກົງຈັກການຈັດຕັ້ງ ຄະນະປະຈຳພັກເມືອງ ກໍ່ໄດ້ອອກມະຕິຕົກລົງແຕ່ງຕັ້ງຄະນະຮັບຜິດຊອບກວດກາ, ຕິດຕາມ ແລະ ປະເມີນຜົນການປັບປຸງ, ກໍ່ສ້າງພັກໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນ ຜ່ານການຈັດຕັ້ງປະຕິບັດຕົວຈິງ ສາມາດຕີລາຄາໄດ້ແຕ່ລະດ້ານດັ່ງນີ້:

ດ້ານການເມືອງ-ແນວຄິດ: ຄະນະພັກແຕ່ລະຂັ້ນໄດ້ເປັນເຈົ້າການນຳພາຈັດຕັ້ງປະຕິບັດມະຕິ, ຄຳສັ່ງ ຂອງພັກ-ລັດ ໄດ້ຈັດຕັ້ງເຊື່ອມຊຶມໃຫ້ແກ່ພະນັກງານ, ສະມາຊິກພັກທີ່ຢູ່ໃນຄວາມຮັບຜິດຊອບ ຂອງຕົນຢ່າງເປັນປົກກະຕິ, ພ້ອມທັງເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດເຮັດໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າ, ໄດ້ຮັບຮູ້, ເຂົ້າໃຈເປັນເອກະພາບຕໍ່ແນວທາງຂອງພັກ, ນະໂຍບາຍ, ລະບຽບກົດໝາຍ ຂອງລັດ; ການຈັດຕັ້ງຮາກຖານພັກ, ສະມາຊິກພັກມີການຂະຫຍາຍຕົວທາງດ້ານປະລິມານ ແລະ ຄຸນນະພາບ; ກົງຈັກການຈັດຕັ້ງໄດ້ຮັບການປັບປຸງດີຂຶ້ນເທື່ອລະກ້າວ; ຖັນແຖວສະມາຊິກພັກ, ພະນັກງານມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ຈຳແນກໄດ້ມິດ-ສັດຕູ; ຕ້ານການເສື່ອມຖອຍທາງດ້ານການເມືອງ, ທັດສະນະທີ່ຜິດເຂວ, ສໍ້ລາດບັງຫຼວງ; ຕັ້ງໜ້າຝຶກຝົນຫຼໍ່ຫຼອມຄຸນສົມບັດສິນທຳປະຕິວັດ, ມີແນວຄິດອຸ່ນອຽນທຸ່ນທ່ຽງ, ອົດທົນຜ່ານຜ່າຄວາມຫຍຸ້ງຍາກ, ເວົ້າລວມແລ້ວ ຄະນະພັກ, ສະມາຊິກພັກ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ສ່ວນຫຼາຍຍັງຮັກສາໄດ້ຄຸນທາດການເມືອງທີ່ໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ ແລະ ພ້ອມກັນຈັດຕັ້ງປະຕິບັດໜ້າທີ່ການເມືອງມີຜົນສຳເລັດເປັນຢ່າງດີ.

ດ້ານການຈັດຕັ້ງ: ຄະນະພັກກໍເປັນເຈົ້າການນຳພາ-ຊີ້ນຳ, ຄະນະໜ່ວຍພັກກໍໄດ້ຍົກສູງຄວາມຮັບຜິດຊອບ ຂອງຕົນ ເອົາໃຈໃສ່ປັບປຸງການຈັດຕັ້ງພັກ ຕິດພັນກັບການປັບປຸງກົງຈັກລັດໃຫ້ມີຄວາມສອດຄ່ອງ, ເຄື່ອນໄຫວມີປະສິດທິພາບ ແລະ ປະສິດທິຜົນ ບົນພື້ນຖານ ຕາມ 5 ຫຼັກການ, 3 ທິດນຳ ແລະ ກົດລະບຽບພັກເປັນບ່ອນອີງສຳຄັນຕົ້ນຕໍ ໄປພ້ອມກັບການຍົກສູງຄຸນນະພາບ ຂອງໜ່ວຍພັກ, ສະມາຊິກພັກ ໃຫ້ມີການຫັນປ່ຽນຢ່າງຕັ້ງໜ້າ ປະຈຸບັນທົ່ວເມືອງ ມີຄະນະພັກ-ສະມາຊິກພັກນຳພາແຕ່ຂັ້ນເມືອງຮອດຂັ້ນຮາກຖານບ້ານ; ມີການຈັດຕັ້ງຮາກຖານພັກ ທັງໝົດ 136 ຮາກຖານພັກ; ໃນນັ້ນມີ 10 ຄະນະພັກຮາກຖານ, ມີ 126 ໜ່ວຍພັກ

ທຽບໃສ່ປີຜ່ານມາເພີ່ມ 1 ໜ່ວຍພັກ; ມີໜ່ວຍພັກຮາກຖານທີ່ຂຶ້ນກັບອົງຄະນະພັກ 91 ໜ່ວຍພັກ, ໜ່ວຍພັກຂຶ້ນກັບຄະນະພັກຮາກຖານ 35 ໜ່ວຍພັກ (ມີໜ່ວຍພັກສຳນັກງານອົງການ 22 ໜ່ວຍພັກ, ໜ່ວຍພັກໂຮງຮຽນ 22 ໜ່ວຍພັກ, ໜ່ວຍພັກໂຮງໝໍ 1 ໜ່ວຍ, ໜ່ວຍພັກປກຊ-ປກສ 7 ໜ່ວຍພັກ ແລະ ໜ່ວຍພັກຮາກຖານບ້ານ 74 ໜ່ວຍພັກ); ມີຄະນະໜ່ວຍພັກ ທັງໝົດ 347 ສະຫາຍ, ຍິງ 24 ສະຫາຍ, ຂັ້ນຮາກຖານບ້ານ 210 ສະຫາຍ, ຍິງ 11 ສະຫາຍ.

ວຽກງານຂະຫຍາຍພັກ ແລະ ຄຸ້ມຄອງສະມາຊິກພັກ: ໃນການຂະຫຍາຍສະມາຊິກພັກແມ່ນໄດ້ຖືເອົາຄຸນນະພາບເປັນຫຼັກໂດຍອີງຕາມມາດຕະຖານ-ເງື່ອນໄຂ, ຖືກຕ້ອງຕາມບາດກ້າວ, ຂັ້ນຕອນທີ່ກຳນົດໄວ້ໃນກົດລະບຽບ ຂອງພັກ ແລະ ບົດແນະນຳສະບັບເລກທີ 201/ຄຈສພ. ພ້ອມນັ້ນ, ກໍ່ໄດ້ຕິດຕາມການຍົກຍ້າຍເຂົ້າ-ອອກ ຂອງສະມາຊິກພັກຖືກຕ້ອງຕາມລະບຽບການ; ສະເໜີໃຫ້ຄະນະໂຄສະນາອົບຮົມເມືອງເພື່ອຮຽນເປີດກວ້າງໃຫ້ມະຫາຊົນຜູ້ທີ່ມີຄວາມກ້າວໜ້າ ທັງໝົດ 148 ສະຫາຍ, ຍິງ 37 ສະຫາຍ; ເປີດຮຽນລະບຽບພັກໃຫ້ມະຫາຊົນກ້າວໜ້າ 78 ສະຫາຍ, ຍິງ 23 ສະຫາຍ; ຮັບມະຊົນເຂົ້າພັກໄດ້ 89 ສະຫາຍ, ຍິງ 30 ສະຫາຍ ທຽບໃສ່ແຜນປີ ບັນລຸ 89%; ປະຈຸບັນມີສະມາຊິກພັກ ທັງໝົດ 2.187 ສະຫາຍ, ຍິງ 423 ສະຫາຍ; ສະມາຊິກພັກສຳຮອງ 116 ສະຫາຍ, ຍິງ 29 ຍົກຍ້າຍ ເຂົ້າ 55 ສະຫາຍ; ຍົກຍ້າຍອອກ 60 ສະຫາຍ.

ດ້ານແບບແຜນນຳພາ ແລະ ແບບແຜນວິທີເຮັດວຽກ: ຄະນະພັກແຕ່ລະຂັ້ນໄດ້ເອົາໃຈໃສ່ປັບປຸງແບບແຜນການນຳພາ ແລະ ວິທີເຮັດວຽກ ຂອງຕົນ ເພື່ອຍົກສູງບົດບາດຄວາມສາມາດນຳພາ ຂອງພັກ ໂດຍຍຶດໝັ້ນ ແລະ ປະຕິບັດຫຼັກການລວມສູນປະຊາທິປະໄຕຢ່າງເຂັ້ມງວດ, ນຳພາເປັນໝູ່ຄະນະແບ່ງບຸກຄົນຮັບຜິດຊອບໃນການຊີ້ນຳ-ບັນຊາ ແລະ ຈັດຕັ້ງປະຕິບັດຢ່າງຈະແຈ້ງ, ຖືເອົາການດຳເນີນຊີວິດການເມືອງເປັນການປັບປຸງປົວແປງພັກຂັ້ນ ຂອງຕົນ, ການປັບປຸງແບບແຜນການນຳພາ ແລະ ວິທີເຮັດວຽກ; ມີການສະຫຼຸບຕີລາຄາຄືນການຈັດຕັ້ງປະຕິບັດວຽກງານ, ຖືເອົາການປະຕິບັດລະບອບປະຊຸມຄະນະພັກເປັນປົກກະຕິ, ເສີມຂະຫຍາຍປະຊາທິປະໄຕພາຍໃນພັກ ຖືເອົາການຕຳນິຕິຊົມຕົນເອງ, ຕິຊົມເຊິ່ງກັນ ແລະ ກັນເປັນບັນຫາສຳຄັນ ຮັບປະກັນ 3 ລັກສະນະການຮ່ວມຊີວິດພັກ ຜ່ານການຈັດຕັ້ງປະຕິບັດໄດ້ເຮັດໃຫ້ການຈັດຕັ້ງພັກ, ຄະນະພັກ, ສະມາຊິກພັກສາມາດເປັນແກນນຳທີ່ມີຄຸນນະພາບດີຂຶ້ນເທື່ອລະກ້າວ.

ດ້ານຄວາມຮັບຜິດຊອບໜ້າທີ່ການເມືອງ: ການຈັດຕັ້ງຮາກຖານພັກ ບໍ່ວ່າຢູ່ສຳນັກງານ-ອົງການ ກໍ່ຄືຮາກຖານພັກ ຍາມໃດກໍ່ຍົກສູງຄວາມຮັບຜິດຊອບ ຂອງຕົນ ໃນການປະຕິບັດໜ້າທີ່ການເມືອງ ເອົາໃຈໃສ່ນຳພາ-ຊີ້ນຳພະນັກງານ-ສະມາຊິກພັກ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຕັ້ງໜ້າປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມ ຂອງເມືອງ. ພະນັກງານ-ສະມາຊິກພັກ ແລະ ປະຊາຊົນໃຫ້ມີສະຕິລະວັງຕົວຕໍ່ກົນອຸບາຍມ້າງເພທຳລາຍ ຂອງສັດຕູ, ເປັນເຈົ້າການເຂົ້າຮ່ວມໃນການປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍພາຍໃນທ້ອງຖິ່ນເປັນຢ່າງດີ, ມີຫຼາຍໜ່ວຍພັກໄດ້ຮູ້ວາງແຜນການ ແລະ ສາມາດປະຕິບັດແຜນການທີ່ວາງອອກມີຜົນສຳເລັດ, ຫຼາຍໜ່ວຍພັກຮູ້ນຳພາປຸກລະດົມປະຊາຊົນໃນການຜະລິດເປັນສິນຄ້າ, ສ້າງລາຍຮັບໃຫ້ແກ່ຄອບຄົວເຮັດໃຫ້ຊີວິດການເປັນຢູ່ນັບມື້ດີຂຶ້ນ, ຕື່ນຕົວເປັນເຈົ້າການໃນການພັດທະນາວຽກງານສຶກສາ, ສາທາລະນະສຸກ, ນຳພາສ້າງບ້ານ ແລະຄອບຄົວວັດທະນະທຳ, ມີຫຼາຍບ້ານໄດ້ຮັບຮອງເປັນບ້ານວັດທະນະທຳ, ບ້ານປອດຄະດີ, ບ້ານແບບຢ່າງດ້ານສາທາລະນະສຸກ ແລະ ອື່ນໆ, ອັນສຳຄັນແມ່ນສາມາດລຶບລ້າງບ້ານຂາວໄດ້ 100%.

ຈາກຄວາມເອົາໃຈໃສ່ຢ່າງຕັ້ງໜ້າ ຂອງຄະນະບໍລິຫານງານພັກເມືອງ ໃນການຊຸກຍູ້, ນໍາພາ-ຊີ້ນໍາຈັດຕັ້ງປະຕິບັດ ບວກກັບຄວາມເປັນເຈົ້າການ ຂອງບັນດາໜ່ວຍພັກ ໃນການກໍ່ສ້າງ ແລະ ປັບປຸງຕົນເອງ ຜ່ານການຕິດຕາມ, ກວດກາ, ປະເມີນຜົນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປີ 2022 ມີໜ່ວຍພັກທີ່ຖືກຮັບຮອງເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຈໍານວນ 95 ໜ່ວຍພັກ ກວມ 75% ຂອງໜ່ວຍພັກທັງໝົດ; ຕີລາຄາ, ຈັດແບ່ງປະເພດສະມາຊິກພັກປະຈໍາປີ 2022 ສະມາຊິກພັກແຂງ 1.967 ສະຫາຍ, ຍິງ 369 ສະຫາຍ, ກາງ 200 ສະຫາຍ, ຍິງ 49 ສະຫາຍ, ບໍ່ໄດ້ຈັດປະເພດ 20 ສະຫາຍ, ຍິງ 5 ສະຫາຍ.

ຈາກຜົນສໍາເລັດທີ່ກ່າວມາຂ້າງເທິງນັ້ນ, ຖ້າທຽບໃສ່ຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ການເມືອງໃນສະເພາະໜ້າ ແລະ ຍາວນານນັ້ນ ເຫັນວ່າວຽກງານປັບປຸງການຈັດຕັ້ງຮາກຖານພັກ ຢູ່ເມືອງແບງ ແຂວງອຸດົມໄຊ ຍັງມີບາງຂໍ້ຄົງຄ້າງຈໍານວນໜຶ່ງ ທີ່ຈະຕ້ອງໄດ້ສືບຕໍ່ປັບປຸງ ແລະ ແກ້ໄຂໃນຕໍ່ໜ້າ ເປັນຕົ້ນ:

1. ຄະນະພັກ, ອົງການເສນາທິການທີ່ເຮັດວຽກງານກໍ່ສ້າງພັກ ຍັງບໍ່ທັນເອົາໃຈໃສ່ຊຸກຍູ້ຕິດຕາມວຽກງານກໍ່ສ້າງພັກ ບໍ່ທັນເປັນປົກກະຕິ ແລະ ຕໍ່ເນື່ອງ ຈຶ່ງເຮັດໃຫ້ຄາດໝາຍບໍ່ສາມາດບັນລຸໄດ້ຕາມແຜນການທີ່ກໍານົດໄວ້; ຜ່ານມາ ຍັງສັງເກດເຫັນໄດ້ວ່າດ້ານຄຸນນະພາບຂອງການຈັດຕັ້ງຮາກຖານພັກບາງບ່ອນ, ບາງຮາກຖານຍັງບໍ່ທັນໜັກແໜ້ນ, ເຂັ້ມແຂງ, ແບບແຜນໃນການນໍາພາ-ຊີ້ນໍາ ຂອງໜ່ວຍພັກບ້ານຈໍານວນໜຶ່ງຍັງບໍ່ທັນມີການຫັນປ່ຽນທີ່ຕັ້ງໜ້າ, ບໍ່ທັນເປັນເຈົ້າການເຄື່ອນໄຫວວຽກງານຕາມພາລະບົດບາດ, ໜ້າທີ່ ຂອງຕົນ, ບໍ່ຮູ້ວາງແຜນການ, ແບ່ງງານໃຫ້ສະມາຊິກພັກຢ່າງລະອຽດ, ຈະແຈ້ງ.

2. ບາງໜ່ວຍພັກ ການຄົ້ນຄວ້າເຊື່ອມຊຶມ ແລະ ປະຕິບັດນິຕິກໍາ ກ່ຽວກັບວຽກງານກໍ່ສ້າງພັກຍັງບໍ່ທັນຮັບຮູ້ເຂົ້າໃຈຢ່າງເລິກເຊິ່ງ ເປັນຕົ້ນກົດລະບຽບພັກ, ຄໍາສັ່ງ ຂອງກົມການເມືອງສູນກາງພັກ ສະບັບເລກທີ 01/ກມສພ, ລົງວັນທີ 03 ມັງກອນ 2018 ວ່າດ້ວຍການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະ ຄໍາແນະນໍາ ຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 291/ຄຈສພ, ວັນທີ 26 ເມສາ 2018 ກ່ຽວກັບການຈັດຕັ້ງປະຕິບັດຄໍາສັ່ງ ຂອງກົມການເມືອງສູນກາງພັກ ວ່າດ້ວຍການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຈຶ່ງເຮັດໃຫ້ການສ້າງແຜນ ແລະ ການປະຕິບັດແຜນການບໍ່ໄປຕາມທິດທີ່ກໍານົດໄວ້.

3. ລະດັບຄວາມຮູ້, ຄວາມສາມາດໃນການນໍາພາຂອງຄະນະພັກ, ສະມາຊິກພັກບາງໜ່ວຍຍັງຈໍາກັດ, ການປະຕິບັດລະບອບການຮ່ວມຊີວິດພັກ, ລະບອບການສ່ອງແສງລາຍງານຍັງບໍ່ທັນເປັນປົກກະຕິ, ເນື້ອໃນການຮ່ວມຊີວິດພັກຍັງບໍ່ທັນເລິກເຊິ່ງແທດເຖິງ, ການຕໍານິສິ່ງຂ່າວຊ່ວຍເຫຼືອເຊິ່ງກັນ ແລະ ກັນບໍ່ທັນແຂງແຮງ; ຄະນະພັກ ແລະ ສະມາຊິກພັກຈໍານວນໜຶ່ງບໍ່ທັນໄດ້ເອົາໃຈໃສ່ຕໍ່ການສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນຢ່າງຕັ້ງໜ້າ, ບາງບ່ອນມີແຜນການແລ້ວແຕ່ຂາດການນໍາພາ-ຊີ້ນໍາຕົວຈິງບໍ່ທັນເປັນປົກກະຕິ, ມີບາງໜ່ວຍພັກໄດ້ຮັບຮອງເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລ້ວພັດບໍ່ເອົາໃຈໃສ່ປັບປຸງໃຫ້ດີຂຶ້ນ ແລະ ບໍ່ສາມາດຮັກສາໄດ້ລຽນຕິດຕໍ່ເນື່ອງ.

ເພື່ອສືບຕໍ່ປັບປຸງ, ກໍ່ສ້າງການຈັດຕັ້ງຮາກຖານພັກ ຢູ່ເມືອງແບງ ແຂວງອຸດົມໄຊ ໃຫ້ມີຄວາມປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ ກາຍເປັນກໍາລັງແຮງທີ່ສໍາຄັນ ຢູ່ຂັ້ນຮາກຖານໃນຕໍ່ໜ້າ ຄະນະພັກແຕ່ລະຂັ້ນ, ອົງການເສນາທິການທີ່ເຮັດວຽກງານກໍ່ສ້າງພັກ ຕ້ອງເອົາໃຈໃສ່ນໍາພາ-ຊີ້ນໍາຈັດຕັ້ງປະຕິບັດບາງເນື້ອໃນດັ່ງນີ້:

ໜຶ່ງ, ຄະນະພັກແຕ່ລະຂັ້ນ ຕ້ອງເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດໃຫ້ຖັນແຖວພະນັກ

ງານ, ສະມາຊິກພັກ, ປະຊາຊົນບັນດາເຜົ່າ ຢ່າງກ້ວາງຂວາງ ທົ່ວເຖິງ ແລະ ມີຫຼາຍຮູບແບບ, ຫຼາຍວິທີການທີ່ແທດເຖິງເປັນຕົ້ນ: ຈັດຕັ້ງການເຊື່ອມຊຶມບັນດາມະຕິ, ຄຳສັ່ງ, ເອກະສານທີ່ສຳຄັນ ຂອງພັກ-ລັດ ໂດຍສະເພາະແມ່ນຈັດຕັ້ງເຜີຍແຜ່ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ກົດລະບຽບພັກສະໄໝທີ XI, ເນື້ອໃນກອງປະຊຸມວຽກງານຈັດຕັ້ງທົ່ວປະເທດ ຄັ້ງທີ XI, ມະຕິກອງປະຊຸມໃຫຍ່ ຄັ້ງທີ IX ຂອງອົງຄະນະພັກແຂວງອຸດົມໄຊ ແລະ ມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງອົງຄະນະພັກເມືອງແບງ ໃຫ້ຖັນແຖວພະນັກງານ, ສະມາຊິກພັກ ແລະ ປະຊາຊົນບັນດາເຜົ່າ ແນໃສ່ເຮັດເຂົາເຈົ້າມີຄວາມຮັບຮູ້-ເຂົ້າໃຈຕໍ່ແນວທາງນະໂຍບາຍ ຂອງພັກ, ລະບຽບກົດໝາຍ ຂອງລັດ, ມູນເຊື້ອອັນດີງາມ ຂອງພັກ ແລະ ຂອງຊາດ ເປັນເຈົ້າການປະກອບສ່ວນຢ່າງຕັ້ງໜ້າໃນວຽກງານກໍ່ສ້າງພັກແຕ່ລະຂັ້ນ.

ສອງ, ຄະນະພັກ, ອົງການເສນາທິການທີ່ເຮັດວຽກງານກໍ່ສ້າງພັກ ຕ້ອງເພີ່ມທະວີເອົາໃຈໃສ່ຕິດຕາມ, ຊຸກຍູ້ ຕອບສະໜອງຂໍ້ມູນທີ່ຈຳເປັນໃຫ້ແກ່ການຈັດຕັ້ງຮາກຖານພັກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດ ພ້ອມກັນນັ້ນ, ກໍ່ຕ້ອງເຄື່ອນໄຫວລົງຕິດແທດຕົວຈິງ, ກຳແໜ້ນສະພາບຈຸດພິເສດ ຂອງແຕ່ລະໜ່ວຍພັກ ເພື່ອຂຶ້ນແຜນປັບປຸງ, ກໍ່ສ້າງໃຫ້ສອດຄ່ອງກັບທ່າແຮງ ແລະ ເງື່ອນໄຂຕົວຈິງ ຂອງໜ່ວຍພັກ.

ສາມ, ຄະນະໜ່ວຍພັກ, ສະມາຊິກພັກ ຕ້ອງສືບຕໍ່ຈັດຕັ້ງຄົ້ນຄວ້າເຊື່ອມຊຶມ, ກຳແໜ້ນພາລະບົດບາດ, ໜ້າທີ່ ຂອງໜ່ວຍພັກທີ່ໄດ້ກຳນົດໄວ້ ຢູ່ໃນກົດລະບຽບພັກ, ຍົກສູງຄວາມຮັບຜິດຊອບການເມືອງຂອງຕົນ ກ່ຽວກັບການປັບປຸງ, ກໍ່ສ້າງຮາກຖານພັກໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ; ກຳແໜ້ນບັນດາເງື່ອນໄຂຈຸດພິເສດຮາກຖານແຕ່ລະບ່ອນເພື່ອວາງທິດທາງ, ແຜນການກໍ່ສ້າງປັບປຸງໜ່ວຍພັກ ໃຫ້ສອດຄ່ອງກັບຈຸດພິເສດ ແລະ ໜ້າທີ່ການເມືອງ ຂອງໜ່ວຍພັກ ທັງກຳນົດຕົວເລກຄາດໝາຍສູ້ຊົນໃນແຕ່ລະດ້ານໃຫ້ຈະແຈ້ງ, ຖືກຕ້ອງກັບສະພາບຄວາມເປັນຈິງ ແລະ ຈັດຕັ້ງນຳພາຢ່າງເຂັ້ມງວດ.

ສີ່, ສືບຕໍ່ປັບປຸງແຜນນຳພາ ຂອງຄະນະພັກຮາກຖານບ້ານໃຫຍ່ ແລະ ໜ່ວຍພັກບ້ານ, ປັບປຸງລະບອບປະຊຸມ ແລະ ການດຳເນີນຊີວິດການເມືອງ ພາຍໃນຮາກຖານພັກໃຫ້ເປັນປົກກະຕິ, ໃນນີ້ຕ້ອງເອົາໃຈໃສ່ຊ່ວຍເຫຼືອກໍ່ສ້າງເຊິ່ງກັນ ແລະ ກັນ, ຕິຊົມຕົນເອງ ແລະ ຕິຊົມເຊິ່ງກັນ ແລະ ກັນ ດ້ວຍຄວາມຈິງໃຈເພື່ອເຮັດໃຫ້ພາຍໃນພັກກໍ່ຄືໃນຖັນແຖວສະມາຊິກພັກມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ, ຕ້ານແນວຄິດຈິ່ງຈຽມ, ເດັດດ່ຽວປົກປ້ອງອັນຖືກ ແລະ ກ້າຫານຕຳນິວິຈານອັນຜິດ ບົນພື້ນຖານຍຶດໝັ້ນຜົນປະໂຫຍດລວມ ຂອງພັກ, ຂອງຊາດ ແລະ ຂອງປະຊາຊົນເປັນຫຼັກ.

ສັງລວມແລ້ວ, ການປັບປຸງ, ກໍ່ສ້າງຮາກຖານພັກແມ່ນການຍົກສູງຄຸນນະພາບການຈັດຕັ້ງພັກ ແລະ ຍົກສູງລະດັບຄວາມຮູ້, ຄວາມສາມາດນຳພາ, ສະຕິເຄົາລົບ ແລະ ປະຕິບັດກົດລະບຽບພັກ, ກົດໝາຍ ຂອງລັດ ທັງເປັນການປັບປຸງຄວາມສາມັກຄີເປັນເອກະພາບພາຍໃນພັກ ແລະ ຄວາມເປັນແບບຢ່າງນຳໜ້າ ຂອງສະມາຊິກພັກກາຍເປັນແກນນຳທີ່ມີຄວາມປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ ທັງໝົດນັ້ນແມ່ນໜ້າທີ່ຄວາມຮັບຜິດຊອບຂອງຄະນະບໍລິຫານງານພັກເມືອງ ກໍ່ຄືອົງການເສນາທິການທີ່ເຮັດວຽກງານກໍ່ສ້າງພັກ ຕ້ອງເອົາໃຈໃສ່ຊຸກຍູ້, ນຳພາ-ຊີ້ນຳຢ່າງໃກ້ຊິດຕິດແທດ ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງຮາກຖານພັກ ເລີ່ມແຕ່ຂອດວາງແຜນຕະຫຼອດເຖິງຂອດນຳພາຈັດຕັ້ງປະຕິບັດຕົວຈິງ, ມີການກວດກາ, ສະຫຼຸບຕີລາຄາ ແລະ ວາງທິດທາງ, ແຜນການກ່ຽວກັບວຽກງານດັ່ງກ່າວເປັນປົກກະຕິ ຮັບປະກັນໃຫ້ການຈັດຕັ້ງຮາກຖານພັກທົ່ວເມືອງແບງ ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ...ຯ

ຍົກສູງບົດບາດວຽກງານກາແດງ ຢູ່ແຂວງບໍລິຄໍາໄຊ

ໂດຍ: ສີສຸພັນ ວົງວິໄລ

ອົງການກາແດງແມ່ນການຈັດຕັ້ງທາງສັງຄົມ ຂອງ ສປປ ລາວ ທີ່ເຄື່ອນໄຫວວຽກງານມະນຸດສະທໍາ ຢ່າງເປັນເອກະລາດຢູ່ໃຕ້ລັດຖະທໍາມະນູນ, ກົດໝາຍ ແລະ 07 ຫຼັກການຂອງກາແດງ ແລະ ຊີກວົງເດືອນສາກົນ; ມີພາລະບົດບາດໃນການຈັດຕັ້ງປະຕິບັດວຽກງານກາແດງ ດ້ວຍການຮ່ວມມືຈາກອົງການປະສານສົມທົບວຽກງານກາແດງ ເພື່ອສ້າງ ແລະ ສົ່ງເສີມຄຸນຄ່າດ້ານມະນຸດສະທໍາ ໂດຍບໍ່ຈໍາແນກການປະຕິບັດ; ປະຕິບັດສິດ ແລະ ໜ້າທີ່ຂອງຕົນໃນການຈັດຕັ້ງປະຕິບັດວຽກງານກາແດງ ແລະ ວຽກງານມະນຸດສະທໍາ ເວົ້າລວມ, ເວົ້າສະເພາະອົງການກາແດງແຂວງ ມີພາລະບົດບາດ ເປັນເສນາທິການໃຫ້ແກ່ເຈົ້າແຂວງ ແລະ ປະທານອົງການກາແດງແຫ່ງຊາດລາວ, ໃນການຊ່ວຍເຫຼືອດ້ານມະນຸດສະທໍາ ທີ່ມີການເຂົ້າຮ່ວມຂອງສັງຄົມເຊັ່ນ: ການຊ່ວຍເຫຼືອບັນເທົາທຸກເບື້ອງຕົ້ນ, ການປຸກລະດົມຂົນຂວາຍການບໍລິຈາກເລືອດ ແລະ ສະໜອງເລືອດປອດໄພ, ການສົ່ງເສີມສຸຂະພາບຂັ້ນພື້ນຖານ, ປະຖົມພະຍາບານ, ການກູ້ໄພສຸກເສີນ, ໂຄສະນາຂົນຂວາຍຫາແຫຼ່ງທຶນ, ການສ້າງສະມາຊິກ ແລະ ອາສາສະໝັກກາແດງ, ສືບຫາວຫາຍາດພີ່ນ້ອງ ແລະ ການພົວພັນ-ຮ່ວມມືສາກົນ ດ້ວຍການຮ່ວມມືຈາກອົງການປະສານສົມທົບວຽກງານກາແດງ ເພື່ອສ້າງ ແລະ ສົ່ງເສີມຄຸນຄ່າດ້ານມະນຸດສະທໍາ ໂດຍບໍ່ຈໍາແນກການປະຕິບັດ.

ອົງການກາແດງແຂວງແມ່ນການຈັດຕັ້ງທາງສັງຄົມ ທີ່ເຄື່ອນໄຫວວຽກງານມນຸດສະທໍາ ຢ່າງເປັນເອກະລາດ ຢູ່ພາຍໃຕ້ລັດຖະທໍາມະນູນ, ກົດໝາຍ ແລະ 07 ຫຼັກການພື້ນຖານຂອງຂະບວນການກາແດງ ໂດຍມີທ່ານເຈົ້າແຂວງເປັນປະທານກິດຕິມະສັກ, ມີຖານະເທົ່າກັບພະແນກ, ອົງການຈັດຕັ້ງຂອງລັດ ແລະ ອົງການຈັດຕັ້ງສັງຄົມອື່ນຂອງແຂວງ, ຕາມການຕົກລົງຂອງທ່ານເຈົ້າແຂວງ, ໂດຍການເຫັນດີຂອງອົງການກາແດງແຫ່ງຊາດລາວ. ໂດຍມີກົງຈັກຊ່ວຍວຽກ 4 ຂະແໜງການຄື: ຂະແໜງບໍລິຫານ-ຈັດຕັ້ງ-ການເງິນ, ຂະແໜງສູນເລືອດ, ຂະແໜງບັນເທົາທຸກ-ຂົນຂວາຍແຫຼ່ງທຶນ ແລະ ຂະແໜງສົ່ງເສີມສຸຂະພາບຊຸມຊົນ, ມີພະນັກງານ-ລັດຖະກອນທັງໝົດ 16 ທ່ານ, ຍິງ 08 ທ່ານ, ໄປຮຽນຍົກລະດັບການເມືອງ-ການປົກຄອງປະລິນຍາໂທ 01 ທ່ານ, ການແພດວິເຄາະ ປຕ 01 ທ່ານ; ປະຈໍາການຕົວຈິງ 14 ທ່ານ, ຍິງ 08ທ່ານ; ມີອາສາສະໝັກ 05 ທ່ານ, ຍິງ 04 ທ່ານ; ຈົບວິຊາສະເພາະຊັ້ນປະລິນຍາໂທ 01 ທ່ານ, ປະລິນຍາຕີ 06 ທ່ານ, ຍິງ 02 ທ່ານ; ຊັ້ນສູງ 05 ທ່ານ, ຍິງ 04 ທ່ານ; ຊັ້ນກາງ

03 ທ່ານ, ຍິງ 01 ທ່ານ; ຊັ້ນຕົ້ນ 01 ທ່ານ, ຍິງ 01 ທ່ານ; ຈົບທິດສະດີການເມືອງຂັ້ນສູງ 02 ທ່ານ; ຂັ້ນກາງ 03 ທ່ານ, ຍິງ 02 ທ່ານ; ລະບົບ 45 ວັນ 05 ທ່ານ, ຍິງ 03 ທ່ານ; ໄດ້ປັບປຸງ ແລະ ປະກາດການຈັດຕັ້ງຫ້ອງການກາແດງເມືອງ ໄດ້ 02 ເມືອງຄື: ເມືອງວຽງທອງ ແລະ ປາກກະດິງ;

ໄລຍະຜ່ານມາອົງການກາແດງແຂວງບໍລິຄຳໄຊ ໄດ້ຈັດຕັ້ງການເຄື່ອນໄຫວວຽກງານຂອງຕົນຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ໄດ້ເຮັດໃຫ້ອົງການມີຜົນສຳເລັດໃນແຕ່ລະດ້ານ, ແຕ່ເມື່ອທຽບໃສ່ກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານໃນໄລຍະໃໝ່ ຍັງບໍ່ທັນຕອບສະໜອງໄດ້ໜ້າທີ່ວຽກງານອັນຈຳເປັນ ແລະ ແກ້ໄຂບັນຫາອັນຮີບດ່ວນທີ່ເກີດຂຶ້ນ ແລະ ແກ້ໄຂໄດ້ຢ່າງທັນການ ຍ້ອນມີຫຼາຍເງື່ອນໄຂທີ່ກະທົບໃສ່ທາງດ້ານທາງກົງ ແລະ ທາງອ້ອມ ເຮັດໃຫ້ການເຄື່ອນໄຫວວຽກງານກາແດງມີຫຼາຍດ້ານພົບກັບຄວາມຫຍຸ້ງຍາກໂດຍສະເພາະຂອດຂອງການບໍລິຫານ, ການເຄື່ອນໄຫວດ້ານວິຊາການ ແລະ ອື່ນໆ ສະແດງອອກແຕ່ລະໜ້າວຽກດັ່ງນີ້:

ວຽກງານຊ່ວຍເຫຼືອບັນເທົາທຸກເບື້ອງຕົ້ນ: ໃນປີ 2022 ອົງການກາແດງ ແຂວງບໍລິຄຳໄຊ ໄດ້ຊ່ວຍເຫຼືອບັນເທົາທຸກປະຊາຊົນທີ່ຖືກເຄາະຮ້າຍຈາກອັກຄີໄພ (ໄຟໄໝ້ເຮືອນ) ຈຳນວນ 14 ຄອບຄົວ 11 ບ້ານ, 6 ເມືອງ: ເມືອງປາກຊັນ, ເມືອງທ່າພະບາດ, ເມືອງບໍລິຄັນ, ເມືອງຄຳເກີດ, ເມືອງວຽງທອງ ແລະ ເມືອງຈຳພອນ ມູນຄ່າການຊ່ວຍເຫຼືອ 42.397.000 ກີບ, ມອບເງິນບັນເທົາທຸກໃຫ້ແກ່ຄອບຄົວຜູ້ທຸກຍາກອານາຖາຈຳນວນ 172 ຄອບຄົວ ຢູ່ໃນ 18 ບ້ານ, 4 ເມືອງຄື: ເມືອງບໍລິຄັນ, ເມືອງທ່າພະບາດ, ເມືອງຄຳເກີດ ແລະ ເມືອງວຽງທອງ ມູນຄ່າ 127.630; ມອບເຄື່ອງຊ່ວຍເຫຼືອບັນເທົາທຸກໃຫ້ນັກຮຽນອານາຖາຢູ່ໂຮງຮຽນຊົນເຜົ່າ ເມືອງຄຳເກີດ ມູນຄ່າ 8.900.000 ກີບ;

ວຽກງານປຸກລະດົມຂົນຂວາຍບໍລິຈາກເລືອດ ແລະ ການສະໜອງເລືອດປອດໄພ: ອົງການກາແດງແຂວງບໍລິຄຳໄຊ ໄດ້ເອົາໃຈໃສ່ວຽກງານລະດົມເລືອດໃນສູນ ແລະ ນອກສູນ ໃນປີຜ່ານມາໃນຂົງເຂດສຶກສາຢູ່ເມືອງປາກຊັນມີ 7 ໂຮງຮຽນ ໄດ້ 250ຖົງ, ທ່າພະບາດມີ 4 ໂຮງຮຽນໄດ້ 127 ຖົງ, ບໍລິຄັນ ມີ 8 ໂຮງຮຽນ ໄດ້ 310 ຖົງ, ປາກກະດິງ ມີ 4 ໂຮງຮຽນ ໄດ້ 269 ຖົງ, ເມືອງຄຳເກີດ ມີ 8 ໂຮງຮຽນ ໄດ້ 209ຖົງ, ວຽງທອງມີ 3 ໂຮງຮຽນ ໄດ້ 124 ຖົງ ແລະ ເມືອງໄຊຈຳພອນ ມີ 3 ໂຮງຮຽນ ໄດ້ 54 ຖົງ; ວິທະຍາໄລເອກະຊົນ 2 ແຫ່ງໄດ້ 23 ຖົງ; ພາກສ່ວນຫ້ອງວ່າການປົກຄອງເມືອງ 7 ເມືອງໄດ້ 140 ຖົງ ແລະ ພາກສ່ວນກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນກະຊວງໄດ້ 1.025 ຖົງ ແລະ ບັນດາພະແນກການຂອງແຂວງໄດ້ 166 ຖົງ. ພ້ອມດຽວກັນນັ້ນ ກໍ່ໄດ້ສະໜອງເລືອດໃຫ້ແກ່ພາກສ່ວນຕ່າງໆຄື: ໂຮງໝໍແຂວງບໍລິຄຳໄຊ 1.509 ຖົງ, ໂຮງໝໍເມືອງຄຳເກີດ 227 ຖົງ, ໂຮງໝໍເມືອງວຽງທອງ 143 ຖົງ, ສູນເລືອດແຫ່ງຊາດ 773 ຖົງ, ສູນເລືອດແຂວງຄຳມ່ວນ 14 ຖົງ, ສູນເລືອດແຂວງຊຽງຂວາງ 11 ຖົງ, ສູນເລືອດແຂວງສະຫວັນນະເຂດ 2 ຖົງ, ສູນເລືອດແຂວງຈຳປາສັກ 6 ຖົງໃນນັ້ນ, ນະໂຍບາຍລ້າ 7 ຖົງ ແລະ ນະໂຍບາຍໃຫ້ຜູ້ບໍລິຈາກເລືອດ 21 ຖົງ.

ວຽກງານການສົ່ງເສີມສຸຂະພາບຂັ້ນພື້ນຖານ: ອົງການກາແດງແຂວງບໍລິຄຳໄຊ ໄດ້ເອົາໃຈໃສ່ຕໍ່ກັບການສົ່ງເສີມສຸຂະພາບຂັ້ນພື້ນຖານ ໂດຍເຮັດໃຫ້ປະຊາຊົນ ໄດ້ກິນສະອາດ, ຢູ່ສະອາດ, ນຸ່ງຖືສະອາດ. ໃນນັ້ນ; ໄດ້ໂຄສະນາສຸຂະສຶກສາການນຳໃຊ້ໃຫ້ຕອງຊີວະພາບ

ໃຫ້ແກ່ປະຊາຊົນ ບັນດາບ້ານທີ່ມີເງື່ອນໄຂໃນການນຳໃຊ້ຢູ່ເມືອງປາກຊັນ ມີຜູ້ເຂົ້າຮ່ວມທັງໝົດ 207 ຄົນ, ຍິງ 122 ຄົນ. ສະໜອງໃຫ້ຕອງຊີວະພາບໃຫ້ແກ່ກອງພັນ 642 ຈຳນວນ 8 ໜ່ວຍມູນຄ່າ 2.240.000 ກີບ, ໂຮງຮຽນຊົນເຜົ່າຫຼັກ 20 ເມືອງຄຳເກີດ 2 ໜ່ວຍ ມູນຄ່າ 1.100.000 ກີບ, ລວມມູນຄ່າການຊ່ວຍເຫຼືອ 3.340.000 ກີບ; ໄດ້ປະຕິບັດໂຄງການຕ້ານເອດສ໌ຄື: ໂຄງການຕ້ານ HIV / APD ແລະ ສ້າງກອງທຶນສະຫວັດດີການຮ່ວມກັບທ່ານໝໍຜູ້ດູແລຮັກສາກວດເຊັກສຸຂະພາບ ຜູ້ຕິດເຊື້ອໃຫ້ກຳລັງໃຈ, ຊ່ວຍເຫຼືອແນະນຳການກິນຢາ, ການພັກຜ່ອນ, ການອອກກຳລັງກາຍ.

ລົງໂຄສະນາສຸຂະສຶກສາພະຍາດໂຄວິດ-19, ໂລກເອສ, ພະຍາດ ພຕພ, ວັນນະໂລກ ແລະ ພະຍາດໄຂ້ມາເລເລຍໄດ້ 05 ຄັ້ງ, ຢູ່ 5 ເມືອງຄື: ເມືອງປາກຊັນໄດ້ 10 ບ້ານ, ເມືອງປາກກະດິງໄດ້ 08 ບ້ານ, ເມືອງບໍລິຄັນ ໄດ້ 08 ບ້ານ, ເມືອງຄຳເກີດ ໄດ້ 10 ບ້ານ ແລະ ເມືອງວຽງທອງ ໄດ້ 10 ບ້ານ; ເປີດກອງປະຊຸມຝຶກອົບຮົມວຽກປ້ອງກັນພະຍາດໂຄວິດ-19, ໂລກເອສ, ພະຍາດ ພຕພ, ວັນນະໂລກ ແລະ ພະຍາດໄຂ້ມາເລເລຍ ໃຫ້ແກ່ພະນັກງານ ແລະ ອາສາສະໝັກກາແດງ ແຂວງບໍລິຄຳໄຊ ມີຜູ້ເຂົ້າຮ່ວມທັງໝົດ 21 ທ່ານ, ຍິງ 08 ທ່ານ; ຈັດຝຶກອົບຮົມກ່ຽວກັບວຽກງານນໍ້າ, ສຸຂະພິບານ ແລະ ສຸຂະອະນາໄມ ໃນພາວະສຸກເສີນໃຫ້ແກ່ພະນັກງານ ແລະ ອາສາສະໝັກກາແດງ ຈຳນວນ 01 ຄັ້ງ, ມີຜູ້ເຂົ້າຮ່ວມທັງໝົດ 36 ທ່ານ, ຍິງ 10 ທ່ານ; ຮັບເຄື່ອງບຳບັດນໍ້າເສຍ ຈຳນວນ 01 ເຄື່ອງ;

ວຽກງານປະຖົມພະຍາບານ ແລະ ກູ້ໄພສຸກເສີນ: ໄດ້ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍວຽກງານປະຖົມພະຍາບານຢ່າງກວ້າງຂວາງ, ເສີມສ້າງຂີດຄວາມສາມາດໃຫ້ແກ່ພະນັກງານ, ອາສາສະໝັກກາແດງ ແລະ ປະຊາຊົນບັນດາເຜົ່າ ໄດ້ຊ່ວຍເຫຼືອຜູ້ທີ່ໄດ້ຮັບບາດເຈັບໄດ້ຢ່າງຖືກວິທີ, ຖືກຕ້ອງທັນການ ມີການຈັດຕັ້ງຝຶກອົບຮົມຝຶກອົບຮົມຄວາມຮູ້ກ່ຽວກັບການປະຖົມພະຍາບານຂັ້ນພື້ນຖານໃຫ້ແກ່ພະນັກງານຕຳຫຼວດຈາລະຈອນ, ຕຳຫຼວດຄຸ້ມຂັງດັດສ້າງ ຢູ່ກອງບັນຊາການ ປກສ ແຂວງ ແລະ ໂຮງຮຽນ 03 ໂຮງຮຽນຄື: ມສ ປາກຊັນ, ມສ ໜອງບົວ ແລະ ມສ ສີຫານາໄຊໄດ້ 05 ຄັ້ງ, ມີຜູ້ເຂົ້າຮ່ວມທັງໝົດ 125 ຄົນ, ຍິງ 73 ຄົນ; ພ້ອມກັນນັ້ນ ໄດ້ສ້າງຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການສ້າງຕັ້ງໜ່ວຍກູ້ໄພສຸກເສີນ ອົງການກາແດງແຂວງ ໄດ້ສຳເລັດ. ໄດ້ໄປຖອດຖອນບົດຮຽນກ່ຽວກັບວຽກງານກູ້ໄພສຸກເສີນ ຮ່ວມກັບອົງການກາແດງແຂວງຫຼວງພະບາງ ເພື່ອກະກຽມສ້າງຕັ້ງໜ່ວຍກູ້ໄພສຸກເສີນ ອົງການກາແດງແຂວງ (ໝາຍເລກໂທລະສັບ 054 1625).

ວຽກງານການໂຄສະນາຂົນຂວາຍແຫຼ່ງທຶນ: ອົງການກາແດງແຂວງບໍລິຄຳໄຊ ໄດ້ຖືເອົາວຽກງານປຸກລະດົມຂົນຂວາຍເປັນເປັນປົກກະຕິ, ຕໍ່ເນື່ອງ ເພາະມັນແມ່ນວຽກງານທີ່ສຳຄັນ ແລະ ຈຳເປັນທີ່ສຸດ, ດ້ວຍການອອກແຈ້ງການກຸສົນໃຫ້ພາກສ່ວນຕ່າງໆ ແລະ ສິ່ງພິມຈຳໜ່າຍ ເປັນເສື້ອການກຸສົນໄດ້ 2.132 ຜືນ, ສົ່ງໃຫ້ພາກສ່ວນຕ່າງໆ 2.125 ຜືນ, ຈຳໜ່າຍໄດ້ມູນຄ່າ 106.250.000 ກີບ, ຫັກຄ່າໃຊ້ຈ່າຍຕ່າງໆ 71.346.000 ກີບ, ເຫຼືອເຂົ້າໃນກອງທຶນເລືອດຈຳນວນ 34.904.000 ກີບ.

ວຽກງານການສ້າງສະມາຊິກ ແລະ ອາສາສະໝັກກາແດງ: ໄດ້ເອົາໃຈໃສ່ຕໍ່ກັບວຽກງານປຸກລະດົມຂົນຂວາຍ, ສ້າງສະມາຊິກ ແລະ ອາສາສະໝັກອົງການກາແດງ ເພື່ອເສີມສ້າງ ແລະ ເພີ່ມກຳລັງແຮງໃຫ້ແກ່ການເຄື່ອນໄຫວວຽກງານອົງການກາແດງຢູ່ໃນແຕ່ລະຂົງເຂດ ຈຳນວນ 21 ຄົນ, ຍິງ 7 ຄົນ.

ວຽກງານການສືບຫາວຫາຍາດພີ່ນ້ອງ: ໄດ້ທ່ວງຫາວຫາຍາດພີ່ນ້ອງຢູ່ພາຍໃນແຂວງ ຈຳນວນ 4 ເຫດການ, ສ່ວນຫຼາຍແມ່ນການໄປຫາຊອກວຽກງານເຮັດງານທຳຢູ່ບ່ອນອື່ນ ໂດຍບໍ່ໄດ້ແຈ້ງໃຫ້ພໍ່ແມ່ ແລະ ຍາດພີ່ນ້ອງທາງບ້ານຮັບຊາບ ແລະ ອີກກໍລະນີໜຶ່ງແມ່ນໝູ່ເພື່ອນບ້ານດຽວກັນໄດ້ຊວນໄປເຮັດວຽກງານຢູ່ປະເທດໃກ້ຄຽງ, ຖືກໂກງຄ່າແຮງງານ, ຖືກກັກຂັງໜ່ວງນ່ຽວ ໄດ້ຫຼາຍປີບໍ່ມີເງິນກັບບ້ານ ແລະ ບໍ່ຮູ້ທາງກັບແມ່ນໄດ້ປະສານກັບພາກສ່ວນກ່ຽວຂ້ອງເພື່ອທວງຫາວ ແລະ ສາມາດຊ່ວຍເຫຼືອໄດ້ 1 ເຫດການ; ຈັດສົ່ງຜູ້ທີ່ບໍ່ມີຍາດພີ່ນ້ອງເຊິ່ງເປັນຄົນຕ່າງປະເທດ ເພື່ອນບ້ານລັກລອບເຂົ້າມາເຮັດວຽກ ຢູ່ພາຍໃນແຂວງບໍລິຄຳໄຊກັບຄືນທ້ອງຖິ່ນໂດຍສົມທົບກັບພາກສ່ວນກ່ຽວຂ້ອງຢູ່ໃນ 3 ກໍລະນີ, ສ່ວນຫຼວງຫຼາຍແມ່ນອາຊີບກຳມະກອນທົ່ວໄປ.

ວຽກງານພົວພັນ ແລະ ການຮ່ວມມືສາກົນ: ໄດ້ມີການພົວພັນຮ່ວມມືກັບຕ່າງປະເທດຢູ່ບັນດາປະເທດອ້ອມຂ້າງເພື່ອນມິດຍຸດທະສາດ ແລະ ພິເສດຕໍ່ກັບປະເທດທີ່ເປັນບ້ານໃກ້ເຮືອນຄຽງບັນດາແຂວງທີ່ມີຊາຍແດນຕິດຈອດກັນ ເພື່ອເຮັດໃຫ້ວຽກງານອົງການກາແດງເປັນວຽກງານເຊື່ອມສາຍສຳພັນອັນດີຕໍ່ກັບວຽກງານການຊ່ວຍເຫຼືອດ້ານມະນຸດສະທຳ ແລະ ອື່ນໆ ເຊິ່ງສະແດງອອກຄື: ໄດ້ຮັບການຊ່ວຍເຫຼືອຈາກອົງການກາແດງ ສສ ຫວຽດນາມ ເຄື່ອງທີ່ນຳມາມອບແມ່ນເຄື່ອງບໍລິໂພກ ເຊັ່ນ: ເຂົ້າສານ, ອາຫານແຫ້ງ ຈຳນວນ 100 ຖົງ ລວມມູນຄ່າ 25.000.000 ກີບ. ໄດ້ຈັດຕັ້ງການແລກປ່ຽນຖອດຖອນບົດຮຽນກ່ຽວກັບວຽກງານກາແດງຢູ່ອານາຈັກໄທ ຈຳນວນ 01 ຄັ້ງ, ມີຜູ້ເຂົ້າຮ່ວມທັງໝົດ 01 ຄົນ.

ຜ່ານການຈັດຕັ້ງປະຕິບັດພາລະບົດບາດຂອງຕົນໃນການປະຕິບັດໜ້າທີ່ການເມືອງ ກໍ່ຄືການຮັບໃຊ້ທົ່ວສັງຄົມທີ່ກຳໄວ້ໃນພາລະບົດບາດ, ສິດ ແລະ ໜ້າທີ່ກຳນົດໄວ້ ມີຜົນສຳເລັດທີ່ກ່າວມາຂ້າງເທິງນັ້ນ, ກໍ່ຍ້ອນມີແນວທາງນະໂຍບາຍຂອງພັກທີ່ຖືກຕ້ອງ ແລະ ໄດ້ຮັບການນຳພາ-ຊີ້ນຳຢ່າງໃກ້ສິດຈາກຄະນະພັກ-ຄະນະນຳແຕ່ສູນກາງຮອດທ້ອງຖິ່ນ, ຄະນະພັກ-ຄະນະພະແນກການ, ອົງການຈັດຕັ້ງທຸກພາກສ່ວນໃຫ້ການຮ່ວມມືເປັນຢ່າງດີ; ເປັນຕົ້ນແມ່ນໄດ້ຮັບການຊ່ວຍເຫຼືອຈາກອົງການພາຄີ, ອົງການຈັດຕັ້ງມະຫາຊົນ, ພະແນກການ ແລະ ອົງການຈັດຕັ້ງສັງຄົມຕ່າງໆຄື: ຄະນະບໍລິຫານງານຊາວໜຸ່ມ, ສະຫະພັນກຳມະບານ, ສະຫະພັນແມ່ຍິງ, ອົງການແນວລາວສ້າງຊາດ ບັນດາພາກສ່ວນຕ່າງໆ ເຊັ່ນ: ໃຫ້ຄວາມສະດວກໃນດ້ານຂອດການປະສານງານ; ໃຫ້ການຊ່ວຍເຫຼືອທາງດ້ານວັດຖຸ-ປັດໄຈ ເຂົ້າໃນວຽກງານບັນເທົາທຸກຂັ້ນຕົ້ນໃຫ້ແກ່ຄອບຄົວຖືກເຄາະຮ້າຍຈາກໄພພິບັດ, ອັກຄີໄພ (ໄຟໄໝ້); ປະກອບສ່ວນປຸກລະດົມ ແລະ ສະໝັກບໍລິຈາກເລືອດ ໂດຍບໍ່ຮຽກຮ້ອງສິ່ງຕອບແທນເພື່ອຊ່ວຍເຫຼືອສັງຄົມ... ພ້ອມກັນນັ້ນ, ກໍ່ໄດ້ແຕ່ງຕັ້ງຄະນະຮັບຜິດຊອບປະສານງານເຮັດວຽກຮ່ວມຄະນະກາແດງແຂວງ, ຄະນະປຸກລະດົມຂົນຂວາຍຜູ້ບໍລິຈາກເລືອດທີ່ຖືກແຕ່ງຕັ້ງໃນແຕ່ລະເປົ້າໝາຍມີຄວາມເຂົ້າໃຈເລິກເຊິ່ງຕໍ່ຄວາມສຳຄັນ, ຄວາມຈຳເປັນຂອງວຽກງານກາແດງ ແລະ ວຽກງານບໍລິຈາກເລືອດແມ່ນເປັນວຽກຂອງໝົດທຸກຄົນແມ່ນໜ້າທີ່ຂອງສັງຄົມ; ໂດຍບໍ່ຮຽກຮ້ອງສິ່ງຕອບແທນ.

ຄຽງຄູ່ກັບຜົນສຳເລັດຢ່າງຕັ້ງໜ້າໃນການປະຕິບັດບົດບາດ ແລະ ໜ້າທີ່ຂອງຕົນ ໃນໄລຍະຜ່ານມາກໍ່ຍັງມີບາງຂໍ້ຄົງຄ້າງທີ່ຈະຕ້ອງສືບຕໍ່ຈັດຕັ້ງປະຕິບັດຄື:

1. ການເຄື່ອນໄຫວວຽກງານວິຊາສະເພາະເຖິງຈະມີຜົນສຳເລັດຕາມຄາດໝາຍແຕ່ການປຸກລະດົມ

ການກະສິນ, ທຸກການຈັດຕັ້ງໄດ້ເປັນເຈົ້າໃນການປຸກລະດົມຂົນຂວາຍແຫຼ່ງທຶນ ແລະ ປະກອບສ່ວນສະໝັກໃຈບໍລິຈາກມີພະນັກງານບາງຄົນຍັງບໍ່ເຂົ້າໃຈເລິກເຊິ່ງຕໍ່ແນວທາງນະໂຍບາຍຂອງພັກ;

2. ລະດົມທຶນຈາກສັງຄົມຊ່ວຍສັງຄົມຍັງມີໜ້ອຍ, ຂາດພະນັກງານວິຊາການບາງຂະແໜງການບໍ່ພຽງພໍກັບໜ້າວຽກ, ການປະຕິບັດຄາດໝາຍສູ້ຊົນຂອງແຜນການວຽກງານກາແດງ 01 ປີ ເຫັນວ່າການຊ່ວຍເຫຼືອບັນເທົາທຸກຍັງບໍ່ທັນທົ່ວເຖິງ ແລະ ຊັກຊ້າ; ຍ້ອນພວກເຮົາຍັງບໍ່ມີກອງທຶນແຮສຸກເສີນໄພພິບັດ ແລະ ເປັນເຂດທີ່ຢູ່ເຂດຫ່າງໄກສອກຫຼີກເສັ້ນທາງໄປບໍ່ໄດ້ ໃນລະດູຝົນ, ບາງຄັ້ງກໍ່ບໍ່ໄດ້ຮັບຂໍ້ມູນຈາກພາກສ່ວນກ່ຽວຂ້ອງ, ພາຫະນະຮັບໃຊ້ໄປທາງທຸລະກັນດານບໍ່ມີ;

3. ບາງການຈັດຕັ້ງ, ບາງຂະແໜງການຢູ່ບາງບ່ອນຍັງບໍ່ທັນເຂົ້າໃຈເລິກເຊິ່ງຕໍ່ວຽກງານກາແດງ, ເຮັດວຽກງານປຸກລະດົມຂົນຂວາຍຜູ້ບໍລິຈາກເລືອດໃນກົມກອງ, ຫ້ອງການຂອງຕົນບໍ່ໄດ້ດີເທົ່າທີ່ຄວນ, ບາງເປົ້າໝາຍອານຸຍາດໃຫ້ເຂົ້າຈັດພິທີຮັບບໍລິຈາກເລືອດ ແຕ່ເຂົ້າໄປແລ້ວບໍ່ໄດ້ຮັບເລືອດຈັກຖົງກໍ່ມີ.

ເພື່ອເຮັດໃຫ້ບົດບາດອົງການກາແດງແຂວງບໍລິຄຳໄຊ ໄດ້ຮັບການປັບປຸງ, ຍົກສູງທຽບທັນກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງແຕ່ລະໄລຍະ ຈຶ່ງມີຄວາມຈຳເປັນຕ້ອງໄດ້ດຳເນີນການບູລະນະລະບົບກົງການຈັດຕັ້ງ, ການເຄື່ອນໄຫວປະຕິບັດໜ້າທີ່ຂອງອົງການກາແດງ ຕາມແນວທາງນະໂຍບາຍຂອງພັກເຮັດໃຫ້ອົງການກາແດງໄດ້ຮັບການຍົກລະດັບຂຶ້ນ ແລະ ທົ່ວສັງຄົມໄດ້ຮັບຮູ້ບົດບາດ ແລະ ຄວາມສຳຄັນຂອງວຽກງານອົງການກາແດງແຂວງບໍລິຄຳໄຊ ຕ້ອງໄດ້ເອົາໃຈໃສ່ປັບປຸງບາງວຽກງານດັ່ງນີ້:

ໜຶ່ງ, ຄະນະພັກແຕ່ລະຂັ້ນ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ ຕ້ອງໄດ້ເອົາໃຈໃສ່ຈັດຕັ້ງເຊື່ອມຊຶມກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່, ຄວາມໝາຍຄວາມສຳຄັນຂອງວຽກງານກາແດງ ໂດຍສະເພາະແມ່ນວັນສ້າງຕັ້ງອົງການກາແດງແຂວງບໍລິຄຳໄຊ ປີ 1997, ວັນສ້າງຕັ້ງອົງການກາແດງແຫ່ງຊາດລາວ ວັນທີ 01 ມັງກອນ 1955, ວັນສ້າງຕັ້ງອົງການກາແດງສາກົນ ວັນທີ 08 ພຶດສະພາ 1859ເພື່ອເຮັດໃຫ້ພະນັກງານ, ສະມາຊິກພັກຮັບຮູ້, ເຂົ້າໃຈເປັນເຈົ້າການປະກອບສ່ວນ ແລະ ໃຫ້ການຮ່ວມມືໃນດ້ານຕ່າງໆເປັນຕົ້ນແມ່ນ: ການເຂົ້າຮ່ວມການບໍລິຈາກເລືອດ, ການປະກອບທຶນໃນການຊຸກຍູ້ວຽກງານ ແລະ ວຽກງານກອງທຶນຕ່າງໆໃນການຊ່ວຍເຫຼືອສັງຄົມ.

ສອງ, ຄະນະພັກ, ຄະນະນຳອົງການກາແດງ ຕ້ອງຍົກສູງຄວາມເປັນເຈົ້າການໃນຂອດປະສານງານພາກສ່ວນຕ່າງໆເປັນສຳຄັນ, ຈຸດປະສົງເພື່ອເຮັດໃຫ້ທຸກບັນຫາການເຄື່ອນໄຫວວຽກງານມີຄວາມໂລ່ງລ່ຽນ, ກົມກຽວກັນດີ, ບໍ່ຖິ້ມຈຸດອ່ອນ, ຄວາມຮັບຜິດຊອບໃຫ້ກັນ ແລະ ກັນ, ການປະສານງານເພື່ອສ້າງຄວາມເປັນເອກະພາບຂອງວຽກງານໃຫ້ໄປລວງດຽວກັນ.

ສາມ, ຄະນະພັກ, ຄະນະນຳແຕ່ລະຂັ້ນ ຕ້ອງສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ວຽກງານກາແດງເຄື່ອນໄຫວສະດວກເຊັ່ນ: ຂັ້ນເທິງຕ້ອງສະໜອງງົບປະມານ ແລະ ວັດຖຸອຸປະກອນທີ່ຈຳເປັນພຽງພໍ, ອຳນາດການປົກຄອງ, ປະຊາຊົນ ແລະ ພາກສ່ວນຕ່າງໆ ໃຫ້ການປະກອບສ່ວນ ແລະ ໃຫ້ການຮ່ວມມືເປັນຢ່າງດີ ເພື່ອເຮັດໃຫ້ວຽກງານມີຄວາມຄ່ອງຕົວດີ ໃນການເຮັດໜ້າທີ່ບໍລິການປະຊາຊົນກ່ຽວກັບວຽກງານກາແດງ.

ສີ່, ຄະນະພັກ-ຄະນະບັນຊາທຸກພາກສ່ວນຕ້ອງຈັດກອງປະຊຸມປຶກສາຫາລື ແລະ ວາງແຜນຮ່ວມມືກັບອົງການກາແດງແຂວງໃນວຽກງານປຸກລະດົມວັດ

ຖ-ປັດໄຈ ແລະ ຜູ້ບໍລິຈາກເລືອດຊ່ວຍເຫຼືອສັງຄົມໃຫ້ໄດ້ຕາມຄາດໝາຍວາງໄວ້; ພ້ອມກັນນັ້ນ, ຊອກຫາວິທີການປຸກລະດົມສັງຄົມດ້ວຍຫຼາຍຮູບຫຼາຍສີເປັນຕົ້ນ ນຳພາທີມງານກາແດງແຂວງ, ເມືອງໄປທັດສະນະສຶກສາແລກປ່ຽນບົດຮຽນກັບຕ່າງແຂວງພາຍໃນ ແລະ ຕ່າງປະເທດ ທາງດ້ານຊອກຫາແຫຼ່ງລາຍຮັບເຂົ້າກອງທຶນໄພພິບັດ ແລະ ກອງທຶນເຄື່ອນໄຫວຈັດຫາເລືອດປອດໄພ ໃຫ້ເໝາະສົມຕາມກົດໝາຍກາແດງກຳນົດອອກແລ້ວສະເໜີຂັ້ນເທິງອະນຸມັດ.

ສັງລວມແລ້ວ, ອົງການກາແດງແຂວງບໍລິຄຳໄຊ ແມ່ນອົງການຈັດຕັ້ງສັງຄົມໜຶ່ງທີ່ມີຄວາມສຳຄັນ ໃນການປະຕິບັດພາລະບົດບາດ ແລະ ໜ້າທີ່ 9 ໜ້າວຽກໃຫຍ່ທີ່ກຳນົດໃນກົດໝາຍ ວ່າດ້ວຍວຽກງານກາແດງ ສະນັ້ນ ເພື່ອເຮັດໃຫ້ອົງການກາແດງມີຜົນສຳເລັດໃນແຕ່ລະວຽກງານ ສາມາດຕອບສະໜອງຕາມຄວາມຕ້ອງການຂອງສັງຄົມ ດັ່ງນັ້ນ, ຄະນະພັກ-ຄະນະຮັບຜິດຊອບປະສານງານທຸກພາກສ່ວນ ກໍ່ຕ້ອງໄດ້ເປັນເຈົ້າການປະກອບສ່ວນໃຫ້ການຮ່ວມມືໃນການເຄື່ອນໄຫວວຽກງານ, ຍາດແຍ່ງການຊ່ວຍເຫຼືອຈາກກາແດງພາຍໃນ ແລະ ກາແດງສາກົນ ພ້ອມກັນນັ້ນ, ທຸກພາກສ່ວນເປັນເຈົ້າການປຸກລະດົມຂົນຂວາຍບໍລິຈາກເລືອດ, ແຫຼ່ງທຶນຈາກທຸກພາກສ່ວນໃນສັງຄົມເພື່ອຮັບປະກັນໃຫ້ມີເລືອດປອດໄພ, ພຽງພໍ ແລະ ທັນເວລາ ເຮັດແນວນັ້ນ ຈຶ່ງຈະເຮັດໃຫ້ການຍົກສູງຄຸນນະພາບວຽກງານອົງການກາແດງຢູ່ແຂວງບໍລິຄຳໄຊ ມີປະສິດທິຜົນຢ່າງແທ້ຈິງ...ຯ

ມີແຕ່ຍົກສູງຄວາມເປັນແບບຢ່າງນຳໜ້າ...

ຕໍ່ຈາກໜ້າ 5

ຮັບຮູ້ກົດໝາຍຢ່າງຖືກຕ້ອງ ຈຶ່ງຈະປະຕິບັດກົດໝາຍຖືກຕ້ອງໄດ້ ເຊິ່ງອັນນີ້ແມ່ນສັດຈະທຳທີ່ທຸກຄົນບໍ່ອາດປະຕິເສດໄດ້. ດັ່ງນັ້ນ, ຈຶ່ງຮຽກຮ້ອງໃຫ້ສະມາຊິກພັກທຸກສະຫາຍຕ້ອງເພີ່ມທະວີການຄົ້ນຄວ້າຮ່ຳຮຽນ ແລະ ຍົກລະດັບຄວາມຮັບຮູ້-ເຂົ້າໃຈທາງດ້ານກົດໝາຍຫຼາຍເທົ່າໃດຍິ່ງດີ ເວົ້າລວມ, ເວົ້າສະເພາະກົດໝາຍທີ່ກ່ຽວພັນກັບວຽກງານວິຊາສະເພາະທີ່ຕົນນຳພາ ແລະ ກົດໝາຍທີ່ຕິດພັນກັບຊີວິດປະຈຳວັນຂອງສັງຄົມ; ພ້ອມດຽວກັນນີ້ ກໍ່ຕ້ອງໄດ້ເອົາໃຈໃສ່ເຊີດຊູນ້ຳໃຈເປັນເຈົ້າຕົນເອງໃນການເຝິກຝົນຫຼໍ່ຫຼອມຄຸນສົມບັດສົມທຳປະຕິວັດ ແລະ ຄວາມສາມາດໃນການຈັດຕັ້ງນຳພາໃນຂະບວນການວຽກງານຕົວຈິງ.

ສັງລວມແລ້ວ, ຄວາມເປັນແບບຢ່າງຂອງພະນັກງານ-ສະມາຊິກພັກ ແມ່ນສະແດງອອກໃນການເຮັດວຽກຕ້ອງເຮັດກ່ອນມະຫາຊົນ, ໄປກ່ອນມະຫາຊົນ, ເວົ້າແທ້ທຳຈິງ, ເວົ້າຕ້ອງຕິດພັນກັບການຈັດຕັ້ງປະຕິບັດ, ເວົ້າໜ້ອຍແຕ່ເຮັດຫຼາຍ; ພະນັກງານ-ສະມາຊິກພັກແຕ່ລະສະຫາຍ ຈະແມ່ນຢູ່ໃນຖານະຕຳແໜ່ງໃດກໍ່ຕາມຕ້ອງເປັນເຈົ້າການເຝິກຝົນຫຼໍ່ຫຼອມຕົນເອງຢູ່ສະເໝີ ແລະ ສ້າງສະຕິເຄົາລົບ-ປະຕິບັດລັດຖະທຳມະນູນ ແລະ ກົດໝາຍຢ່າງເຂັ້ມງວດ. ມີແຕ່ເຮັດແນວນັ້ນ, ພັກຈຶ່ງຈະມີຄວາມປອດໃສ ເຂັ້ມແຂງ ໜັກແໜ້ນ, ມະຫາຊົນຈະມີຄວາມເຫຼື້ອມໃສສັດທາ, ໄວ້ວາງໃຈ, ເຊື່ອໝັ້ນ ແລະ ເດີນຕາມການນຳພາຂອງພັກ...ຯ

ບາງສິ່ງທ້າທາຍໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານ ເສດຖະກິດ-ການເງິນ

(ລາງວັນຊະນະເລີດແຂ່ງຂັນບົດຂຽນ ເນື່ອງໃນໂອກາດສະເຫຼີມສະຫຼອງວັນສ້າງຕັ້ງ ວາລະສານກໍ່ສ້າງພັກ ຄົບຮອບ 30 ປີ)

ໂດຍ: ມີໄຊ ພູນມີໄຊ

ວາລະແຫ່ງຊາດໝາຍເຖິງບັນຫາສຳຄັນ, ຈຳເປັນ ແລະ ຮີບດ່ວນຂອງຊາດທີ່ໄດ້ສະສົມມາຫຼາຍປີ ໃຫ້ຜ່ອນຄາຍລົງໃນກຳນົດເວລາທີ່ແນ່ນອນໂດຍຖືເອົາການແກ້ໄຂບັນຫາດັ່ງກ່າວເປັນໜ້າທີ່, ພັນທະ ແລະ ຄວາມຮັບຜິດຊອບຂອງທຸກພາກສ່ວນໃນສັງຄົມ ເວົ້າລວມ, ເວົ້າສະເພາະ ຄະນະລັດຖະບານ ແລະ ປະຊາຊົນບັນດາເຜົ່າໃນທົ່ວປະເທດຈະຕ້ອງຮ່ວມແຮງຮ່ວມໃຈກັນ ຈັດຕັ້ງປະຕິບັດໃຫ້ບັນລຸຜົນຕາມລະດັບຄາດໝາຍທີ່ວາງອອກ.

ສະພາ ສປປ ລາວ ກໍ່ໄດ້ຈັດໃຫ້ມີວາລະແຫ່ງຊາດຄື: ໃນກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ IX ເມື່ອກາງປີ 2021 ທີ່ຜ່ານມາ, ນາຍົກລັດຖະມົນຕີ ແຫ່ງ ສປປ ລາວໄດ້ຂຶ້ນຜ່ານ 2 ວາລະແຫ່ງຊາດຄື: ວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ເຊິ່ງມີໄລຍະເວລາການຈັດຕັ້ງປະຕິບັດ 2 ປີ (2021-2023).

ສຳລັບວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ເຊິ່ງເປັນວຽກງານບູລິມະສິດຮີບດ່ວນ ພ້ອມທັງໄດ້ກຳນົດເຂົ້າໃນແຜນດຳເນີນງານຈຸດສຸມຂອງລັດຖະບານໃນໄລຍະປີ 2021 ຫາ 2025 ໃຫ້ຜ່ອນຄາຍລົງຢ່າງຈະແຈ້ງດ້ວຍການປັບປຸງນະໂຍບາຍກໍຄືກົນໄກການຄຸ້ມຄອງໃນບາງດ້ານທີ່ມີລັກສະນະບຸກທະລຸແນໃສ່ສ້າງຄວາມເຂັ້ມແຂງໃນດ້ານເສດຖະກິດ-ການເງິນ ແລະ ຄວາມສະຫງົບຂອງສັງຄົມເປັນກ້າວໆ. ນອກຈາກຕ້ອງຍຶດໝັ້ນຕາມຫຼັກການນຳພາຂອງພັກ ແລະ ການຄຸ້ມຄອງດ້ວຍລະບຽບກົດໝາຍແລ້ວ ຍັງຕ້ອງເອົາໃຈໃສ່ເນັ້ນໜັກຕື່ມຕໍ່ຫຼັກການສະເພາະເຊັ່ນ: ເດັດຂາດ, ໂປ່ງໃສ ແລະ ມືອາຊີບ (ຫຼັກວິຊາການ) ໂດຍສຸມໃສ່ 5 ວຽກງານ ດັ່ງນີ້: 1. ສົ່ງເສີມການຜະລິດເພື່ອທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ ເພື່ອສ້າງຖານລາຍຮັບທີ່ເຂັ້ມແຂງ (ຫັນປ່ຽນຈາກສັງຄົມຊົມໃຊ້ຫຼາຍກວ່າໄປສູ່ສັງຄົມການຜະລິດຫຼາຍຂຶ້ນ); 2. ສ້າງຄວາມເຂັ້ມແຂງດ້ານການເກັບລາຍຮັບງົບປະມານ; 3. ສົ່ງເສີມການປະຢັດ, ຕ້ານການຟຸມເຟືອຍ ແລະ ຍົກສູງປະສິດທິຜົນການລົງທຶນ-ລາຍຈ່າຍງົບປະມານ ແລະ ການແກ້ໄຂຫນີ້ສິນພາຍໃນ ແລະ ຕ່າງປະເທດ; 4. ສ້າງສະຖຽນລະພາບດ້ານການເງິນ ແລະ 5. ຍົກສູງປະສິດທິພາບການຄຸ້ມຄອງລັດດ້ວຍກົດໝາຍໂດຍຈະປັບປຸງຮ່າງກົດໝາຍ, ນະໂຍບາຍ ແລະ ກົນໄກຕ່າງໆໃຫ້ຄ່ອງຕົວກວ່າເກົ່າ.

ໃນມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດໄດ້ກຳນົດໄວ້ວ່າ: ໃນການພັດທະນາເສດຖະກິດ ຕ້ອງສົມທົບຢ່າງແໜ້ນແຟ້ນ ລະຫວ່າງການແກ້ໄຂຄວາມຫຍຸ້ງຍາກດ້ານການເງິນ-ເງິນຕາ ແລະ ໜີ້ສິນສາທາລະນະ, ກຳຈັດຄວາມສ່ຽງ ທີ່ຈະນຳໄປສູ່ສະພາວະວິກິດທາງເສດຖະກິດຮ້າຍແຮງກັບການຮັບປະກັນບັນດາປັດໄຈອັນຈຳເປັນໃຫ້ແກ່ການຂະຫຍາຍຕົວດ້ານເສດຖະກິດ-ສັງຄົມຢ່າງຕໍ່ເນື່ອງ, ນຳໃຊ້, ເສີມຂະຫຍາຍພື້ນຖານວັດຖຸເຕັກນິກ ແລະ ກຳລັງຊັບພະຍາກອນ ບຸກຄົນທີ່ມີໃນປະຈຸບັນ ໃຫ້ມີປະສິດທິຜົນສູງສູງສຸດ ແລະ ນຳຜົນປະໂຫຍດໂດຍກົງມາໃຫ້ແກ່ສັງຄົມ. ຕ້ອງຖືການປະຢັດລາຍຈ່າຍ ໂດຍສະເພາະການໃຊ້ຈ່າຍບໍລິຫານເປັນວາລະແຫ່ງຊາດ. ດັ່ງນັ້ນ, ຕ້ອງເລັ່ງທວງຢ່າງຮີບດ່ວນໃຫ້ພັກ-ລັດເຮົາ ຕ້ອງໄດ້ເພີ່ມທະວີການນຳພາ-ຊີ້ນຳເພື່ອແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໂດຍຍົກລະດັບການແກ້ໄຂບັນຫາດັ່ງກ່າວເປັນວາລະແຫ່ງຊາດ, ການກຳນົດເປັນວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນເປັນເຫດການການເມືອງທີ່ສຳຄັນທີ່ເປັນປະຫວັດການຂອງປະເທດຊາດ ໃນການຕັດສິນໃຈດ້ານຍຸດທະສາດຂອງພັກ-ລັດເຮົາ, ເປັນການສ້າງກົນໄກປະຕິບັດ ທີ່ມີການປະສົມກົມກຽວລະຫວ່າງວິທີປົກກະຕິທີ່ມີຢູ່ກັບວິທີ ແລະ ມາດຕະການພິເສດເພື່ອຂັບເຄື່ອນການແກ້ບັນຫາຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ທີ່ມີທ່າອ່ຽງ ແລະ ຄວາມສ່ຽງ ອາດຈະຕົກເຂົ້າສູ່ວິກິດການໃຫ້ຜ່ອນຄາຍລົງ ແລະ ໃຫ້ມີພື້ນຖານຫັນປ່ຽນໃຫ້ດີຂຶ້ນຢ່າງຈະແຈ້ງດ້ວຍການປັບປຸງນະໂຍບາຍ, ກົນໄກການຄຸ້ມຄອງບາງດ້ານໃຫ້ມີລັກສະນະບຸກທະລຸແນໃສ່ແກ້ໄຂບັນຫາໃຫ້ໄດ້ ແລະ ສ້າງຄວາມເຂັ້ມແຂງດ້ານເສດຖະກິດ-ການເງິນເປັນກ້າວໆ. ທົ່ວພັກ, ລັດ, ທົ່ວສັງຄົມຕ້ອງຖືວາລະແຫ່ງຊາດປຽບສະເໝືອນບັ້ນຮົບເສດຖະກິດ ໃນເງື່ອນໄຂຫຍຸ້ງຍາກທີ່ສຸດທີ່ຕ້ອງຮ່ວມແຮງຮ່ວມໃຈກັນບຸກເຂົ້າສູ່ສະໜາມຮົບຢ່າງກ້າຫານ, ເສຍສະຫຼະ ແລະ ໃນທີ່ສຸດຕ້ອງຍາດເອົາໄຊຊະນະໄດ້ຢ່າງແນ່ນອນ.

ຕະຫຼອດໄລຍະທີ່ຜ່ານມາ, ປະເທດເຮົາໄດ້ຮັບການພັດທະນາທາງດ້ານເສດຖະກິດ-ສັງຄົມຢ່າງຕໍ່ເນື່ອງ ມາຮອດປັດຈຸບັນ ສະພາບການຜະລິດ ແລະ ການບໍລິການຂະຫຍາຍຕົວຢ່າງຕໍ່ເນື່ອງເປັນຕົ້ນ: ຂະແໜງກະສິກຳ ຂະຫຍາຍຕົວ 3,8%, ກວມເອົາ 14,6% ຂອງ GDP, ຂະແໜງອຸດສາຫະກຳ ຂະຫຍາຍຕົວ 4,7%, ກວມເອົາ 36,6% ຂອງ GDP; ຂະແໜງບໍລິການ ຂະຫຍາຍຕົວ 5,6%, ກວມເອົາ 37,6% ຂອງ GDP ແລະ ພາສີ-ອາກອນຜະລິດຕະພັນ ຂະຫຍາຍຕົວ 3,7%, ກວມເອົາ 11,2% ຂອງ GDP. ປັດໄຈຕົ້ນຕໍ ທີ່ຊຸກຍູ້ໃຫ້ເສດຖະກິດສືບຕໍ່ຂະຫຍາຍຕົວດີຂຶ້ນທຽບໃສ່ໄລຍະດຽວກັນຂອງປີຜ່ານມາແມ່ນຂະແໜງບໍລິການ ໂດຍສະເພາະມາຈາກການຄ້າຂາຍຍົກ-ຂາຍຍ່ອຍ ແລະ ສ້ອມແປງ. ນອກນັ້ນ, ການທ່ອງທ່ຽວ ແລະ ການຂົນສົ່ງ ກໍ່ຍັງສືບຕໍ່ຂະຫຍາຍຕົວດີຂຶ້ນ. ໃນໄລຍະ 6 ເດືອນຕົ້ນປີ 2023, ພາຍຫຼັງການລະບາດຂອງພະຍາດໂຄວິດ-19 ຜ່ອນຄາຍລົງ ໄດ້ເຮັດໃຫ້ສະພາບການຜະລິດ ແລະ ການບໍລິການຢູ່ ສປປ ລາວ ຂະຫຍາຍຕົວ ໃນລະດັບ 4,8%, ໃນນັ້ນ, ໄຕມາດ 1 ຂະຫຍາຍຕົວ 4,8% ແລະ ໄຕມາດ 2 ຄາດວ່າຈະຂະຫຍາຍຕົວ 4,9% ທຽບໃສ່ແຜນການໝົດປີ, ຄິດເປັນມູນຄ່າຕາມລາຄາໃນປີ ເທົ່າກັບ 118.467 ຕື້ກີບ ເທົ່າກັບ 51% ຂອງແຜນການໝົດປີ, ສຳລັບໂຕເລກລວມຍອດຜະລິດຕະພັນພາຍໃນ (GDP). ສຳລັບປະລິມານເງິນ M2 ມາຮອດທ້າຍເດືອນພຶດສະພາ 2023 ຂະຫຍາຍຕົວໃນລະດັບ 26,12% ທຽບໃສ່ໄລຍະດຽວກັນ

ຂອງປີຜ່ານມາ, ແຕ່ຖ້າທຽບໃສ່ທ້າຍປີ 2022 ຂະຫຍາຍຕົວໃນລະດັບ 7,87% ແລະ ຖ້າຮອດທ້າຍເດືອນມິຖຸນາ 2023 ຄາດວ່າຈະຂະຫຍາຍຕົວ 27,32% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ຫຼື ຖ້າທຽບໃສ່ເວລາດຽວກັນປີ 2022 ແມ່ນໄດ້ 13,11%.

ແຕ່ເຖິງຢ່າງໃດກໍ່ຕາມ ກໍຍັງມີບາງສິ່ງທ້າທາຍໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ເປັນຕົ້ນແມ່ນການຈັດຕັ້ງປະຕິບັດຕົວຈິງແມ່ນມີສິ່ງທ້າທ້າຍຫຼາຍດ້ານເປັນຕົ້ນ: ການເພີ່ມຂຶ້ນສູງຂອງລາຄານ້ຳມັນຢູ່ຕະຫຼາດສາກົນ, ຄວາມຜັນຜວນຂອງລາຄາຄຳ, ຄ່າເງິນສະກຸນຫຼັກຢູ່ຕະຫຼາດສາກົນ ແຂງຄ່າຂຶ້ນ ເຊິ່ງມີຜົນມາຈາກບັນຫາຄວາມຂັດແຍ່ງພູມສາດການເມືອງ ລະຫວ່າງປະເທດມະຫາອຳນາດເຮັດໃຫ້ການຮັກສາສະຖຽນລະພາບເງິນຕາແຫ່ງຊາດ ປະສົບກັບບັນຫາຫຼາຍດ້ານ ໂດຍສະເພາະແມ່ນອັດຕາເງິນເຟີ້ຍັງຢູ່ໃນລະດັບສູງ, ອັດຕາແລກປ່ຽນກີບທຽບໃສ່ເງິນໂດລາ ແລະ ເງິນບາດໄທເຫັນວ່າ ຍັງມີທ່າອ່ຽງອ່ອນຄ່າແຮງ ເຮັດໃຫ້ສະພາບຄວາມຕ້ອງການເງິນຕາຕ່າງປະເທດໃນການຊຳລະກັບຕ່າງປະເທດຂອງ ສປປ ລາວ ຍັງຢູ່ໃນລະດັບສູງ ແລະ ເຮັດໃຫ້ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະສົບກັບຄວາມຫຍຸ້ງຍາກ, ນອກຈາກນັ້ນ, ບັນຫາໜີ້ສິນສາທາລະນະ, ສະພາບການແຜ່ລະບາດຂອງພະຍາດໂຄວິດ-19 ທີ່ແກ່ຍາວບວກກັບສະພາບຂອງພາກພື້ນ, ສະພາບການສາກົນທີ່ຜັນແປໄປຢ່າງສະຫຼັບສັບຊ້ອນ, ສະພາບລາຄາພະລັງງານມີການເໜັງຕີງແຮງ, ໄພເງິນເຟີ້ຂອງບັນດາປະເທດທີ່ມີເສດຖະກິດຂະຫຍາຍຕົວ, ລາຄາສິນຄ້າ ແລະ ບໍລິການເພີ່ມຂຶ້ນສູງໃນຮອບຫຼາຍສິບປີ ເຊິ່ງມີຜົນກະທົບທາງກົງ ແລະ ທາງອ້ອມ ຕໍ່ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດກໍ່ຄືສະພາບເສດຖະກິດການເງິນ-ເງິນຕາ ເກີດມີຄວາມຫຍຸ້ງຍາກສົມຄວນ.

ຈາກສິ່ງທ້າທາຍທີ່ກ່າວມານັ້ນ, ໄດ້ມີຂໍ້ສັງເກດ ແລະ ທັດສະນະ ຕໍ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ 2023 ຂອງລັດຖະບານ ເວົ້າລວມ, ເວົ້າສະເພາະ ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກ ດ້ານເສດຖະກິດ-ການເງິນ ເຊິ່ງວຽກຈຸດສຸມ 6 ເດືອນທ້າຍປີ 2023 ໂດຍລັດຖະບານຈະສຸມໃສ່ ບາງວຽກທີ່ສຳຄັນຈຳນວນໜຶ່ງ ເພື່ອເຮັດໃຫ້ເສດຖະກິດ, ການເງິນ, ເງິນຕາຂອງປະເທດເຮົາບໍ່ໃຫ້ຕົກເຂົ້າສູ່ວິກິດ ແລະ ຄ່ອຍໆກ້າວໄປເຖິງການສ້າງພື້ນຖານໃຫ້ເສດຖະກິດ-ການເງິນພົ້ນຈາກຄວາມສ່ຽງ ແລະ ມີຄວາມໝັ້ນທ່ຽງເປັນກ້າວໆໃນປີຕໍ່ໆໄປ, ສືບຕໍ່ຄົ້ນຄວ້າບັນດາມາດຕະການເພື່ອເຮັດໃຫ້ເສດຖະກິດມະຫາພາກມີຄວາມສະຖຽນລະພາບ ແລະ ບໍ່ໃຫ້ຕົກເຂົ້າສູ່ວິກິດ, ໃນນັ້ນ ຈະໄດ້ສຸມໃສ່ແກ້ໄຂຈຸດທີ່ມີຄວາມບອບບາງ, ອ່ອນໄຫວ ແລະ ເໜັງຕີງແຮງເຊັ່ນ: ບັນຫາອັດຕາແລກປ່ຽນ, ບັນຫາເງິນເຟີ້, ລາຄາສິນຄ້າ ໃຫ້ເໜັງຕີງຊ້າລົງ ກ້າວໄປເຖິງຈຸດທີ່ມີຄວາມສະຖຽນກວ່າເກົ່າ, ໃນນີ້ ຈະໄດ້ສຸມໃສ່ເປັນພິເສດ ແມ່ນການເກັບລາຍຮັບໃຫ້ໄດ້ຕາມແຜນການ ຫຼື ໃຫ້ເກີນແຜນເປັນປີທີ 3 ຕິດຕໍ່ກັນ ເພື່ອມີເງິນມາແກ້ໄຂໜີ້ສິນ, ໃນນັ້ນ ຈະໄດ້ສຸມໃສ່ຄົ້ນຄວ້າຖານລາຍຮັບໃໝ່ ແລະ ຍູ້ແຮງການຫັນການເກັບລາຍຮັບ ເປັນທັນສະໄໝໃຫ້ແຂງແຮງ ແລະ ປາກົດຜົນເປັນຈິງຫຼາຍກວ່າເກົ່າ; ສືບຕໍ່ຄົ້ນຄວ້າໂອນຫົວໜ່ວຍລາຍຮັບທີ່ສູນກາງຄຸ້ມຄອງໃຫ້ແຂວງເປັນຜູ້ຮັບຜິດຊອບເກັບໃຫ້ຫຼາຍຫົວໜ່ວຍຂຶ້ນຕື່ມ; ສືບຕໍ່ປະຕິບັດບັນດານິຕິກຳທີ່ລັດຖະບານວາງອອກ ທີ່ກ່ຽວກັບການເພີ່ມທະວີການຄຸ້ມຄອງ

ແລະ ຕ້ານການຮົ່ວໄຫຼຂອງລາຍຮັບງົບປະມານລັດ, ການປະຢັດ ແລະ ຕ້ານການຟູມເຟືອຍ, ການນຳໃຊ້ລົດຂອງລັດ ແລະ ອື່ນໆໃຫ້ເຂັ້ມງວດ ແລະ ເປັນຮູບປະທຳຫຼາຍຂຶ້ນ; ສືບຕໍ່ແກ້ໄຂໜີ້ສິນສາທາລະນະ ໂດຍສະເພາະໜີ້ສິນຕໍ່ຕ່າງປະເທດ ບໍ່ໃຫ້ຕົກເຂົ້າສູ່ສະພາບທີ່ບໍ່ສາມາດຊຳລະໜີ້ໄດ້. ພ້ອມກັນນັ້ນ ສຸມໃສ່ຈັດຕັ້ງປະຕິບັດການແກ້ໄຂໜີ້ 3 ແຈ ບ້ວງ 8.000 ຕື້ກີບ ໃຫ້ສຳເລັດ 100%, ພ້ອມກັນນັ້ນ ກໍຄົ້ນຄວ້າ ແລະ ຈັດສັນແຫຼ່ງທຶນບ້ວງໃໝ່ຕື່ມ ເພື່ອມາແກ້ໄຂໜີ້ສິນການລົງທຶນຂອງລັດ ເພື່ອຊ່ວຍຜູ້ຮັບເໝົາໂຄງການສາມາດຢູ່ໄດ້ ສືບຕໍ່ດຳເນີນທຸລະກິດໄດ້. ນອກນັ້ນ ກໍຈະໄດ້ສືບຕໍ່ສົມທົບກັບສະພາແຫ່ງຊາດ ເພື່ອປັບປຸງ ນິຕິກຳຈຳນວນໜຶ່ງທີ່ກ່ຽວຂ້ອງກັບຂັ້ນຂອດການສ້າງ ແລະ ຮັບຮອງແຜນການລົງທຶນຂອງລັດໃຫ້ໄວຂຶ້ນຕື່ມ ທັງສຸມໃສ່ປັບປຸງປະສິດທິຜົນຂອງການລົງທຶນຂອງລັດໃຫ້ດີຂຶ້ນ, ຢຸດການຈັດສັນທຶນໃສ່ໂຄງການໃໝ່ທີ່ບໍ່ມີປະສິດທິຜົນ ແລະ ສຸມໃສ່ໂຄງການລົງທຶນ ເພື່ອພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກເປັນບຸລິມະສິດ; ສືບຕໍ່ເອົາໃຈໃສ່ເປັນພິເສດ ຕໍ່ການຄຸ້ມຄອງອັດຕາແລກປ່ຽນເງິນຕາ, ລາຄາສິນຄ້າ, ປະລິມານເງິນ M2 ແລະ ອັດຕາເງິນເຟີ້ ໃຫ້ຢູ່ໃນລະດັບທີ່ສາມາດຄວບຄຸມໄດ້. ພ້ອມກັນນັ້ນ, ຈະສືບຕໍ່ສຸມໃສ່ແກ້ໄຂບັນຫາການສະໜອງເງິນຕາໃຫ້ບັນດາບໍລິສັດທີ່ນຳເຂົ້ານ້ຳມັນເຊື້ອໄຟ ໃຫ້ຫຼາຍຂຶ້ນກວ່າເກົ່າ. ສຳລັບຄວາມຄືບໜ້າການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຂໍ້ຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໃນໄລຍະ 2 ປີ ຜ່ານມາ ດ້ວຍຄວາມເອົາໃຈໃສ່ຂອງບັນດາອົງການຈັດຕັ້ງພັກ-ລັດ ທັງສູນກາງ ແລະ ທ້ອງຖິ່ນ ກໍຄືປະຊາຊົນບັນດາເຜົ່າ ເຮັດໃຫ້ວຽກງານຕ່າງໆ ໄດ້ຮັບການປັບປຸງນັບມື້ດີຂຶ້ນ. ແຕ່ເຖິງແນວໃດກໍ່ຕາມ ເມື່ອອີງໃສ່ຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມຂອງປະເທດເຮົາ ໃນໄລຍະໃໝ່ນັ້ນ ຍັງມີຫຼາຍດ້ານທີ່ລັດຖະບານ ຈະຕ້ອງໄດ້ເພີ່ມທະວີຊີ້ນຳ ແລະ ຄຸ້ມຄອງໃຫ້ມີໝາກຜົນສູງຂຶ້ນຕື່ມ ເປັນຕົ້ນການປະຕິບັດ 3 ຫຼັກການ (ເດັດຂາດ, ໂປ່ງໃສ ແລະ ເປັນມືອາຊີບ) ຂອງວາລະແຫ່ງຊາດ ໃຫ້ເປັນຮູບປະທຳພ້ອມທັງເກັບລາຍຮັບໃຫ້ໄດ້ຄົບຖ້ວນ ຕາມທ່າແຮງບົ່ມຊ້ອນທີ່ເຮົາມີ, ຊຸກຍູ້ການຜະລິດເປັນສິນຄ້າເພື່ອທົດແທນການນຳເຂົ້າ ເພື່ອສົ່ງອອກ, ຕ້ານການຮົ່ວໄຫຼ ແລະ ອື່ນໆ.

ວາລະແຫ່ງຊາດ ເປັນໄລຍະເວລາທີ່ທຸກຄົນພາຍໃນຊາດ ຕ້ອງປະຕິບັດພັນທະຂອງຕົນ; ການທີ່ລັດຖະບານ ໄດ້ກຳນົດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຫຍຸ້ງຍາກ ດ້ານເສດຖະກິດ-ການເງິນເປັນ 1 ໃນ 2 ວາລະແຫ່ງຊາດ ກໍຍ້ອນວ່າ ໃນຫຼາຍປີຜ່ານມາ ສະພາບທາງດ້ານເສດຖະກິດ-ການເງິນ ຂອງປະເທດເຮົາມີຄວາມຫຍຸ້ງຍາກຫຼາຍ, ໜີ້ສິນກໍເພີ່ມຂຶ້ນ ຍ້ອນຫຼາຍປັດໄຈ ແລະ ຫຼາຍສາເຫດ ເຊິ່ງພັກ ແລະ ລັດຖະບານ ກໍ່ພະຍາຍາມແກ້ໄຂ ແຕ່ກໍບໍ່ສາມາດແກ້ໄຂໄດ້, ຖ້າປະປ່ອຍໃຫ້ສະພາບຄວາມຫຍຸ້ງຍາກດັ່ງກ່າວ ສືບຕໍ່ແກ່ຍາວ ປະເທດພວກເຮົາຈະຕົກເຂົ້າສູ່ພາວະວິກິດການທາງດ້ານເສດຖະກິດ-ການເງິນ ຢ່າງຮ້າຍແຮງ; ເພາະສະນັ້ນ ລັດຖະບານ ຈຶ່ງໄດ້ຍົກລະດັບຄວາມຫຍຸ້ງຍາກດັ່ງກ່າວ ເປັນວາລະແຫ່ງຊາດ. ເຊື່ອໝັ້ນວ່າ: ພາຍໃຕ້ການຊີ້ນຳ-ນຳພາຂອງພັກ-ລັດຖະບານເຮົາ ຈະສາມາດສືບຕໍ່ຜ່ານຜ່າສິ່ງທ້າທາຍທົດສອບຕ່າງໆນາໆປະການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແຕ່ນີ້ຮອດທ້າຍປີ 2023 ໄດ້ຕາມລະດັບຄາດໝາຍທີ່ວາງໄວ້...ຯ

ຍົກສູງວຽກງານກໍ່ສ້າງ, ບໍາລຸງພະນັກງານ ນໍາພາ-ຄຸ້ມຄອງ ຢູ່ແຂວງຫຼວງນໍ້າທາ

ໂດຍ: ທອງແກ້ວ ສິດທິພົງ

ພະນັກງານເປັນປັດໄຈຕັດສິນທຸກໄຊຊະນະຂອງການປະຕິວັດ, ສຸມໃສ່ວຽກງານສຶກສາອົບຮົມ, ກໍ່ສ້າງ ແລະ ບໍາລຸງຖັນແຖວພະນັກງານໃຫ້ມີແນວຄິດ, ທັດສະນະຫຼັກໝັ້ນ, ມີຄຸນສົມບັດສິນທໍາປະຕິວັດ, ມີຄວາມຈົງຮັກພັກດີຕໍ່ອຸດົມການຂອງພັກ, ບໍລິສຸດສັດຊື່ຕໍ່ພັກ-ລັດ ແລະ ປະຊາຊົນບັນດາເຜົ່າ, ພັກເຮົາຍາມໃດກໍ່ຖືພະນັກງານເປັນທຶນຮອນອັນປະເສີດຂອງພັກ, ເປັນແວ່ນແຍງອັນໃສແຈ້ງຂອງປະຊາຊົນ ແລະ ຮັບໃຊ້ປະຊາຊົນ, ເປັນຂໍ້ຕໍ່ລະຫວ່າງພັກກັບປະຊາຊົນ, ທຸກວຽກງານຂອງພັກຈະດີ ຫຼື ຮ້າຍ, ຈະມີໄຊ ຫຼື ປະລາໄຊກໍ່ລ້ວນແຕ່ແມ່ນພະນັກງານເປັນຜູ້ຕັດສິນ. ສະນັ້ນ, ພັກປະຊາຊົນ ປະຕິວັດລາວ ຍາມໃດກໍ່ເອົາໃຈໃສ່ໃນການກໍ່ສ້າງ ແລະ ບໍາລຸງພະນັກງານ, ຍົກລະດັບດ້ານຄວາມຮູ້, ຄວາມສາມາດຂອງພະນັກງານ, ເຮັດໃຫ້ພະນັກງານມີຄວາມໜັກແໜ້ນທາງດ້ານການເມືອງ-ແນວຄິດ, ມີຄວາມເຂັ້ມແຂງທາງດ້ານວິຊາການ, ການຈັດຕັ້ງ ແລະ ແບບແຜນວິທີນໍາພາ, ມີຄຸນສົມບັດສິນທໍາປະຕິວັດ, ກໍາແໜ້ນທິດສະດີມາກ-ເລນິນ, ແນວຄິດໄກສອນ ພົມວິຫານ ແລະ ແນວທາງນະໂຍບາຍຂອງພັກຢ່າງເປັນລະບົບ ເພື່ອຍົກສູງປະສິດທິພາບ, ປະສິດທິຜົນຂອງໜ້າທີ່ວຽກງານ, ຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນແຕ່ລະໄລຍະ, ປະທານ ໄກສອນ ພົມວິຫານ ໄດ້ເວົ້າວ່າ ແນວທາງ, ແຜນນະໂຍບາຍ ແລະ ນະໂຍບາຍຂອງພັກຈະຖືກຕ້ອງປານໃດກໍ່ຕາມຖ້າພະນັກງານ - ສະມາຊິກພັກ ຫາກຂາດຄວາມຮູ້, ຄວາມສາມາດ, ຂາດປະສົບການໃນດ້ານຕ່າງໆ ເພື່ອນໍາພາ ແລະ ຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກດັ່ງກ່າວກໍ່ຈະດີພຽງແຕ່ຢູ່ໜ້າເຈ້ຍເທົ່ານັ້ນ ຈາກບັນຫານີ້, ຈຶ່ງເຫັນວ່າ: ຂອດພະນັກງານເປັນຂອດຕັດສິນກວ່າໝູ່.

ໃນມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກໄດ້ຢັ້ງຢືນວ່າ: ໂດຍຍຶດໝັ້ນໃນຫຼັກການທີ່ວ່າ ພັກກໍາອໍານາດຕ້ອງກໍາສະພາບ ພະນັກງານໃຫ້ໜັກແໜ້ນ ແລະ ຄຸ້ມຄອງພະນັກງານໃຫ້ດີ; ສະນັ້ນ, ການປ່ຽນແປງໃໝ່ວຽກງານພະນັກງານ ຕ້ອງເລີ່ມຈາກການຂຶ້ນແຜນກໍານົດພະນັກງານ ແລະ ແຜນການກໍ່ສ້າງບໍາລຸງຍົກລະດັບພະນັກງານ, ການຈັດວາງ, ສັບຊ້ອນພະນັກງານ, ການເຄື່ອນຍ້າຍ ແລະ ການຄຸ້ມຄອງນໍາໃຊ້ພະນັກງານ, ການຕິດຕາມກວດກາຕີລາຄາພະນັກງານ ແລະ ການປະຕິບັດນະໂຍບາຍຕໍ່ພະນັກງານ. ໃນມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກກໍ່ໄດ້ເວົ້າວ່າ: "ເອົາໃຈໃສ່ປັບປຸງບູລະນະມາດຕະຖານພະນັກງານນໍາພາ-ຄຸ້ມຄອງ ແຕ່ລະປະເພດໃຫ້ລະອຽດ, ສ່ອງແສງຢ່າງຈະແຈ້ງເຖິງເປົ້າໝາຍຕອບສະໜອງການເລັ່ງທວງ ຂອງສະພາບການໃນໄລຍະໃໝ່, ໃນນັ້ນ ຖືຄວາມປອດໃສດ້ານການເມືອງເປັນກົກ, ຄວາມ

ຮູ້ພື້ນຖານ ແລະ ປະສົບການຕົວຈິງເປັນສຳຄັນ".

ເພື່ອປະຕິບັດຕາມແນວຄິດຊີ້ນຳຂອງພັກ ກໍ່ຄື ຂອງປະທານ ໄກສອນ ພົມວິຫານ ດັ່ງທີ່ກ່າວມານັ້ນ ມະຕິກອງປະຊຸມໃຫຍ່ຂອງພັກ ແຕ່ລະຄັ້ງໄດ້ກຳນົດ ຄາດໝາຍສູ້ຊົນສ້າງພະນັກງານໃຫ້ພຽງພໍກັບຄວາມ ຕ້ອງການ ຂອງການປະຕິບັດໜ້າທີ່ຍຸດທະສາດຂອງ ພັກ. ສຳລັບພະນັກງານແມ່ນຕ້ອງມີຄວາມໜັກແໜ້ນ ດ້ານການເມືອງ-ແນວຄິດ, ມີຄຸນສົມບັດສິນທຳປະ ຕິວັດ, ມີຄວາມຮູ້, ຄວາມສາມາດທາງດ້ານວິຊາສະ ເພາະອັນຈຳເປັນ ເພື່ອຮັບປະກັນປະສິດທິຜົນຂອງ ວຽກງານ ເພື່ອບັນລຸຄາດໝາຍດັ່ງກ່າວ ຄະນະພັກ, ຄະ ນະນຳແຕ່ລະຂັ້ນຕ່າງໆ ແລະ ພະນັກງານທີ່ເຮັດວຽກ ງານຈັດຕັ້ງແຕ່ລະບ່ອນແຕ່ລະຂັ້ນຕ້ອງມີຄວາມຮັບ ຜິດຊອບສູງຕໍ່ວຽກງານກໍ່ສ້າງ-ບຳລຸງພະນັກງານນຳ ພາ-ຄຸ້ມຄອງໃນຂອບເຂດຄວາມຮັບຜິດຊອບຂອງ ຕົນ ໃນນັ້ນຈຳເປັນກວ່າໝູ່ ຕ້ອງຮຽນຮູ້ກ່ຽວກັບວຽກ ງານການຂຶ້ນແຜນບຳລຸງ-ກໍ່ສ້າງພະນັກງານເພາະເປັນ ວຽກສຳຄັນ ທີ່ຂາດບໍ່ໄດ້ຂອງຄະນະພັກ ແລະ ຄະນະຈັດ ຕັ້ງຂັ້ນຕ່າງໆ.

ແຂວງຫຼວງນ້ຳທາ ເປັນແຂວງໜຶ່ງທີ່ຕັ້ງຢູ່ທິດ ຕາເວັນອອກສ່ຽງເໜືອ ຂອງ ສປປ ລາວ ທິດເໜືອຕິດ ກັບ ສປ ຈີນ, ຍາວ 160 ກມ, ທິດຕາເວັນຕົກຕິດກັບ ປະເທດມຽນມາ, ຍາວ 159 ກມ, ທິດໃຕ້ຕິດກັບແຂວງບໍ່ ແກ້ວຍາວ 100 ກມ ແລະ ທິດຕາເວັນອອກຕິດກັບແຂວງ ອຸດົມໄຊ ຍາວ 250 ກມ; ມີເນື້ອທີ່ທັງໝົດ 9.391 ກິໂລຕາແມັດ, ເຂດພູດອຍກວມ 85%, ມີ 5 ເມືອງ, 354 ບ້ານ, 36.673 ຄົວເຮືອນ, ມີ 17 ຊົນເຜົ່າ, ມີປະຊາ ກອນທັງໝົດ 189.496 ຄົນ, ຍິງ 95.327 ຄົນ, ຄວາມ ໜາແໜ້ນຂອງປະຊາກອນສະເລ່ຍ 20 ຄົນຕໍ່ກິໂລຕາ ແມັດ.

ກອງປະຊຸມໃຫຍ່ ຄັ້ງທີ VIII ຂອງອົງຄະນະພັກ ແຂວງຫຼວງນ້ຳທາໄດ້ວາງທິດທາງຈຸດໃນຕໍ່ໜ້າໃນວຽກ ງານພັກ-ພະນັກງານໄວ້ວ່າ: ສ້າງ ແລະ ປະຕິບັດແຜນ ກຳນົດພະນັກງານແຕ່ລະປະເພດໃຫ້ແທດກັບຕົວຈິງ ແລະ ເປັນລະບົບຕໍ່ເນື່ອງ, ບຳລຸງ-ກໍ່ສ້າງພະນັກງານ ໃຫ້ມີຄຸນນະພາບ ແລະ ມີຈຸດສຸມ ຕາມທິດຫັນເປັນ ໜຸ່ມ, ໂດຍຖືເອົາມາດຕະຖານຄວາມຮູ້ດ້ານແນວທາງ ນະໂຍບາຍ, ກົດໝາຍ, ມີຄຸນທາດການເມືອງ, ຄຸນສົມ ບັດສິນທຳປະຕິວັດເປັນບູລິມະສິດ; ຖືເອົາຄວາມຮູ້ ຄວາມສາມາດ, ຄວາມສູ້ຊົນອົດທົນ, ຄວາມເສຍສະຫຼະ ແລະ ມີແບບແຜນວິທີເຮັດວຽກເປັນສຳຄັນ; ເລືອກ ເຟັ້ນ ແລະ ບັນຈຸສັບຊ້ອນພະນັກງານໃຫ້ຖືກຕາມມາດ ຕະຖານ ບົນພື້ນຖານເຂັ້ມງວດຕໍ່ການຕີລາຄາ ແລະ ປະ ເມີນຜົນ, ພ້ອມກັນນັ້ນ ກໍ່ສ້າງກົນໄກຕິດຕາມ, ກວດກາ ພະນັກງານ-ລັດຖະກອນຂອງການຈັດຕັ້ງພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະ ອົງ ການຈັດຕັ້ງມະຫາຊົນ ເພື່ອປົກປ້ອງພະນັກງານທີ່ ດີມີຄວາມຮັບຜິດຊອບ ແລະ ປະຕິບັດວິໄນຕໍ່ຜູ້ລະເມີດ ຢ່າງເຂັ້ມງວດ.

ໃນໄລຍະທີ່ຜ່ານມາ, ຄະນະພັກ, ອົງການປົກ ຄອງແຂວງຫຼວງນ້ຳທາ ກໍໄດ້ໃຫ້ຄວາມສຳຄັນຕໍ່ວຽກ ງານພະນັກງານດ້ວຍການກໍ່ສ້າງ ແລະ ບຳລຸງພະນັກງານ ນຳພາ-ຄຸ້ມຄອງ, ຍາມໃດກໍເຫັນຈະແຈ້ງ ແລະ ສະເໜີ ຕົ້ນສະເໜີປາຍ ຖືເອົາວຽກງານນີ້ເປັນກຸນແຈ, ເປັນຕ່ອງ ໂສ້ທີ່ສຳຄັນໃນທຸກໄລຍະຂອງການປະຕິວັດ, ການພັດ ທະນາເສດຖະກິດ-ສັງຄົມ ແລະ ເຊື່ອວ່າ ພະນັກງານ ນຳພາ-ຄຸ້ມຄອງເປັນຜູ້ຕັດສິນ ຜົນໄດ້-ຜົນເສຍ ໃນການ ປະຕິບັດບັນດາແນວທາງ, ແຜນນະໂຍບາຍ, ມະຕິ, ຄຳ ສັ່ງຂອງພັກ, ກົດໝາຍ, ລະບຽບການຂອງລັດ, ຕັດສິນ ເຖິງການຄົງຕົວ ແລະ ຂະຫຍາຍຕົວຂອງສັງຄົມ.

ໂດຍເຫັນໄດ້ຄວາມໝາຍ ແລະ ຄວາມສຳຄັນ ຂອງວຽກງານດັ່ງກ່າວ, ໃນໄລຍະຜ່ານມາຄະນະພັກ,

ອົງການປົກຄອງແຂວງຫຼວງນໍ້າທາ ໄດ້ເອົາໃຈໃສ່ກໍ່ສ້າງ-ບຳລຸງພະນັກງານນຳພາ-ຄຸ້ມຄອງ ຈົນເຮັດໃຫ້ພະນັກງານນຳພາ- ຄຸ້ມຄອງຢູ່ແຂວງຫຼວງນໍ້າທາ ມີການເຕີບໃຫຍ່ຂະຫຍາຍຕົວທາງດ້ານປະລິມານ ແລະ ຄຸນນະພາບ ເປັນຕົ້ນແມ່ນຄະນະພັກແຕ່ລະຂັ້ນກໍ່ໄດ້ເອົາໃຈໃສ່ຈັດຕັ້ງເຊື່ອມຊຶມບັນດາມະຕິ, ຄຳສັ່ງ, ຂໍ້ກຳນົດຂອງກົມການເມືອງສູນກາງພັກ ທີ່ເປັນເອກະສານພື້ນຖານຂອງພະນັກງານນຳພາ-ຄຸ້ມຄອງເຊັ່ນ: ຂໍ້ກຳນົດຂອງກົມການເມືອງສູນກາງພັກສະບັບເລກທີ 01, 02, 03, 04 ວ່າດ້ວຍມາດຕະຖານພະນັກງານ, ການສັບປ່ຽນບ່ອນປະຈຳການ ແລະ ການຕີລາຄາພະນັກງານແມ່ນປະຕິບັດຢ່າງເຂັ້ມງວດຕາມຫຼັກການນຳພາຂອງພັກທີ່ເປັນເອກະພາບກັບວຽກງານຄຸ້ມຄອງພະນັກງານຕາມທິດທີ່ວ່າຖືເອົາວຽກງານກໍ່ສ້າງ ແລະ ບຳລຸງພະນັກງານນຳພາ-ຄຸ້ມຄອງຕິດພັນກັບການສຶກສາອົບຮົມການເມືອງ-ແນວຄິດ ແລະ ຊ່ວຍເຫຼືອກໍ່ສ້າງ ໃຫ້ທຸກຄົນມີໂອກາດ, ເຫັນໄດ້ດ້ານຕັ້ງໜ້າ, ດ້ານຫຍໍ້ທໍ້ຂອງຕົນ, ຍົກສູງດ້ານປະລິມານ, ຄຸນນະພາບ, ຈຸດພິເສດສະພາບດ້ານການເມືອງ-ແນວຄິດ, ຄວາມສາມາດ, ຊີວະປະຫວັດການເຄື່ອນໄຫວຂອງເຂົາເຈົ້າໃນແຕ່ລະໄລຍະຢ່າງລະອຽດ; ສຳລັບຜູ້ທີ່ກະທຳຜິດກົດລະບຽບຂອງພັກ, ລະເມີດຕໍ່ກົດໝາຍຂອງລັດ ກໍ່ຕ້ອງມີການສຳຫຼວດກວດກາ ແລະ ລົງວິໄນຢ່າງເຂັ້ມງວດ.

ປະຈຸບັນທົ່ວແຂວງຫຼວງນໍ້າທາ ມີພະນັກງານທັງໝົດ 6.232 ຄົນ, ຍິງ 2.877 ຄົນ; ໃນນີ້; ມີພະນັກງານ-ລັດຖະກອນ ທີ່ພວມດຳລົງຕຳແໜ່ງຂັ້ນສູນກາງຄຸ້ມຄອງຈຳນວນ 31 ສະຫາຍ, ຍິງ 3 ສະຫາຍ; ລະດັບວິຊາສະເພາະຂັ້ນສູນກາງຄຸ້ມຄອງປະລິນຍາເອກ ຈຳນວນ 9 ສະຫາຍ, ຍິງ 1 ສະຫາຍ; ປະລິນຍາໂທ ຈຳນວນ 210 ສະຫາຍ, ຍິງ 43 ສະຫາຍ; ປະລິນຍາຕີ ຈຳນວນ 2.105 ສະຫາຍ, ຍິງ 771 ສະຫາຍ; ຊັ້ນສູງ ຈຳນວນ 2.473 ສະຫາຍ, ຍິງ 1.192 ສະຫາຍ; ຊັ້ນກາງ ຈຳນວນ 1.374 ສະຫາຍ, ຍິງ 842 ສະຫາຍ ແລະ ຊັ້ນຕົ້ນ ຈຳນວນ 55 ສະຫາຍ, ຍິງ 25 ສະຫາຍ; ຈົບຫຼັກສູດວິຊາສະເພາະທິດສະດີການເມືອງ-ການປົກຄອງ ຢູ່ພາຍໃນ ແລະ ຕ່າງປະເທດຈຳນວນ 271 ສະຫາຍ, ຍິງ 79 ສະຫາຍ; ໃນນີ້, ປະລິນຍາເອກຈຳນວນ 1 ສະຫາຍ; ປະລິນຍາໂທ ຈຳນວນ 5 ສະຫາຍ; ປະລິນຍາຕີຈຳນວນ 3 ສະຫາຍ; ຊັ້ນສູງຈຳນວນ 3 ສະຫາຍ; ຊັ້ນກາງ ຈຳນວນ 51 ສະຫາຍ, ຍິງ 15 ສະຫາຍ, ຊັ້ນຕົ້ນຈຳນວນ 61 ສະຫາຍ, ຍິງ 14 ສະຫາຍ; ຝຶກອົບຮົມການເມືອງ-ການ ປົກຄອງ 45 ວັນ ຈຳນວນ 106 ສະຫາຍ, ຍິງ 40 ສະຫາຍ, ຝຶກອົບຮົມການເມືອງ-ການປົກຄອງ 10 ວັນ ຈຳນວນ 40 ສະຫາຍ, ຍິງ 10 ສະຫາຍ, ບຳລຸງໄລຍະສັ້ນ (ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ) ຈຳນວນ 1 ສະຫາຍ; ນອກຈາກການເລືອກເຟັ້ນພະນັກງານນຳພາ-ຄຸ້ມຄອງໄປສຶກສາ ແລະ ບຳລຸງກໍ່ສ້າງທາງດ້ານທິດສະດີການເມືອງ-ການປົກຄອງ ຢູ່ພາຍໃນ ແລະ ຕ່າງປະເທດແລ້ວ, ຍັງໄດ້ຫັນເອົາພະນັກງານຈຳນວນໜຶ່ງລົງສູ່ຮາກຖານເພື່ອຕິດພັນກັບຂະບວນການວຽກງານຕົວຈິງ ແນໃສ່ເຮັດໃຫ້ພະນັກງານ ຮູ້ວຽກງານຕົວຈິງຢູ່ຮາກຖານທັງເປັນການຍົກລະດັບຄວາມສາມາດໃນການນຳພາວຽກງານຂຶ້ນຕື່ມ.

ການນຳໃຊ້ພະນັກງານແຂວງຫຼວງນໍ້າທາ ແມ່ນປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ໂດຍອີງໃສ່ຄຸນສົມບັດສິນທຳປະຕິວັດ, ຄວາມຮູ້-ຄວາມສາມາດ, ດ້ານວິຊາສະເພາະ, ຜູ້ທີ່ມີພອນສະຫວັນ ແລະ ຄວາມຮຽກຮ້ອງຕ້ອງການຕໍ່ໜ້າທີ່ການເມືອງ ໃນສະເພາະໜ້າ ແລະ ຍາວນານ ປະຕິບັດຕາມເນື້ອໃນກົດໝາຍວ່າດ້ວຍພະນັກງານ-ລັດຖະກອນແຫ່ງ ສປປ ລາວ ສະບັບເລກທີ 74/ສພຊ, ລົງວັນທີ 18 ທັນວາ 2015, ມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ

ຄັ້ງທີ 6 ສະໄໝທີ X ຂອງພັກ, ຍົກສູງຄຸນນະພາບຂອງວຽກງານພະນັກງານ ສຸມໃສ່ປັບປຸງແກ້ໄຂດ້ານທີ່ຍັງຄົງຄ້າງໃຫ້ມີການຫັນປ່ຽນທີ່ດີຂຶ້ນຢ່າງຈະແຈ້ງຄື: ການສ້າງແຜນກໍານົດພະນັກງານຄືນໃໝ່ ໃຫ້ສອດຄ່ອງກັບມະຕິ ສະບັບເລກທີ 032/ກມສພ, ລົງວັນທີ 03 ມັງກອນ 2018 ຂອງກົມການເມືອງສູນກາງພັກ ບົນພື້ນຖານນັ້ນ, ກ້າຕັດສິນໃຈ, ເລືອກເຟັ້ນເອົາພະນັກງານໜຸ່ມທີ່ເຕີບໃຫຍ່ຈາກຂະບວນການວຽກງານຕົວຈິງ; ສະແດງອອກຢູ່ບ່ອນວ່າໄດ້ເອົາໃຈໃສ່ກໍ່ສ້າງ ແລະ ບໍາລຸງພະນັກງານນໍາພາ-ຄຸ້ມຄອງ ດ້ວຍຫຼາຍຮູບການ, ຫຼາຍວິທີການເປັນຕົ້ນແມ່ນການສົ່ງໄປຮຽນທິດສະດີການເມືອງ-ການປົກຄອງ, ໄປບໍາລຸງນັບທັງໄລຍະສັ້ນ, ໄລຍະຍາວທັງຢູ່ພາຍໃນ ແລະ ຕ່າງປະເທດໃນສົກປີ 2022 ໄດ້ສົ່ງພະນັກງານໃນທົ່ວແຂວງໄປຍົກລະດັບທິດສະດີການເມືອງ-ການປົກຄອງທັງໝົດ 176 ສະຫາຍ, ຍິງ 56 ສະຫາຍ; ໃນນີ້, ສົ່ງໄປຄົ້ນຄວ້າລະບົບປະລິນຍາໂທ ຈໍານວນ 4 ສະຫາຍ; ທິດສະດີຂັ້ນສູງ 5 ເດືອນ ຈໍານວນ 3 ສະຫາຍ; ຝຶກອົບຮົມການເມືອງ-ການປົກຄອງ 45 ວັນ ຈໍານວນ 106 ສະຫາຍ, ຍິງ 40 ສະຫາຍ, ຝຶກອົບຮົມການເມືອງ-ການປົກຄອງ 10 ວັນ ຈໍານວນ 40 ສະຫາຍ, ຍິງ 10 ສະຫາຍ, ບໍາລຸງໄລຍະສັ້ນ (ວຽກງານປ້ອງກັນ ຊາດ-ປ້ອງກັນຄວາມສະຫງົບ) ຈໍານວນ 1 ສະຫາຍ; ໃນນັ້ນ, ໄປຍົກລະດັບທິດສະດີການເມືອງ-ການປົກຄອງ ແລະ ວິຊາສະເພາະ ຢູ່ ສສ ຫວຽດນາມ ຈໍານວນ 4 ສະຫາຍ, ສົ່ງໄປບໍາລຸງພາສາຫວຽດນາມຢູ່ແຂວງເຊີນລາຈໍານວນ 15 ສະຫາຍ, ຍິງ 6 ສະຫາຍ ແລະ ສົ່ງໄປຮຽນວິຊາສະເພາະ 3 ສະຫາຍ ຢູ່ມະຫາວິທະຍາໄລ ສຸພານຸວົງ.

ຜ່ານການກໍ່ສ້າງ ແລະ ບໍາລຸງພະນັກງານນໍາພາ-ຄຸ້ມຄອງ ຄືດັ່ງກ່າວສາມາດເຫັນໄດ້ວ່າ:ພະນັກງານນໍາພາ-ຄຸ້ມຄອງຢູ່ແຂວງຫຼວງນໍ້າທາ ໄດ້ເຕີບໃຫຍ່ຂະຫຍາຍຕົວດ້ານປະລິມານ ແລະ ຄຸນນະພາບນັບມື້ສູງຂຶ້ນ, ສາມາດເປັນຫຼັກແຫຼ່ງແກ່ນສານຂອງພັກ-ລັດຢູ່ແຕ່ລະກົມກອງທ້ອງຖິ່ນໃນການນໍາພາ-ຊີ້ນໍາ, ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ລະບຽບ, ກົດໝາຍຂອງລັດ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງຫຼວງນໍ້າທາ ໄດ້ຮັບການຈັດຕັ້ງປະຕິບັດມີຜົນສໍາເລັດເປັນກ້າວໆ, ເຮັດໃຫ້ທ້ອງຖິ່ນໄດ້ຮັບການພັດທະນາ, ຄວາມທຸກຍາກຂອງປະຊາຊົນໄດ້ຮັບການແກ້ໄຂໃຫ້ຫຼຸດໜ້ອຍຖອຍລົງເທື່ອລະກ້າວ, ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປ່ຽນແປງໃຫ້ນັບມື້ດີຂຶ້ນຢ່າງຈະແຈ້ງ.

ຄຽງຄູ່ກັບຜົນສໍາເລັດດັ່ງກ່າວນັ້ນ, ຖ້າທຽບໃສ່ຄວາມຮຽກຮ້ອງຕ້ອງການໃນປະຈຸບັນ ເຫັນວ່າຍັງບໍ່ທັນຕອບສະໜອງໄດ້ກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ແລະ ການຄຸ້ມຄອງບໍລິຫານລັດໃນເງື່ອນໄຂໃໝ່ກໍ່ຄືການພັດທະນາຂອງແຂວງຫຼວງນໍ້າທາໃນຕໍ່ໜ້າ ໄດ້ຢ່າງພຽງພໍ ແລະ ມີຫຼາຍບັນຫາທີ່ຄົງຄ້າງທີ່ຕ້ອງໄດ້ສືບຕໍ່ແກ້ໄຂມີດັ່ງນີ້:

1. ພະນັກງານທີ່ໄດ້ຮັບການກໍ່ສ້າງ-ບໍາລຸງຍົກລະດັບທິດສະດີ ແລະ ວິຊາສະເພາະ ແມ່ນມີຫຼາຍ, ແຕ່ຄຸນນະພາບບໍ່ທັນສູງ, ຢູ່ບາງຂົງເຂດຍັງບໍ່ທັນໄດ້ຮັບການກໍ່ສ້າງ-ບໍາລຸງເປັນລະບົບຕໍ່ເນື່ອງ ໂດຍສະເພາະແມ່ນພະນັກງານເພດຍິງຍັງບໍ່ໄດ້ຮັບການກໍ່ສ້າງຢ່າງຕັ້ງໜ້າ, ສ່ວນຫຼາຍແມ່ນເນັ້ນໃສ່ສ້າງແຕ່ພະນັກງານນໍາພາ-ຄຸ້ມຄອງເພດຊາຍ, ສ່ວນພະນັກງານນໍາພາ-ຄຸ້ມຄອງເພດຍິງແມ່ນຍັງມີໜ້ອຍບໍ່ທັນທົ່ວເຖິງ.

2. ການຂຶ້ນແຜນການກໍ່ສ້າງ ແລະ ບໍາລຸງພະນັກງານນໍາພາ-ຄຸ້ມຄອງ ຍັງຊັກຊ້າບໍ່ທັນລະອຽດຈະແຈ້ງໂດຍສະເພາະແມ່ນພະນັກງານນໍາພາ-ຄຸ້ມຄອງ ຢູ່ຂັ້ນເມືອງ, ການກໍ່ສ້າງ ແລະ ບໍາລຸງເປົ້າໝາຍຍັງບໍ່ຕິດພັນກັບການນໍາໃຊ້ເຮັດໃຫ້ບາງຂະແໜງການຂາດພະນັກງານ, ຜູ້ຮຽນຈົບມາແລ້ວຂາດການຕິດຕາມ, ຄຸ້ມຄອງ

ແລະ ນໍາໃຊ້ປະປ່ອຍ ຈຶ່ງເກີດມີສະພາບພະນັກງານເຫຼືອບໍ່ພໍຢູ່ບາງຂະແໜງການ.

3. ການເລືອກເປົ້າໝາຍໄປກໍ່ສ້າງ ແລະ ບໍາລຸງຍົກລະດັບຍັງບໍ່ທັນເລິກເຊິ່ງ, ຂາດການເລືອກເຟັ້ນແບບພາວະວິໄສ, ຈຶ່ງບໍ່ສາມາດຕອບສະໜອງໄດ້ກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງຂອງພັກແຕ່ລະໄລຍະ.

4. ການກໍ່ສ້າງ ແລະ ບໍາລຸງພະນັກງານນໍາພາ-ຄຸ້ມຄອງບາງໄລຍະ, ບາງດ້ານບໍ່ຕິດພັນກັບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ເຫັນແຕ່ຜົນປະໂຫຍດສະເພາະໜ້າ ບໍ່ເຫັນຜົນປະໂຫຍດອັນຍາວນານ; ສະນັ້ນ, ຈຶ່ງເກີດມີຄວາມຫຍຸ້ງຍາກໃນຫຼາຍດ້ານເຊັ່ນ: ການຈັດວາງ, ການບັນຈຸສັບຊ້ອນ ແລະ ການນໍາໃຊ້ພະນັກງານນໍາພາ-ຄຸ້ມຄອງ ຍັງບໍ່ທັນແທດເໝາະກັບຕົວຈິງ, ບໍ່ທັນຕອບສະໜອງໄດ້ຕາມຄວາມຕ້ອງການຂອງວຽກງານ ຍັງມີປາກົດການຄົນເຈົ້າ, ຄົນຂ້ອຍ, ຈຸ້ມເຊື້ອເຊື້ອສາຍ, ພະນັກງານນໍາພາຈໍານວນໜຶ່ງຍັງເລືອກວຽກຢາກໄປຢູ່ແຕ່ຂົງເຂດທີ່ມີລາຍຮັບສູງ ກົງກັນຂ້າມຂົງເຂດພັກ-ພະນັກງານພັດບໍ່ຢາກໄປຢູ່.

5. ການຕີລາຄາຈັດແບ່ງປະເພດຂອງພະນັກງານ, ການຈັດຕັ້ງແຕ່ລະຂັ້ນ, ເຖິງແມ່ນວ່າໄດ້ຮັບການປັບປຸງສໍາເລັດເປັນສ່ວນໃຫຍ່ ກໍຕາມແຕ່ການເຄື່ອນໄຫວນໍາພາບາງຂົງເຂດ ບໍ່ທັນດີ, ບໍ່ທັນເຄື່ອນໄຫວນໍາພາ-ຊີ້ນໍາຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ.

ຕໍ່ກັບບັນຫາຄົງຄ້າງຂ້າງເທິງນັ້ນ ວຽກງານການບໍາລຸງຍົກລະດັບພະນັກງານໄດ້ຖືກຈັດຕັ້ງປະຕິບັດໄປຕາມແນວທາງຂອງພັກ ຕາມທັດສະນະຂອງຜູ້ຂຽນເຫັນວ່າ ຄວນເອົາໃຈໃສ່ບາງດ້ານດັ່ງນີ້ຄວນໄດ້ປັບປຸງແກ້ໄຂ ແລະ ເອົາໃຈໃສ່ດັ່ງນີ້:

ໜຶ່ງ, ຄະນະພັກ, ຄະນະນໍາແຕ່ລະຂັ້ນ ຕ້ອງກໍາແໜ້ນວຽກງານພະນັກງານ ໂດຍສະເພາະຕ້ອງເອົາໃຈໃສ່ກໍ່ສ້າງ-ບໍາລຸງພະນັກງານໃຫ້ເປັນລະບົບຄົບຊຸດ, ການກໍ່ສ້າງ-ບໍາລຸງຍົກລະດັບພະນັກງານຕ້ອງປະຕິບັດຢ່າງຕໍ່ເນື່ອງລຽນຕິດ, ຕ້ອງຮັບປະກັນສ້າງໃຫ້ໄດ້ພະນັກງານທັງ 3 ປະເພດຄື: ພະນັກງານນໍາພາ, ພະນັກງານຄຸ້ມຄອງ ແລະ ພະນັກງານວິຊາການ; ຮັບປະກັນສ້າງພະນັກງານໃຫ້ໄດ້ທັງ 3 ລະບົບຄື: ການກໍ່ສ້າງໄລຍະຍາວ, ການບໍາລຸງໄລຍະສັ້ນ ແລະ ການກໍ່ສ້າງກັບທີ່, ຄະນະພັກແຕ່ລະຂັ້ນຕ້ອງຖືສໍາຄັນໃນການກໍ່ສ້າງ-ບໍາລຸງພະນັກງານໂດຍສະເພາະ ຕ້ອງເອົາໃຈໃສ່ສ້າງພະນັກງານຢູ່ແຕ່ລະຂະແໜງການ, ສ້າງພະນັກງານແຕ່ຮາກຖານຂຶ້ນມາ; ສິ່ງສໍາຄັນຕ້ອງຮັບປະກັນສ້າງພະນັກງານໃຫ້ໄດ້ອັດຕາສ່ວນເຊັ່ນ: ເພດຍິງ-ຊາຍ, ຊົນເຜົ່າ ແລະ ກະສຽນອາຍຸ.

ສອງ, ພາກສ່ວນເສນາທິການໃຫ້ແກ່ຄະນະພັກຂັ້ນເທິງ ຕ້ອງເປັນເຈົ້າການຂຶ້ນແຜນກໍານົດຕໍາແໜ່ງງານໃນແຕ່ລະປີໃຫ້ສອດຄ່ອງ, ລະອຽດຈະແຈ້ງ ເພື່ອສະດວກໃນການກໍານົດເປົ້າໝາຍສ້າງເປັນພະນັກງານສືບທອດປ່ຽນແທນໃນອະນາຄົດ ແລະ ຕ້ອງມີການກວດກາ, ປະເມີນຜົນການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງພະນັກງານນໍາພາ-ຄຸ້ມຄອງເປັນ ແຕ່ລະໄລຍະ.

ສາມ, ການຄັດເລືອກເອົາບັນດາເປົ້າໝາຍ ເພື່ອກໍ່ສ້າງ ແລະ ບໍາລຸງພະນັກງານນໍາພາ-ຄຸ້ມຄອງ ຕ້ອງເບິ່ງແບບສັດຈະວິພາກ ແລະພາວະວິໄສ, ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ມີການປຶກສາຫາລືເປັນເອກະພາບໃນໝູ່ຄະນະ, ອີງໃສ່ແຜນກໍານົດພະນັກງານ ແລະ ອີງໃສ່ຄວາມຮຽກຮ້ອງຕ້ອງການ ອັນຈໍາເປັນແລະຮີບດ່ວນຂອງວຽກງານ; ຄະນະພັກຂັ້ນຕ່າງໆ ຕ້ອງຖືເປັນຄວາມຮັບຜິດຊອບໂດຍກົງໃນການກໍານົດເປົ້າໝາຍການກໍ່ສ້າງ-ບໍາລຸງພະນັກງານນໍາພາ-ຄຸ້ມຄອງ ຕ້ອງຄໍານຶງເຖິງຄວາມສາມາດ, ຄວາມສາມັກຄີເປັນເອກະພາບ ແລະ ຄວາມສະເໝີພາບ.

ອ່ານຕໍ່ໜ້າ 40

ແຂວງວຽງຈັນ ເອົາໃຈໃສ່ບຳລຸງ-ກໍ່ສ້າງທິດສະດີ ການເມືອງ ໃຫ້ພະນັກງານ, ສະມາຊິກພັກ

ໂດຍ: ກົງແກ້ວ ອິນທະວົງ

ໃນເງື່ອນໄຂສະພາບແວດລ້ອມພາຍໃນ ແລະ ຕ່າງປະເທດ ມີທັງຂໍ້ສະດວກ ແລະ ສິ່ງທ້າທາຍຫຼາຍດ້ານ ເຊິ່ງໄດ້ສ້າງການປ່ຽນແປງໃໝ່ຢ່າງແຂງແຮງ ແລະ ມີຜົນກະທົບຕໍ່ທຸກຂົງເຂດວຽກງານ ໂດຍສະເພາະແມ່ນການບຳລຸງ-ກໍ່ສ້າງທິດສະດີການເມືອງ ໃຫ້ພະນັກງານ, ສະມາຊິກພັກ ເຊິ່ງມີຫຼາຍອັນປ່ຽນແປງໃໝ່ຢ່າງເລິກເຊິ່ງ ນັບແຕ່ສະພາບແວດລ້ອມ ຂອງການບຳລຸງ-ກໍ່ສ້າງ, ບົດບາດຂອງຄູ-ອາຈານ, ບົດບາດຂອງຜູ້ສຶກສາຄົ້ນຄ້ວາ ຕະຫຼອດຮອດວິທີການຄຸ້ມຄອງການຮຽນ-ການສອນ ກໍ່ມີການຫັນປ່ຽນໄປຕາມສະພາບຕົວຈິງ ໃນແຕ່ລະໄລຍະ. ການບຳລຸງ-ກໍ່ສ້າງທິດສະດີການເມືອງແມ່ນເພື່ອສ້າງຄວາມເຊື່ອໝັ້ນຕໍ່ອຸດົມການຂອງພັກ, ສ້າງທັດສະນະຫຼັກໝັ້ນການເມືອງທີ່ຖືກຕ້ອງ ໃຫ້ສະມາຊິກພັກ, ພະນັກງານນຳພາ-ຄຸ້ມຄອງ, ພະນັກງານ-ລັດຖະກອນ, ກຳລັງປະກອບອາວຸດ, ພະນັກງານວິສາຫະກິດຂອງລັດ, ຫຸ້ນສ່ວນເອກະຊົນ, ພະນັກງານຂັ້ນບ້ານ ເພື່ອເຮັດໃຫ້ທິດສະດີການເມືອງ ກາຍເປັນພື້ນຖານແນວຄິດ ແລະ ການກະທຳຂອງທົ່ວພັກ, ທົ່ວລັດ ແລະ ທົ່ວປວງຊົນ, ເຮັດໃຫ້ທຸກຄົນມີຄວາມຮັບຮູ້, ເຂົ້າໃຈ, ມີຄວາມເຊື່ອໝັ້ນ, ສະໜັບສະໜູນ ແລະ ຕື່ນຕົວປະຕິບັດແນວທາງນະໂຍບາຍຂອງພັກ ແລະ ລັດ ໃນແຕ່ລະໄລຍະ ໃຫ້ມີຜົນສຳເລັດເປັນຢ່າງດີ. ເພື່ອຍົກສູງຄຸນນະພາບການສຶກສາເວົ້າລວມ, ເວົ້າສະເພາະການບຳລຸງ-ກໍ່ສ້າງທິດສະດີການເມືອງ ກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ ໄດ້ເນັ້ນວ່າ: ສືບຕໍ່ປັບປຸງເນື້ອໃນຫຼັກສູດ ແລະ ວິທີສິດສອນໃນລະບົບສຶກສາສາມັນແຕ່ລະຂັ້ນ, ການສຶກສາດ້ານວິຊາຊີບ ແລະ ການສຶກສາຊັ້ນສູງ, ນັບທັງເນື້ອໃນຫຼັກສູດ ແລະ ວິທີສິດສອນ ໃນລະບົບກໍ່ສ້າງ ແລະ ຝຶກອົບຮົມຂົງເຂດການເມືອງ-ການປົກຄອງ, ເອົາໃຈໃສ່ສ້າງ, ຍົກລະດັບຫຼັກສູດບາງຂະແໜງການທີ່ສຳຄັນໃຫ້ທັນສະໄໝ, ຕອບສະໜອງຄວາມຮຽກຮ້ອງຕ້ອງການ ຂອງການສ້າງ ແລະ ສະໜອງບຸກຄະລາກອນທີ່ມີຄຸນນະພາບໃນຂົງເຂດນະວັດຕະກຳຕ່າງໆ, ສຸມໃສ່ສ້າງຖັນແຖວຄູ-ອາຈານເພື່ອຕອບສະໜອງຄວາມຕ້ອງການ ໃນລະບົບການສຶກສາທຸກລະດັບ ແລະ ຮັບປະກັນໃຫ້ຄົນລາວ ມີລະດັບການສຶກສາທີ່ມີຄຸນນະພາບ2.

ການບຳລຸງ-ກໍ່ສ້າງທິດສະດີການເມືອງ ໃຫ້ພະນັກ

ງານ, ສະມາຊິກພັກ ແມ່ນການພັດທະນາພະນັກງານຂອງພັກ, ລັດ, ອົງການຈັດຕັ້ງການເມືອງ-ສັງຄົມ, ແມ່ນຂະບວນການຮຽນຮູ້ ແລະ ຍົກລະດັບຢ່າງເປັນລະບົບ ແລະ ຕໍ່ເນື່ອງ ທັງໄລຍະສັ້ນ, ໄລຍະຍາວ ເພື່ອປະກອບຄວາມຮູ້ທິດສະດີການເມືອງ ເປັນຕົ້ນແມ່ນລັດທິມາກ-ເລນິນ, ແນວທາງນະໂຍບາຍຂອງພັກ ແລະ ກົດໝາຍຂອງລັດ, ສ້າງໃຫ້ພະນັກງານ, ສະມາຊິກພັກມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ກາຍເປັນພະນັກງານນຳພາ-ຄຸ້ມຄອງທີ່ມີຄຸນນະພາບ, ເປັນກຳລັງແຮງໃຫ້ແກ່ການປະຕິບັດພາລະກິດປະຕິວັດ. ເພື່ອຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ລັດ ໃນການບຳລຸງ-ກໍ່ສ້າງທິດສະດີການເມືອງໃຫ້ພະນັກງານ, ສະມາຊິກພັກ, ໂຮງຮຽນການເມືອງ ແລະ ການປົກຄອງແຂວງວຽງຈັນ ແມ່ນໂຮງຮຽນຂອງພັກຢູ່ຂັ້ນແຂວງ ເຊິ່ງຢູ່ພາຍໃຕ້ການນຳພາ-ຊີ້ນຳໂດຍກົງທາງດ້ານການເມືອງ-ແນວຄິດ ແລະ ການຈັດຕັ້ງຂອງຄະນະບໍລິຫານງານພັກ ແລະ ອົງການປົກຄອງແຂວງ, ພ້ອມນັ້ນ ກໍ່ຢູ່ພາຍໃຕ້ການນຳພາ-ຊີ້ນຳທາງດ້ານວິຊາສະເພາະ ແລະ ວິຊາການ ຂອງສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ເຊິ່ງເປັນບ່ອນບຳລຸງ-ກໍ່ສ້າງທິດສະດີການເມືອງ ໃຫ້ຖັນແຖວພະນັກງານ, ທີ່ມີຕຳແໜ່ງລະດັບຕົ້ນ, ລະດັບກາງຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ ຕາມຫຼັກສູດທີ່ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດວາງອອກ.

ການບຳລຸງ-ກໍ່ສ້າງທິດສະດີການເມືອງໃຫ້ພະນັກງານ, ສະມາຊິກພັກ ຢູ່ແຂວງວຽງຈັນ ໄດ້ດຳເນີນໄປຕາມຫຼັກສູດທີ່ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດມອບໝາຍໃຫ້ຄື: ຫຼັກສູດກໍ່ສ້າງລະບົບຂັ້ນກາງ, ຫຼັກສູດບຳລຸງລະບົບຂັ້ນຕົ້ນ, ຫຼັກສູດບຳລຸງໄລຍະສັ້ນ 45 ວັນ ແລະ ຫຼັກສູດບຳລຸງໄລຍະ10 ວັນ ສຳລັບຄະນະພັກບ້ານ, ນາຍບ້ານ. ໃນໄລຍະຜ່ານມາການກໍ່ສ້າງ-ບຳລຸງພະນັກງານ ໄດ້ຈຳນວນທັງໝົດ 4.883 ສະຫາຍ, ຍິງ 898 ສະຫາຍ ເຊິ່ງສະແດງອອກດັ່ງນີ້:

- ນັບແຕ່ປີ 2002-2022 ໄດ້ສຳເລັດການຈັດຕັ້ງປະຕິບັດຫຼັກສູດການຮຽນ-ການສອນທິດສະດີການເມືອງ ແລະ ການປົກຄອງ ລະບົບກໍ່ສ້າງຂັ້ນກາງທັງໝົດ 19 ຊຸດ, ມີນັກສຶກສາທັງໝົດ 1.090 ສະຫາຍ, ຍິງ 211 ສະຫາຍ; ໃນນັ້ນ, ມີພາກປົກກະຕິ ຈຳນວນ 15 ຊຸດ, ມີ 860 ສະຫາຍ, ຍິງ 183; ລະບົບພິເສດພາກຄ່ຳຈຳນວນ 4 ຊຸດ, ມີນັກສຶກສາຈຳນວນ 230, ຍິງ 28 ສະຫາຍ, ທຽບໃສ່ປີ 2015 ເພີ່ມຂຶ້ນ 359 ສະຫາຍ, ເທົ່າກັບ 25,90 %. ສຳລັບງົບປະມານໃນການກໍ່ສ້າງລະບົບຂັ້ນກາງນີ້ ແມ່ນງົບປະມານຂອງລັດຕາມການອະນຸມັດແຕ່ລະສົກປີ.

- ສຳເລັດຊຸດບຳລຸງທິດສະດີການເມືອງ ແລະ ການປົກຄອງຂັ້ນຕົ້ນ ໃຫ້ພະນັກງານຫຼັກແຫຼ່ງຂອງບັນດາພະແນກການ, ອົງການອ້ອມຂ້າງແຂວງ ແລະ ເມືອງ, ນັບແຕ່ປີ 2015-2022 ໄດ້ຈັດຕັ້ງປະຕິບັດຊຸດບຳລຸງຂັ້ນຕົ້ນໄດ້ທັງໝົດ 6 ຊຸດ, ມີຜູ້ເຂົ້າຝຶກອົບຮົມທັງໝົດ 386 ສະຫາຍ, ຍິງ 85 ສະຫາຍ; ໃນນັ້ນ, ປີ 2015 ມີຜູ້ເຂົ້າຝຶກອົບຮົມທັງໝົດ 29 ສະຫາຍ, ຍິງ 2 ສະຫາຍ; ປີ 2017 ມີ 77 ສະຫາຍ, ຍິງ 12 ສະຫາຍ; ປີ 2018 ຈັດຕັ້ງປະຕິບັດໄດ້ 2 ຊຸດ, ມີຜູ້ເຂົ້າຮ່ວມບຳລຸງທັງໝົດ 149 ສະຫາຍ, ຍິງ 40 ສະຫາຍ; ປີ 2022 ຈັດຕັ້ງປະຕິບັດໄດ້ 2 ຊຸດ, ມີຜູ້ເຂົ້າຮຽນຈຳນວນ 131 ສະຫາຍ, ຍິງ 31 ສະຫາຍ. ງົບປະມານສຳລັບຫຼັກສູດບຳລຸງຂັ້ນຕົ້ນ

ນີ້ ແມ່ນນຳໃຊ້ງົບປະມານຂອງຜູ້ຮຽນ ຫຼື ກົມກອງຕາມເງື່ອນໄຂຕົວຈິງ ເຊິ່ງຈັດຕັ້ງປະຕິບັດຢູ່ສູນຝຶກອົບຮົມຂອງເມືອງ ຫຼື ຂອງກົມກອງ, ຮາກຖານຕ່າງໆ.

- ສຳເລັດການບຳລຸງທິດສະດີການເມືອງ ແລະ ການປົກຄອງ ໄລຍະສັ້ນ 45 ວັນ ໃຫ້ພະນັກງານຫຼັກແຫຼ່ງຂອງພະແນກການ, ອົງການອ້ອມຂ້າງແຂວງ ແລະ ເມືອງ, ນັບແຕ່ປີ 2015-2022 ຈັດຕັ້ງປະຕິບັດໄດ້ທັງໝົດ 7 ຊຸດ, ພະນັກງານໄດ້ຮັບການບຳລຸງ ຈຳນວນ 439 ສະຫາຍ, ຍິງ 68 ສະຫາຍ; ທຽບໃສ່ປີ 2015 ເພີ່ມຂຶ້ນ 439 ສະຫາຍ ເທົ່າ 39,23%.

- ສຳເລັດການບຳລຸງທິດສະດີການເມືອງ ແລະ ການປົກຄອງ ໃຫ້ຄະນະພັກບ້ານ, ນາຍບ້ານ ແລະ ການຈັດຕັ້ງບ້ານ ຢູ່ໃນ 11 ເມືອງຂອງແຂວງ ນັບແຕ່ປີ 2018-2022 ໄດ້ທັງໝົດ 46 ຊຸດ, ມີຜູ້ເຂົ້າຝຶກອົບຮົມທັງໝົດ 1.849 ສະຫາຍ, ຍິງ 274 ສະຫາຍ; ໃນນັ້ນ, ປີ 2018 ມີຜູ້ເຂົ້າຮ່ວມຝຶກອົບຮົມທັງໝົດ 430 ສະຫາຍ, ຍິງ 36 ສະຫາຍ, ປະຕິບັດໄດ້ 99,30% ຂອງແຜນການ; ປີ 2019 ມີ 423 ສະຫາຍ, ຍິງ 63 ສະຫາຍປະຕິບັດໄດ້ 98,37% ຂອງແຜນການ; ປີ 2020 ມີ 417 ສະຫາຍ, ຍິງ 72 ສະຫາຍ, ປະຕິບັດໄດ້ 98,34% ຂອງແຜນການ; ປີ 2021 ມີ 405 ສະຫາຍ, ຍິງ 75 ສະຫາຍ ປະຕິບັດໄດ້ 95,51% ຂອງແຜນການ ແລະ ປີ 2022 ຈັດຕັ້ງປະຕິບັດໄດ້ 6 ຊຸດ, ມີຜູເຂົ້າຮ່ວມ 174 ສະຫາຍ, ຍິງ 28 ສະຫາຍ, ປະຕິບັດໄດ້ 41,03% ຂອງແຜນການ(1). ສຳລັບງົບປະມານໃນການຈັດຕັ້ງຝຶກອົບຮົມນີ້ ແມ່ນງົບປະມານຂອງລັດ ຕາມການອະນຸມັດໃນແຕ່ລະສົກປີ.

ພາຍຫຼັງສຳເລັດການກໍ່ສ້າງ ໄດ້ເຮັດໃຫ້ຜູ້ຮຽນມີຄວາມຮັບຮູ້ໃໝ່, ກຳແໜ້ນບັນດາຫຼັກມູນພື້ນຖານທິດສະດີມາກ-ເລນິນ, ເຊື່ອມຊຶມ ແລະ ກຳແໜ້ນແນວທາງນະໂຍບາຍຂອງພັກ, ທັງປັບປຸງແນວຄິດ, ຄຸນສົມບັດສິນທຳປະຕິວັດ, ທັດສະນະມະຫາຊົນ, ສາມາດຫັນເອົາທິດສະດີ, ແນວທາງນະໂຍບາຍຂອງພັກ ແລະ ກົດໝາຍຕ່າງໆຂອງລັດ ໃຫ້ກາຍເປັນແຜນງານ, ໂຄງການປະຕິບັດອັນລະອຽດຂອງຂະແໜງການ, ກົມກອງ, ທ້ອງຖິ່ນໃນວຽກງານຂອງຕົນຢ່າງມີໝາກຜົນ, ກາຍເປັນພະນັກງານຫຼັກແຫຼ່ງນຳພາຂະບວນການແຕ່ລະດ້ານ ຢູ່ທ້ອງຖິ່ນໃຫ້ຂະຫຍາຍຕົວຢ່າງແຂງແຮງ, ເຮັດໃຫ້ກົມກອງທ້ອງຖິ່ນມີການປ່ຽນແປງໃໝ່ຢ່າງຈະແຈ້ງ.

ໃນໄລຍະຜ່ານມາ, ເຖິງວ່າໂຮງຮຽນການເມືອງ ແລະ ການປົກຄອງຂວງວຽງຈັນ ໄດ້ເອົາໃຈໃສ່ບຳລຸງ-ກໍ່ສ້າງທິດສະດີການເມືອງ ໃຫ້ພະນັກງານ, ສະມາຊິກພັກ ດ້ວຍປະລິມານ ແລະ ຄຸນນະພາບທີ່ນັບມື້ເພີ່ມຂຶ້ນກໍ່ຕາມແຕ່ຖ້າທຽບໃສ່ກັບຄວາມຮຽກຮ້ອງຕ້ອງການຕົວຈິງ ໃນແຕ່ລະໄລຍະ ເຖິງວ່າຈະມີຜົນສຳເລັດຫຼາຍປານໃດກໍ່ຕາມເຫັນວ່າຍັງມີບາງຂໍ້ຄົງຄ້າງທີ່ຈະຕ້ອງໄດ້ສືບຕໍ່ແກ້ໄຂ ເພື່ອຍົກສູງຄຸນນະພາບການບຳລຸງ-ກໍ່ສ້າງທິດສະດີການເມືອງ ໃຫ້ພະນັກງານ, ສະມາຊິກພັກຢູ່ແຂວງວຽງຈັນຄື:

1). ການກໍ່ສ້າງທິດສະດີການເມືອງ ແລະ ການປົກຄອງລະບົບຊັ້ນກາງ ເຫັນວ່ານັກສຶກສາຈຳນວນໜຶ່ງປະຕິບັດລະບຽບຊຸດຮຽນ ແລະ ການຄົ້ນຄວ້າຮໍ່າຮຽນຍັງບໍ່ເຂັ້ມງວດ, ເປັນຕົ້ນການປະຕິບັດໂມງເວລາຂຶ້ນຮຽນ, ການກຽມສຳມະນາ, ການສຳມະນາຍັງບໍ່ທັນສັງລວມໄດ້ບົດຮຽນທີ່ເລິກເຊິ່ງ, ຄວາມເປັນເຈົ້າຕົນເອງໃນການປະຕິບັດລະບຽບຂອງຊຸດຮຽນ, ການປະຕິບັດ

ຕາມສິດ, ໜ້າທີ່ຕົນຍັງບໍ່ທັນເຂັ້ມງວດ, ການຊອກຮູ້ເກັບກຳຂໍ້ມູນພຶດຕິກຳຍັງບໍ່ທັນກວ້າງຂວາງ, ການຄົ້ນຄວ້າຮໍ່າຮຽນ, ອ່ານເອກະສານ ແລະ ນິຕິກຳຕ່າງໆ ເພື່ອປະກອບໃສ່ບົດຮຽນຍັງຈຳກັດ ເຊິ່ງສະແດງອອກໃນການສອບເສັງຂຽນ ແລະ ສອບເສັງລະດັບ ສມປຊ, ການຍົກທິດສະດີເພື່ອສົມທຽບໃສ່ພຶດຕິກຳບາງບັນຫາຍັງຈຳກັດ. ອີກດ້ານໜຶ່ງພື້ນຖານໂຄງລ່າງ, ອຸປະກອນຮັບໃຊ້ໃນຊຸດຮຽນເກົ່າແກ່ຊຸດໂຊມ, ບໍ່ທັນຕອບສະໜອງໄດ້ຄວາມຮຽກຮ້ອງຕ້ອງການດີເທົ່າທີ່ຄວນ.

2). ໃນລະບົບບຳລຸງຊັ້ນຕົ້ນ ແລະ ບຳລຸງ 45 ວັນ, ນັກສຶກສາມີຫຼາຍລະດັບທີ່ແຕກຕ່າງກັນ ຈຳນວນໜຶ່ງຄົ້ນຄວ້າຮໍ່າຮຽນຍັງບໍ່ທັນຕັ້ງໜ້າເທົ່າທີ່ຄວນ ເຊິ່ງສະແດງອອກໃນບາງສະຫາຍການສົມທຽບທິດສະດີ ແລະ ໃສ່ພຶດຕິກຳຍັງຈຳກັດ.

3). ເນື້ອໃນຕຳລາ, ຫຼັກສູດບຳລຸງ 10 ວັນ ໃຫ້ຄະນະພັກບ້ານ, ນາຍບ້ານ ມາຮອດປະຈຸບັນແມ່ນເກົ່າສົມຄວນ, ບໍ່ສອດຄ່ອງກັບສະພາບຕົວຈິງ, ເປັນຕົ້ນນິຕິກຳຕ່າງໆ, ບໍ່ທັນສ່ອງແສງບັນຫາໃນການຈັດຕັ້ງປະຕິບັດວຽກງານຕົວຈິງຂອງບ້ານຫຼາຍເທື່ອ, ເຮັດໃຫ້ເກີດມີຄວາມສັບສົນຕໍ່ການຮຽນ-ການສອນ.

4). ການບຳລຸງ, ການຄົ້ນຄວ້າການເລືອກເຟັ້ນເປົ້າໝາຍພະນັກງານ, ສະມາຊິກພັກຂັ້ນບ້ານ ເຂົ້າມາຮຽນຍັງມີຄວາມຫຍຸ້ງຍາກ, ບາງບ້ານບໍ່ມີຜູ້ເຂົ້າຝຶກອົບຮົມ, ເນື່ອງຈາກການກໍ່ສ້າງພະນັກງານສືບທອດປ່ຽນແທນຂັ້ນບ້ານຍັງບໍ່ຕໍ່ເນື່ອງ, ການຂະຫຍາຍພັກຍັງຈຳກັດ, ບາງບ້ານບໍ່ໄດ້ຕາມມາດຕະຖານເງື່ອນໄຂ, ເຮັດໃຫ້ຕົວເລກບຸກຄະລາກອນທີ່ເຂົ້າບຳລຸງບໍ່ຄົບຖ້ວນ ເຊິ່ງແຕ່ລະປີຈະຫຼຸດລົງ, ບໍ່ບັນລຸຕາມແຜນທີ່ວາງໄວ້.

ເພື່ອປະກອບສ່ວນແກ້ໄຂບັນຫາທີ່ກ່າວມາຂ້າງເທິງນັ້ນ ແລະ ເປັນການຍົກສູງຄຸນນະພາບການບຳລຸງ-ກໍ່ສ້າງທິດສະດີການເມືອງ ໃຫ້ພະນັກງານ, ສະມາຊິກພັກຢູ່ແຂວງວຽງຈັນໃນຕໍ່ໜ້າ ຄວນເອົາໃຈໃສ່ບາງວິທີການຄື:

ໜຶ່ງ, ເພີ່ມທະວີການຄຸ້ມຄອງລະບົບກໍ່ສ້າງຊັ້ນກາງໃຫ້ສູງຂຶ້ນອີກ, ໂດຍສະເພາະຕໍ່ໜ້ານີ້ຈະຫັນໄປສູ່ການບຳລຸງສ້າງທິດສະດີການເມືອງຂັ້ນກາງໃຫ້ພະນັກງານຢູ່ຂັ້ນທ້ອງຖິ່ນ ຕາມຫຼັກສູດທີ່ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດມອບໝາຍໃຫ້. ຄວນເອົາໃຈໃສ່ເລີ່ມແຕ່ຄັດເລືອກບຸກຄະລາກອນເຂົ້າມາກໍ່ສ້າງໃຫ້ຖືກຕາມມາດຖານເງື່ອນໄຂ, ຍົກສູງດ້ານລະບຽບເພື່ອບໍລິຫານ-ຄຸ້ມຄອງການກໍ່ສ້າງດັ່ງກ່າວ ຢູ່ພາຍໃນໂຮງຮຽນໃຫ້ເຂັ້ມງວດເຊັ່ນ: ກົດລະບຽບຊຸດຮຽນ, ການສອບເສັງ, ການຄົ້ນຄວ້າສົນທະນາໃນໜ່ວຍ, ລວມຫ້ອງ, ການປະເມີນຜົນການຮຽນ, ປະເມີນການສອນຂອງຄູ, ການກິນຢູ່ພັກເຊົາ ແລະ ອື່ນໆ ລວມທັງການໄປທັດສະນະສຶກສາແລກປ່ຽນບົດຮຽນ ຢູ່ຂະແໜງການຕ່າງໆ ເພື່ອເປັນການຖອດຖອນບົດຮຽນ ແລະ ຍົກສູງດ້ານພຶດຕິກຳໃຫ້ຫຼາຍຂຶ້ນ; ພ້ອມນັ້ນ, ກໍ່ຍົກສູງລະບຽບການດ້ານຕ່າງໆ ທີ່ພົວພັນເຖິງຄວາມເປັນລະບຽບຮຽບຮ້ອຍໃນໂຮງຮຽນ.

ສອງ, ຍົກສູງຄຸນນະພາບການບຳລຸງທິດສະດີການເມືອງຂັ້ນຕົ້ນ ແລະ 45 ວັນໃຫ້ພະນັກງານ ຢູ່ແຂວງວຽງຈັນໃນຕໍ່ໜ້າ ຄວນເອົາໃຈໃສ່ຈັດຕັ້ງປະຕິບັດຕາມເນື້ອໃນໂຄງການຫຼັກສູດຂັ້ນຕົ້ນ ທີ່ທາງສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດໄດ້ຮັບຮອງ ແລະ ປະກາດໃຊ້ໃຫ້ເຂັ້ມງວດ ໂດຍເນັ້ນຄຸນນະພາບເປັນກົກ,

ຖືເອົາການຮຽນ-ການສອນ ທີ່ເອົາຜູ້ຮຽນເປັນໃຈກາງ ເປັນສຳຄັນ. ໃນເງື່ອນໄຂທີ່ຜູ້ຮຽນມາຈາກຫຼາຍຂົງເຂດ ທີ່ມີລະດັບແຕກຕ່າງກັນ, ຄູ-ອາຈານສອນ ຄວນເພີ່ມ ການຄົ້ນຄວ້າບົດສອນ, ວິທີນຳພານັກສຶກສາຄົ້ນຄວ້າ ຮໍ່າຮຽນ ໂດຍໃຊ້ຫຼາຍຮູບແບບການຮຽນ-ການສອນ ທີ່ມີປະສິດທິພາບ.

ສາມ, ຄົ້ນຄວ້າປັບປຸງເນື້ອໃນຫຼັກສູດການຮຽນ-ການສອນ ສຳລັບຄະນະພັກບ້ານ, ນາຍບ້ານ ໃຫ້ສອດຄ່ອງກັບແນວທາງຂອງພັກ, ນະໂຍບາຍ, ລະບຽບການຂອງລັດ, ສອດຄ່ອງກັບການພັດທະນາເສດຖະກິດ-ສັງຄົມໃນປະຈຸບັນ ແລະ ຫັນໄປສູ່ການສິດສອນແບບໃໝ່ ທີ່ເອົາຜູ້ຮຽນເປັນໃຈກາງ, ນຳເອົາບັນຫາຕ່າງໆທີ່ພົ້ນເດັ່ນໃນທ້ອງຖິ່ນຮາກຖານເຂົ້າມາສຶກສາຄົ້ນຄວ້າ ໃນຫ້ອງຮຽນ ເພື່ອຊອກຫາຄຳຕອບ ແລະ ວິທີແກ້ໄຂ, ຄວນເນັ້ນໜັກການປະຕິບັດຕົວຈິງວຽກງານຂອງບ້ານ ເປັນບັນຫາສຳຄັນເຊັ່ນ: ໃຫ້ຜູ້ຮຽນຝຶກຄວາມສາມາດປາກເວົ້າ, ຝຶກສ້າງແຜນການ, ຝຶກດ້ານຕ່າງໆ ຕາມເນື້ອໃນບົດຮຽນ.

ສີ່, ເພື່ອເຮັດໃຫ້ການບຳລຸງທິດສະດີການເມືອງ ແລະ ການປົກຄອງ ໃຫ້ພະນັກງານຂັ້ນບ້ານ ມີຄວາມເຕີບໃຫຍ່ຂະຫຍາຍຕົວ, ແນໃສ່ສ້າງຄວາມເຂັ້ມແຂງໃຫ້ການຈັດຕັ້ງບ້ານ; ຄະນະຈັດຕັ້ງເມືອງ, ຄະນະພັກບ້ານ ຄວນເພີ່ມທະວີການຂຶ້ນແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ຂອງຮາກຖານບ້ານຢ່າງເປັນລະບົບ ໂດຍຕິດພັນກັບໜ້າທີ່ການເມືອງ ເພື່ອຮັບປະກັນລັກສະນະສືບທອດປ່ຽນແທນຕຳແໜ່ງຕ່າງໆ ໃຫ້ມີລັກສະນະຕໍ່ເນື່ອງ, ຮັບປະກັນໂຄງປະກອບດ້ານເພດ, ເຜົ່າ, ລັກສະນະສົມສ່ວນລະຫວ່າງຮຸ່ນພະນັກງານ (ຮຸ່ນອາວຸໂສ, ກາງ ແລະ ໜຸ່ມ), ທັງຮັບປະກັນທາງດ້ານມາດຕະຖານ, ເງື່ອນໄຂ ແລະ ຄຸນນະພາບ ແນໃສ່ສ້າງໃຫ້ເປັນກຳລັງທີ່ເຂັ້ມແຂງ ໃນການນຳພາ-ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດວຽກງານຢູ່ຂັ້ນບ້ານ ໃຫ້ນັບມື້ຄຸນນະພາບດີຂຶ້ນເລື້ອຍໆ.

ສັງລວມແລ້ວ ການກໍ່ສ້າງ-ບຳລຸງທິດສະດີການເມືອງ ແລະ ການປົກຄອງ ໃຫ້ພະນັກງານເປັນໜ້າທີ່ພື້ນຖານທຳອິດ, ເປັນປັດໄຈຕັດສິນຂະບວນການປະຕິວັດ ທີ່ພັກເຮົາໄດ້ໃຫ້ຄວາມສຳຄັນ ແລະ ເອົາໃຈໃສ່ຢ່າງຕັ້ງໜ້າ. ດ້ວຍເຫດນັ້ນ, ການບຳລຸງ-ກໍ່ສ້າງທິດສະດີການເມືອງ ໃຫ້ພະນັກງານ, ສະມາຊິກພັກແມ່ນຄວາມຮັບຜິດຊອບໂດຍກົງຂອງຄະນະພັກແຕ່ລະຂັ້ນ ເພື່ອສ້າງໃຫ້ໄດ້ພະນັກງານທີ່ມີຄວາມຮູ້ທີ່ໜັກແໜ້ນທາງດ້ານທິດສະດີ ຢູ່ແຂວງວຽງຈັນ ສາມາດຕອບສະໜອງໄດ້ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງຂອງພັກ-ລັດ ໃນແຕ່ລະໄລຍະ; ອີກດ້ານໜຶ່ງ ຄະນະພັກ, ຄະນະອຳນວຍການໂຮງຮຽນ, ພາກສ່ວນທີ່ກ່ຽວຂ້ອງ ຈະໄດ້ກຳແໜ້ນບັນດາແນວທາງ, ຂໍ້ກຳນົດ, ນິຕິກຳຕ່າງໆ ແລະ ສ້າງເງື່ອນໄຂເອື້ອອຳນວຍ ໃຫ້ແກ່ການບຳລຸງ-ກໍ່ສ້າງທິດສະດີການເມືອງ ໃຫ້ພະນັກງານ, ສະມາຊິກພັກ ໃຫ້ດຳເນີນເປັນຢ່າງດີ; ພ້ອມນັ້ນ, ກົມກອງ, ພະນັກງານ, ສະມາຊິກພັກເອງ ກໍ່ຕ້ອງຕັ້ງໜ້າບຶນຕົວຝຶກຝົນຕົນເອງສ້າງຄວາມຮັບຮູ້, ເຂົ້າໃຈຢ່າງເລິກເຊິ່ງ ເພື່ອຮັບໃຊ້ພາລະກິດປະຕິວັດ ໃນສະເພາະໜ້າ ແລະ ຍາວນານ ໃຫ້ໄດ້ເປັນຢ່າງດີ...ຯ

ຍົກສູງຄຸນທາດການເມືອງ ໃຫ້ຖັນແຖວພະນັກງານ-ສະມາຊິກພັກ ຢູ່ແຂວງຈຳປາສັກ

ໂດຍ: ສາຍຝົນ ກັນຍາ

ພັກເຮົາຍາມໃດກໍ່ໄດ້ເລັ່ງທວງ ໃຫ້ຖັນແຖວພະນັກງານ, ສະມາຊິກພັກມີຄຸນທາດການເມືອງທີ່ໜັກແໜ້ນ, ຍົກສູງຄຸນສົມບັດສິນທຳປະຕິວັດ, ມີຄວາມຮູ້, ຄວາມສາມາດ, ມີທາດແທ້ຫຼັກໝັ້ນການເມືອງຂອງຊົນຊັ້ນກຳມະກອນທີ່ເຂັ້ມແຂງ, ມີຄວາມຈົງຮັກພັກດີຕໍ່ປະເທດຊາດ ຕໍ່ພາລະກິດປະຕິວັດຂອງພັກ, ມີຄວາມຊື່ສັດບໍລິສຸດ, ມີນໍ້າໃຈຮັບໃຊ້ຊາດ, ຮັບໃຊ້ປະຊາຊົນ, ມີແບບແຜນດຳລົງຊີວິດທີ່ປອດໃສຂາວສະອາດ, ມີຄວາມກະຕືລືລົ້ນຫ້າວຫັນບຸກບືນສູ້ຊົນຝຶກຝົນຫຼໍ່ຫຼອມກໍ່ສ້າງຕົນເອງ ແລະ ອອກແຮງຄົ້ນຄວ້າຮໍ່າຮຽນ ເຊິ່ງແມ່ນຄວາມຮຽກຮ້ອງຕ້ອງການພາວະວິໄສ ແລະ ເປັນພື້ນຖານທີ່ສຳຄັນ ທັງແມ່ນຄວາມຈຳເປັນຮີບດ່ວນໃນພາລະກິດປ່ຽນແປງໃໝ່ ເພື່ອຍົກລະດັບຄວາມຮູ້ໃນທຸກດ້ານ ທັງປະຕິບັດລະບຽບວິໄນ, ມີສະຕິເຄົາລົບການຈັດຕັ້ງ ແລະ ກົດໝາຍຢ່າງເຂັ້ມງວດ. ໂດຍສະເພາະປະຈຸບັນ ພາຍໃຕ້ສະພາບການຂອງໂລກ ແລະ ພາກພື້ນຜັນແປໄປຢ່າງສະຫຼັບສັບຊ້ອນ ແລະ ຄາດຄະເນໄດ້ຍາກ; ສະພາບພາຍໃນປະເທດ ຍັງສືບຕໍ່ປະເຊີນໜ້າກັບສິ່ງທ້າທາຍຫຼາຍຢ່າງ ບັນຫາຕົ້ນຕໍແມ່ນສືບເນື່ອງມາຈາກສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ສະພາບໄພທຳມະຊາດ, ພະຍາດລະບາດ, ບັນຫາຊາຍແດນ, ບັນດາອິດທິກຳລັງປໍລະປັກ ແລະ ກຸ່ມຄົນບໍ່ຫວັງດີ ເຊິ່ງໄດ້ສົ່ງຜົນສະທ້ອນທາງລົບຕໍ່ການຮັກສາຄຸນທາດການເມືອງຂອງພະນັກງານ-ສະມາຊິກພັກຂອງພວກເຮົາ.

ສະແດງອອກໃນມະຕິກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດ ຄັ້ງທີ XI ໄດ້ຕີລາຄາໄວ້ວ່າ: ການເສື່ອມຖອຍຄຸນທາດດ້ານການເມືອງ, ຄຸນສົມບັດ ແລະ ມານະຈິດປະຕິວັດໃນຖັນແຖວພະນັກງານ-ສະມາຊິກພັກ ຍັງເປັນບັນຫາທີ່ໜ້າເປັນຫ່ວງຂອງພັກ ແລະ ສັງຄົມ, ສືບຕໍ່ສົ່ງຜົນກະທົບຕໍ່ບົດບາດການນຳພາ ຂອງພັກ ແລະ ລະບອບໃໝ່; ຍັງມີສະມາຊິກພັກ-ພະນັກງານຈຳນວນບໍ່ໜ້ອຍຂາດຄວາມເປັນເຈົ້າໃນການຈັດຕັ້ງປະຕິບັດໜ້າທີ່ທີ່ຖືກມອບໝາຍ, ນໍ້າໃຈເສຍສະລະ ເພື່ອຜົນປະໂຫຍດສ່ວນລວມບໍ່ທັນສູງ ແລະ ບໍ່ກ້າຕໍ່ສູ້ຕ້ານກັບທ່າອ່ຽງ ແລະ ປະກົດການຜິດເຂວ; ການເລືອກວຽກທີ່ມີແອບແຝງດ້ານຜົນປະໂຫຍດສ່ວນຕົວ ພ້ອມທັງປະກົດການ ສວຍໃຊ້ຕຳແໜ່ງໜ້າທີ່ ເພື່ອຫາຜົນປະໂຫຍດ

ສ່ວນຕົວ ແລະ ກຸ່ມກ້ອນທາງກົງ ຫຼື ທາງອ້ອມຂອງເຈົ້າໜ້າທີ່ລັດຍັງເປັນຈຸດມໍລະສຸມທີ່ສັງຄົມເລັ່ງເປົ້າວິພາກວິຈານ ແລະ ລະແວງສົງໄສເຖິງຄວາມເດັດຂາດ ກໍ່ຄື ຄວາມສາມາດຂອງພັກ ແລະ ລັດເຮົາ ໃນການນຳພາການແກ້ໄຂບັນຫາປະກົດການຫຍໍ້ທໍ້ຢູ່ພາຍໃນພັກ ແລະ ໃນສັງຄົມ.

ຕໍ່ກັບການຕີລາຄາໃນມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ ອີງຄະນະພັກແຂວງຈຳປາສັກ ເວລາໃດກໍ່ຖືເອົາບັນຫາຄຸນທາດການເມືອງເປັນບັນຫາສຳຄັນຕົ້ນຕໍກວ່າໝູ່ແມ່ນມາດຕະຖານອັນໜຶ່ງ ຂອງພະນັກງານປະຕິວັດ, ການຍົກສູງຄຸນທາດການເມືອງ ຂອງພະນັກງານ ແມ່ນການຍົກສູງທາດແທ້ປະຕິວັດ, ທັດສະນະຫຼັກໝັ້ນຊົນຊັ້ນ, ຄວາມຈົງຮັກພັກດີຕໍ່ພາລະກິດປະຕິວັດ ແລະ ອຸດົມການຂອງພັກ, ກໍ່ຄືຕໍ່ຊາດ ແລະ ປະຊາຊົນ; ມັນແມ່ນເນື້ອໃນອັນໜຶ່ງສຸດທີ່ສຳຄັນໃນການກໍ່ສ້າງຖັນແຖວພະນັກງານໃຫ້ມີຄຸນນະພາບຂອງພັກປະຊາຊົນປະຕິວັດລາວໃນເງື່ອນໄຂພັກກຳອຳນາດນຳພາພາລະກິດກໍ່ສ້າງ ແລະ ຂະຫຍາຍລະບອບປະຊາທິປະໄຕປະຊາຊົນຕາມທິດກ້າວຂຶ້ນສູ່ສັງຄົມນິຍົມ; ຄຸນທາດການເມືອງຂອງພະນັກງານ ແມ່ນທາດແທ້ປະຕິວັດ, ຄວາມຊື່ສັດບໍລິສຸດ, ຄວາມຈົງຮັກພັກດີຕໍ່ຊາດ, ຕໍ່ປະຊາຊົນ, ຕໍ່ພັກ ແລະ ຕໍ່ພາລະກິດປະຕິວັດ. ແມ່ນທັດສະນະຫຼັກໝັ້ນຊົນຊັ້ນ, ທັດສະນະປະຕິວັດ, ທັດສະນະມະຫາຊົນ. ຄວາມເດັດດ່ຽວໜຽວແໜ້ນ ສູ້ຊົນຜ່ານຜ່າອຸປະສັກ ເພື່ອສຳເລັດໜ້າທີ່ການເມືອງທີ່ໄດ້ຮັບຜິດຊອບ ແລະ ແມ່ນການເພີ່ມທະວີ, ການເອົາໃຈໃສ່ຕໍ່ການປະຕິບັດໜ້າທີ່-ທີ່ໄດ້ຮັບການມອບໝາຍ.

ໃນໄລຍະຜ່ານມາ ຄະນະພັກແຕ່ລະຂັ້ນ ໄດ້ເອົາໃຈໃສ່ ແລະ ຖືເປັນວຽກງານຍຸດທະສາດສຳຄັນຂອງພັກໃນການກໍ່ສ້າງພັກທາງດ້ານການເມືອງ ເພາະແມ່ນການກຳນົດທາດແທ້ ແລະ ລັກສະນະນຳໜ້າຂອງພັກເຮົາ, ມີແນວທາງການເມືອງທີ່ຖືກຕ້ອງ ຈຶ່ງມີແນວທາງການຈັດຕັ້ງ ແລະ ກຳນົດວຽກງານແນວຄິດໄດ້ຢ່າງຖືກຕ້ອງ ໂດຍຍຶດໝັ້ນທັດສະນະດັ່ງກ່າວ ເຮັດໃຫ້ຄະນະພັກແຕ່ລະຂັ້ນມີແບບແຜນນຳພາທີ່ຖືກຕ້ອງ, ມີການເຄົາລົບ ແລະ ປະຕິບັດບັນດາຫຼັກການຂອງພັກ, ເຄື່ອນໄຫວຕາມໜ້າທີ່, ສິດຂອງຄະນະພັກ ແລະ ສະມາຊິກພັກທີ່ກຳນົດໃນກົດລະບຽບພັກ ສະໄໝທີ XI ຢ່າງເຂັ້ມງວດ; ພ້ອມກັນນັ້ນ, ກໍ່ໄດ້ເອົາໃຈໃສ່ຈັດຕັ້ງຄົ້ນຄວ້າ,ຮໍ່າຮຽນທິດສະດີມາກ-ເລນິນ, ແນວຄິດ ໄກສອນ ພົມວິຫານ, ແນວທາງນະໂຍບາຍ, ກົດລະບຽບພັກ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໂດຍສະເພາະແມ່ນມະຕິກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດ ຄັ້ງ XI ຂອງພັກ, ກົດລະບຽບພັກ ສະໄໝທີ XI, ມະຕິກອງປະຊຸມວຽກງານຈັດຕັ້ງທົ່ວປະເທດ ຄັ້ງທີ XI, ມະຕິກອງປະຊຸມໃຫຍ່ ຜູ້ແທນອົງຄະນະພັກແຂວງ ຄັ້ງທີ VIII, ກອງປະຊຸມວຽກງານຈັດຕັ້ງ ທົ່ວແຂວງ ຄັ້ງທີ IV, ບັນດານິຕິກຳຂອງສູນກາງພັກ, ລັດຖະບານ ຕິດພັນກັບບັນດາມະຕິກອງປະຊຸມໃຫຍ່ຂັ້ນຕົນຢ່າງເລິກເຊິ່ງ ແລະ ກວ້າງຂວາງ ພ້ອມທັງຫັນເອົາແນວທາງນະໂຍບາຍຂອງພັກ ມາເປັນແຜນງານ, ໂຄງການ, ໜ້າວຽກລະອຽດຂອງແຕ່ລະຂະແໜງການ ແນໃສ່ເຮັດໃຫ້ພັກມີຄວາມເຂັ້ມແຂງທາງດ້ານການເມືອງ ແລະ ສ້າງຄວາມເຊື່ອໝັ້ນໃຫ້ແກ່ຖັນແຖວສະມາຊິກພັກ-ພະນັກງານ ມີທັດສະນະທີ່ຖືກຕ້ອງ, ມີຄວາມສາມັກຄີເປັນເອກະພາບສູງຢູ່ພາຍໃນພັກ

ກໍຄືຄວາມປົກແຜ່ນຢູ່ພາຍໃນທ້ອງຖິ່ນຮາກຖານຂອງຕົນຕິດພັນກັບການຈັດຕັ້ງ, ເຊື່ອມຊຶມ, ເຜີຍແຜ່ຮໍ່າຮຽນບັນດາມະຕິ, ຄໍາສັ່ງ, ຂໍ້ກໍານົດ, ຄໍາແນະນໍາ ແລະ ນິຕິກໍາຕ່າງໆ ຂອງສູນກາງພັກ-ລັດຖະບານ, ຂອງແຂວງ ແລະ ປາຖະກະຖາເລົ່າມູນເຊື້ອວັນສໍາຄັນຕ່າງໆຂອງພັກ-ຂອງຊາດ ເຊິ່ງໄດ້ຈັດຂຶ້ນ ລວມທັງໝົດ 384 ຄັ້ງ ມີຈໍານວນຜູ້ເຂົ້າຮ່ວມທັງໝົດ 39.522 ເທື່ອຄົນ, ຍິງ 14.483 ເທື່ອຄົນ; ໃນນັ້ນ, ສະມາຊິກພັກ 20.878 ເທື່ອສະຫາຍ, ຍິງ 6.334 ເທື່ອສະຫາຍ; ພະນັກງານ-ລັດຖະກອນທີ່ບໍ່ແມ່ນສະມາຊິກພັກ 18.308 ເທື່ອຄົນ, ຍິງ 8.067 ເທື່ອຄົນ.

ຄຽງຄູ່ກັນນັ້ນ, ຍັງໄດ້ເອົາໃຈໃສ່ປັບປຸງ, ກໍ່ສ້າງພັກທາງດ້ານການຈັດຕັ້ງ ໃຫ້ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ ສາມາດປະຕິບັດພາລະບົດບາດເປັນແກນນໍາໃນລະບົບການເມືອງຢູ່ແຕ່ລະຂັ້ນ, ເຮັດໃຫ້ລະບົບການຈັດຕັ້ງຂອງພັກມີຄວາມເຕີບໃຫຍ່ເຂັ້ມແຂງ, ຖັນແຖວສະມາຊິກພັກຂະຫຍາຍຕົວທັງດ້ານຈໍານວນ ແລະ ຄຸນນະພາບ; ການຂະຫຍາຍສະມາຊິກພັກ ແລະ ກິ່ງຈັກການຈັດຕັ້ງພັກ ຕິດພັນກັບກິ່ງຈັກການຈັດຕັ້ງບໍລິຫານລັດຂອງບັນດາພະແນກການ-ກົມກອງອ້ອມຂ້າງແຂວງ, ເມືອງ-ນະຄອນ; ປັບປຸງພາລະບົດບາດ, ສັບຊ້ອນ, ຈັດວາງຄະນະພັກຂັ້ນຕ່າງໆ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ ສາມາດນໍາພາຈັດຕັ້ງປະຕິບັດໄດ້.

ປະຈຸບັນ ທົ່ວອົງຄະນະພັກແຂວງມີ 12 ອົງຄະນະພັກຄື: ມີອົງຄະນະພັກເມືອງ 9 ເມືອງ, ອົງຄະນະພັກນະຄອນປາກເຊ, ອົງຄະນະພັກກອງບັນຊາການທະຫານແຂວງ ແລະ ອົງຄະນະພັກກອງບັນຊາການປ້ອງກັນຄວາມສະຫງົບແຂວງ; ມີຄະນະພັກຮາກຖານທັງໝົດ 222 ຮາກຖານ; ໜ່ວຍພັກ 1.759 ໜ່ວຍ (ທຽບໃສ່ປີ 2021 ເພີ່ມຂຶ້ນ 9 ໜ່ວຍ, ເທົ່າກັບ 0,51%) ໃນນັ້ນ, ໜ່ວຍພັກຮາກຖານ 296 ໜ່ວຍ, ໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ 1.463 ໜ່ວຍ; (ສໍາລັບຢູ່ອົງຄະນະພັກເມືອງ-ນະຄອນມີຄະນະພັກຮາກຖານ 180 ຮາກຖານ, ໜ່ວຍພັກຮາກຖານ 257 ໜ່ວຍ ແລະ ໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ 1.218 ໜ່ວຍ; ອົງຄະນະພັກກອງບັນຊາການທະຫານແຂວງ ແລະ ກອງບັນຊາການປ້ອງກັນຄວາມສະຫງົບແຂວງ ມີຄະນະພັກຮາກຖານ 21 ຮາກຖານ, ໜ່ວຍພັກຮາກຖານ 17 ໜ່ວຍ ແລະ ໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ 106 ໜ່ວຍ; ຄະນະພັກຮາກຖານພະແນກການ ແລະ ທຽບເທົ່າ 21 ຮາກຖານ, ໜ່ວຍພັກຮາກຖານ 22 ໜ່ວຍ ແລະ ໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ 139 ໜ່ວຍ); ມາເຖິງປະຈຸບັນໜ່ວຍພັກທີ່ໄດ້ປະເມີນສໍາເລັດ 375 ໜ່ວຍ (ເທົ່າກັບ 31,31% ຂອງໜ່ວຍພັກທັງໝົດ) ໃນນັ້ນ, ປະເມີນເປັນໜ່ວຍພັກແຂງ 371 ໜ່ວຍ (ເທົ່າກັບ 98,93%), ໜ່ວຍພັກກາງ 4 ໜ່ວຍ (ເທົ່າກັບ 1,07%) ຂອງໜ່ວຍພັກທີ່ຖືກປະເມີນ; ໜ່ວຍພັກຍັງບໍ່ທັນໄດ້ປະເມີນ 1.384 ໜ່ວຍ (ເທົ່າກັບ 78,68% ຂອງໜ່ວຍພັກທັງໝົດ).

ທົ່ວແຂວງມີສະມາຊິກພັກທັງໝົດ 29.745 ສະຫາຍ, ຍິງ 7.927 ສະຫາຍ, ໃນນັ້ນ ສະມາຊິກພັກສົມບູນ 27.644 ສະຫາຍ, ຍິງ 7.392 ສະຫາຍ ແລະ ສະມາຊິກພັກສໍາຮອງ 2.101 ສະຫາຍ, ຍິງ 635 ສະຫາຍ ແລະ ໄດ້ປະເມີນສະມາຊິກພັກສໍາເລັດແລ້ວ 5.461 ສະຫາຍ, ຍິງ 1.166 ສະຫາຍ ເທົ່າກັບ 18,35% ຂອງ

ສະມາຊິກພັກທັງໝົດ ໃນນັ້ນ, ມີສະມາຊິກພັກແຂງ 5.454 ສະຫາຍ, ຍິງ 1.166 ສະຫາຍ ເທົ່າກັບ 99,87%, ສະມາຊິກພັກກາງ 4 ສະຫາຍ ເທົ່າກັບ 0,07%, ສະມາຊິກພັກອ່ອນ 3 ສະຫາຍ ເທົ່າກັບ 0,05%ຂອງສະມາຊິກພັກທີ່ໄດ້ປະເມີນທັງໝົດ; ສະມາຊິກພັກທີ່ບໍ່ທັນໄດ້ປະເມີນ 24,284 ສະຫາຍ, ຍິງ 6,761 ສະຫາຍ ໄປພ້ອມກັບການບຳລຸງສ້າງຍົກລະດັບດ້ານທິດສະດີ ແລະ ວິຊາສະເພາະໃຫ້ພະນັກງານນຳພາ-ຄຸ້ມຄອງແຕ່ລະຂັ້ນ, ພະນັກງານວິຊາການ ຢ່າງເປັນລະບົບຕໍ່ເນື່ອງ, ທັງໄລຍະສັ້ນ ແລະ ໄລຍະຍາວ, ທັງຢູ່ພາຍໃນ ແລະ ຕ່າງປະເທດ ທັງໝົດ 1.026 ສະຫາຍ, ຍິງ 278 ສະຫາຍ. ເຮັດໃຫ້ການເຄື່ອນໄຫວວຽກງານ ມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນກວ່າເກົ່າ ປະຈຸບັນມີພະນັກງານ-ລັດຖະກອນ ທັງໝົດ 12.225 ສະຫາຍ, ຍິງ 6.513 ສະຫາຍ.

ຜ່ານຂະບວນການດັ່ງກ່າວ ໄດ້ເຮັດໃຫ້ສະມາຊິກພັກ,ພະນັກງານ-ລັດຖະກອນ ຮັກສາໄດ້ຄຸນທາດການເມືອງ, ມີທັດສະນະຫຼັກໝັ້ນການເມືອງ-ແນວຄິດ, ການຈັດຕັ້ງຖືກຕ້ອງ, ມີຄວາມເຊື່ອໝັ້ນຕໍ່ອຸດົມການຂອງພັກ, ມີຄວາມສາມັກຄີເປັນເອກະພາບສູງຢູ່ພາຍໃນພັກ ກໍ່ຄືຄວາມເປັນປຶກແຜ່ນຢູ່ພາຍໃນກົມກອງ ແລະ ທ້ອງຖິ່ນຮາກຖານຂອງຕົນ.

ຈາກຜົນສຳເລັດດັ່ງກ່າວທີ່ກ່າວມານັ້ນ, ກໍ່ຍັງມີບາງບັນຫາທີ່ເປັນສິ່ງທ້າທາຍ, ທົດສອບຕໍ່ການນຳພາຂອງຄະນະພັກແຕ່ລະຂັ້ນຕໍ່ ຄຸນທາດການເມືອງຂອງພະນັກງານ-ສະມາຊິກພັກທີ່ຈະຕ້ອງໄດ້ເອົາໃຈໃສ່ສືບຕໍ່ປັບປຸງແກ້ໄຂດັ່ງນີ້:

1. ເຖິງແມ່ນວ່າຄະນະບໍລິຫານງານພັກແຂວງໄດ້ເອົາໃຈໃສ່ນຳພາຈັດຕັ້ງເຊື່ອມຊຶມວຽກງານການເມືອງ-ແນວຄິດເປັນປົກກະຕິຕໍ່ເນື່ອງ, ແຕ່ການຈັດຕັ້ງປະຕິບັດບໍ່ທັນຫຼາຍຮູບ-ຫຼາຍສີ, ບໍ່ຮອດທຸກເປົ້າໝາຍ ເຮັດໃຫ້ຄວາມຮັບຮູ້ ແລະ ຄວາມເຂົ້າໃຈຂອງພະນັກງານ-ສະມາຊິກພັກ ຈຳນວນໜຶ່ງຕໍ່ແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດບໍ່ເລິກເຊິ່ງ, ສະຕິເປັນເຈົ້າການຕື່ນຕົວບໍ່ທັນສູງ, ມີແນວຄິດເອື້ອອີງ, ລໍຖ້າແຕ່ຄຳສັ່ງ ແລະ ງົບປະມານ ເຮັດໃຫ້ວຽກຊັກຊ້າແກ່ຍາວ; ການນຳພາວຽກງານກໍ່ສ້າງພັກ-ພະນັກງານ ຍັງມີບາງດ້ານບໍ່ທັນແຂງແຮງ ໂດຍສະເພາະວຽກງານຂະຫຍາຍພັກຍັງແລ່ນນຳປະລິມານບໍ່ທັນຮັບປະກັນໄດ້ຄຸນນະພາບ ເຮັດໃຫ້ພະນັກງານ-ສະມາຊິກພັກຈຳນວນໜຶ່ງມີລັກສະນະເສື່ອມຖອຍດ້ານຄຸນທາດການເມືອງ, ຄຸນສົມບັດສິນປະຕິວັດ ແລະ ຄວາມຮັບຜິດຊອບການເມືອງຕໍ່ໜ້າທີ່ວຽກງານບໍ່ທັນໜັກແໜ້ນ.

2. ການຈັດຕັ້ງເຊື່ອມຊຶມເອກະສານ ຂອງພັກ-ລັດ ໃນໄລຍະຜ່ານມາຍັງບໍ່ທັນຫຼາຍຮູບຫຼາຍສີ, ເນື້ອໃນບໍ່ທັນເລິກເຊິ່ງແທດເຖິງເປົ້າໝາຍ, ການຫັນແຜນການຂອງແຂວງໃຫ້ກາຍເປັນແຜນລະອຽດ ຂອງການຈັດຕັ້ງແຕ່ລະຂັ້ນ ບໍ່ທັນແທດເໝາະກັບສະພາບຄວາມເປັນຈິງຂອງແຕ່ລະຂົງເຂດ ເຮັດໃຫ້ການຈັດຕັ້ງປະຕິບັດຜ່ານມາບໍ່ມີປະສິດທິຜົນເທົ່າທີ່ຄວນ.

3.ດ້ານອຸດົມການສັງຄົມນິຍົມ ແລະ ມານະຈິດຕໍ່ສູ້ປະຕິວັດ ຂອງພະນັກງານຈຳນວນໜຶ່ງ ຍັງບໍ່ທັນໜັກແໜ້ນ, ອາດເກີດມີຄວາມຫວັ່ນໄຫວຄອນແຄນ ໃນເມື່ອພາລະກິດປະຕິວັດຂອງພັກ ກໍຄືການພັດທະນາປະເທດຊາດພົບຄວາມຫຍຸ້ງຍາກ. ສາຍເຫດຕົ້ນຕໍກໍ່ຍ້ອນວ່າ ຈຳນວນໜຶ່ງພະນັກງານຍັງບໍ່ທັນມີເງື່ອນໄຂ ແລະ

ໂອກາດເໝາະສົມ ເພື່ອຍົກລະດັບຄວາມຮູ້ດ້ານທິດສະດີມາກ-ເລນິນ, ທິດສະດີການເມືອງ ແລະ ການປົກຄອງ.

4. ຍັງມີພະນັກງານ, ສະມາຊິກພັກຈຳນວນໜຶ່ງບໍ່ທັນອຸ່ນອຽນທຸ່ນທ່ຽງທາງດ້ານແນວຄິດ, ສະຕິຕໍ່ການຈັດຕັ້ງ, ລະບຽບວິໄນ ແລະ ຄວາມຮັບຜິດຊອບ ຕໍ່ໜ້າທີ່ວຽກງານບໍ່ທັນສູງ ຍັງມີແນວຄິດເຫັນແກ່ຕົວ, ຂາດການຄົ້ນຄວ້າຊອກຮູ້ຮໍ່າຮຽນ ເພື່ອຍົກລະດັບຄວາມຮູ້, ບໍ່ຢາກເຝິກຝົນຫຼໍ່ຫຼອມຕົນເອງ, ເຮັດວຽກແບບແປະໆບາງໆລໍຖ້າແຕ່ຄຳສັ່ງຈາກຂັ້ນເທິງ. ຄວາມຮັບຮູ້ ແລະ ການຈັດຕັ້ງປະຕິບັດວຽກງານບໍ່ທັນໄດ້ດີເທົ່າທີ່ຄວນຖ້າອີງໃສ່ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນໄລຍະໃໝ່ ປະກົດການຫຍໍ້ທໍ້ພາຍໃນພັກ, ການຈັດຕັ້ງແຕ່ລະຂັ້ນຍັງປະກົດໃຫ້ເຫັນຢູ່ ສະແດງອອກຢູ່ບ່ອນວ່າ ໄດ້ລົງວິໄນຕໍ່ສະມາຊິກພັກ ທີ່ກະທຳຜິດ ທັງໝົດ 58 ສະຫາຍ, ຍິງ 09 ສະຫາຍ. ໃນນັ້ນກ່າວເຕືອນ 01 ສະຫາຍ, ໂຈະຮ່ວມຊີວິດພັກ 19 ສະຫາຍ, ຍິງ 01 ສະຫາຍ, ປົດຕຳແໜ່ງ 05 ສະຫາຍ, ລຶບຊື່ອອກຈາກພັກ 07 ສະຫາຍ, ຍິງ 01 ສະຫາຍ, ເອົາອອກຈາກພັກ 26 ສະຫາຍ ຍິງ 7 ສະຫາຍ.

ຈາກສະພາບການດັ່ງກ່າວທີ່ສະແດງເຖິງການເສື່ອມຖອຍທາງຄຸນທາດການເມືອງຂອງພະນັກງານ ແລະ ເພື່ອເປັນການປັບປຸງປົວແປງທັດສະນະຫຼັກໝັ້ນການເມືອງຂອງຖັນແຖວພະນັກງານ, ສະມາຊິກພັກໃຫ້ມີຄຸນທາດການເມືອງທີ່ໜັກແໜ້ນ ກາຍເປັນກຳລັງແຮງທີ່ສຳຄັນ ແລະ ມີຄຸນນະພາບໃນການຈັດຕັ້ງຜັນຂະຫຍາຍແນວທາງ, ແຜນນະໂຍບາຍຂອງພັກໃຫ້ເຂົ້າສູ່ລວງເລິກ ແລະ ປະກົດຜົນເປັນຈິງ ຕ້ອງໄດ້ສຸມໃສ່ແກ້ໄຂບາງວຽກງານຕົ້ນຕໍລຸ່ມນີ້:

ໜຶ່ງ, ຕ້ອງຍົກສູງປະສິດທິຜົນ ຂອງວຽກງານກໍ່ສ້າງພັກ-ພະນັກງານ ດ້ວຍການເສີມຂະຫຍາຍປະຊາທິປະໄຕ ໃຫ້ມະຫາຊົນມີເງື່ອນໄຂປະກອບສ່ວນເຂົ້າໃນວຽກງານດັ່ງກ່າວຢ່າງຕັ້ງໜ້າ; ພ້ອມກັນນັ້ນ ກໍ່ຕ້ອງເອົາໃຈ ໃສ່ຕໍ່ວຽກງານກໍ່ສ້າງ-ບຳລຸງຍົກລະດັບຂອງພະນັກງານ ເພື່ອຕອບສະໜອງດ້ານຈຳນວນ ແລະ ຄຸນນະພາບ. ໃນນັ້ນ, ຕ້ອງເອົາໃຈໃສ່ກໍ່ສ້າງ-ບຳລຸງພະນັກງານທາງດ້ານທິດສະດີ, ແນວທາງຂອງພັກ ເພື່ອສ້າງຄວາມເປັນເອກະພາບຕໍ່ກັບແນວທາງອັນລວມຂອງພັກ, ຂອງການຈັດຕັ້ງແຕ່ລະຂັ້ນ.

ສອງ, ສ້າງກົນໄກອັນແນ່ນອນ ເພື່ອເປັນການກະຕຸກຊຸກຍູ້, ສົ່ງເສີມໃນຄວາມເປັນແບບຢ່າງນຳໜ້າພາທາງປະພຶດຕົວໄປໃນທາງທີ່ດີຂອງພະນັກງານ ໂດຍສະເພາະແມ່ນພະນັກງານຫຼັກແຫຼ່ງນຳພາ ແຕ່ລະຂັ້ນຕ້ອງມີຄວາມເປັນແບບຢ່າງຮອບດ້ານ ເຊິ່ງສະແດງອອກຄື: ມີຄຸນສົມບັດຜ່ອງໃສ, ເປັນແບບຢ່າງໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ, ເປັນແບບຢ່າງໃນການດຳລົງຊີວິດທີ່ປອດໃສຂາວສະອາດ, ເວົ້າແທ້ທຳຈິງ, ຄຳເວົ້າຕ້ອງໄປຄຽງຄູ່ກັບການກະທຳຕົວຈິງ ໝາຍຄວາມວ່າເວົ້າຖືກຕ້ອງກັບແນວທາງ, ມະຕິຂອງພັກ, ປະຕິບັດຖືກກັບແນວທາງນະໂຍບາຍຂອງພັກ ລະບຽບກົດໝາຍຂອງລັດ ປັດໄຈສຳຄັນທີ່ສຸດແມ່ນຕ້ອງເປັນແບບຢ່າງໃນການເຄົາລົບ ແລະ ປະຕິບັດກົດລະບຽບພັກ, ຂໍ້ກຳນົດ, ກົດໝາຍຂອງລັດວາງອອກຢ່າງເຂັ້ມງວດ ເປັນຕົວແບບໃນການຝຶກຝົນຫຼໍ່ຫຼອມຕົນເອງຢູ່ເລື້ອຍໆ.

ສາມ, ຄະນະພັກແຕ່ລະຂັ້ນ ຕ້ອງເພີ່ມທະວີການເຄື່ອນໄຫວໂຄສະນາສຶກສາອົບຮົມການເມືອງ-

ແນວຄິດ, ທິດສະດີ, ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ທັດສະນະຕ່າງໆຂອງພັກໃນແຕ່ລະໄລຍະ, ມະຕິຕ່າງໆຂອງສູນກາງພັກ, ໃຫ້ພະນັກງານແຕ່ລະຂັ້ນ ແລະ ກຸ່ມເປົ້າໝາຍຕ່າງໆ ກຳແໜ້ນ, ເຊື່ອມຊຶມຢ່າງເປັນລະບົບຄົບຊຸດ, ຮັບຮູ້ເຂົ້າໃຈຖືກຕ້ອງເລິກເຊິ່ງ. ການສຶກສາອົບຮົມການເມືອງ-ແນວຄິດ ຄວນເຮັດຫຼາຍຮູບຫຼາຍສີ, ຫຼາຍວິທີການ ເພື່ອເຂົ້າໃຫ້ເຖິງແຕ່ລະກຸ່ມເປົ້າໝາຍ ທີ່ແນໃສ່ຈະສຶກສາອົບຮົມແນວຄິດ; ຮັບປະກັນໃຫ້ແກ່ການເຄື່ອນໄຫວວຽກງານການເມືອງ-ແນວຄິດທິດສະດີ ໃຫ້ມີຄຸນນະພາບກ່ວາເກົ່າ ໂດຍສະເພາະແມ່ນຕິດພັນກັບການປັບປຸງເນື້ອໃນ, ຮູບການ ແລະ ວິທີການຂອງການເຄື່ອນໄຫວວຽກງານການເມືອງ-ແນວຄິດທິດສະດີ, ເນື້ອໃນຕ້ອງຕິດພັນກັບການອະທິບາຍໃຫ້ຄວາມກະຈ່າງແຈ້ງ ແລະ ການແກ້ໄຂບັນຫາທີ່ເກີດຂຶ້ນ ໃນຂະບວນວິວັດແຫ່ງການເຄື່ອນໄຫວນຳພາຂອງພັກແຕ່ລະໄລຍະ, ຄວນສະໜອງຂໍ້ມູນ-ຂ່າວສານ, ເອກະສານຕ່າງໆໃຫ້ພຽງພໍ ເພື່ອເປັນທ່າແຮງບ່ອນອີງອັນພື້ນຖານ ໃຫ້ແກ່ການເຄື່ອນໄຫວວຽກງານການເມືອງ-ແນວຄິດ, ທິດສະດີມີປະສິດທິຜົນສູງກວ່າເກົ່າ.

ສີ່, ການດຳເນີນຊີວິດການເມືອງ, ການລາຍງານສ່ອງແສງປະຈຳເດືອນ ຕ້ອງເຮັດເປັນປົກກະຕິ, ເອົາໃຈໃສ່ເນື້ອໃນການຮ່ວມຊີວິດ, ຄວນເນັ້ນໜັກໃສ່ດ້ານການຕຳນິຕິຊົມຕົນເອງ ເປັນຕົ້ນຕໍດ້ວຍຄວາມຕື່ນຕົວ, ຈິງໃຈຕຳນິສິ່ງຂ່າວເພື່ອນສະຫາຍດ້ວຍກັນຢ່າງກົງໄປກົງມາ ດ້ວຍບັນຍາກາດທີ່ເປັນກັນເອງບົນພື້ນຖານຫຼັກການລວມສູນປະຊາທິປະໄຕ ຂອງພັກວາງອອກ ແລະ ຕິດພັນກັບລະບຽບພັກ ເພື່ອເຮັດໃຫ້ພາຍໃນການນຳ ກໍ່ຄືພາຍໃນຖັນແຖວພະນັກງານໃຫ້ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນຕ້ານແນວຄິດຈິ່ງຈຽມ, ເດັດດ່ຽວປົກປ້ອງອັນຖືກ ແລະ ຕຳນິວິຈານອັນຜິດພາດບົນພື້ນຖານຍຶດໝັ້ນຜົນປະໂຫຍດລວມຂອງພັກ, ຂອງຊາດ, ຂອງປະຊາຊົນ.

ສັງລວມແລ້ວ, ຄຸນທາດການເມືອງແມ່ນປັດໄຈສຳຄັນທີ່ພະນັກງານ-ສະມາຊິກພັກທຸກສະຫາຍ ໂດຍສະເພາະແມ່ນພະນັກງານການນຳທຸກຂັ້ນ ເພາະວ່າເນື້ອແທ້ຂອງຄຸນທາດການເມືອງແມ່ນໝາຍເຖິງທັດສະນະຊົນຊັ້ນ, ຫຼັກໝັ້ນມິດ-ສັດຕູ ແລະ ເດັດດ່ຽວໝຽວແໜ້ນຕໍ່ອຸດົມການສັງຄົມນິຍົມ ສະນັ້ນ, ຄະນະພັກແຕ່ລະຂັ້ນ ຕ້ອງຍົກສູງຄວາມເປັນເຈົ້າການໃນການຕິດຕາມ, ກວດກາ, ເພີ່ມທະວີການເຄື່ອນໄຫວໂຄສະນາສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານ-ສະມາຊິກພັກຢ່າງເປັນປົກກະຕິຕໍ່ເນື່ອງ, ພ້ອມກັນນັ້ນ, ພະນັກງານ-ສະມາຊິກພັກທຸກສະຫາຍ ຕ້ອງໄດ້ອອກແຮງຝຶກຝົນຫຼໍ່ຫຼອມ ເພື່ອພັດທະນາຕົນເອງຢູ່ເລື້ອຍໆ ແນໃສ່ຍົກສູງຄຸນທາດການເມືອງ, ຄວາມຮູ້, ຄວາມສາມາດ, ແບບແຜນດຳລົງຊີວິດ ແລະ ແບບແຜນວິທີເຮັດວຽກທີ່ມີວິທະຍາສາດໃຫ້ແກ່ຕົນເອງຢູ່ສະເໝີ, ທັງເປັນການປະກອບອາວຸດອັນຄົມແຫຼມທາງດ້ານການເມືອງ-ແນວຄິດໃຫ້ແກ່ຕົນເອງ ເພື່ອກຽມພ້ອມເຂົ້າໃນການປະຕິບັດໜ້າທີ່ວຽກງານກໍ່ຄືການຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ ແລະ ກົດໝາຍຂອງລັດທີ່ວາງອອກແຕ່ລະໄລຍະໃຫ້ປະກົດຜົນເປັນຈິງ...ຯ

ການສຶກສາອົບຮົມການເມືອງ-ແນວຄິດ ໃຫ້ສະມາຊິກພັກ, ພະນັກງານ ຢູ່ເມືອງທົ່ງສາ ແຂວງໄຊຍະບູລີ

ໂດຍ: ບຸນທັນ ພວງແກ້ວ

ການສຶກສາອົບຮົມການເມືອງ-ແນວຄິດ ແມ່ນຄວາມຈຳເປັນພາວະວິໄສ ທັງແມ່ນຄວາມຮຽກຮ້ອງຕ້ອງການອັນຮີບດ່ວນ ເຊິ່ງພັກເຮົາຖືເອົາວຽກງານດັ່ງກ່າວເປັນກົກ, ເປັນວຽກງານທີ່ຕ້ອງເຮັດກ່ອນໝູ່, ເປັນທິດນຳ ແລະ ເປັນມາດຕະຖານໃນການກໍ່ສ້າງພັກ, ພະນັກງານ. ຖືວຽກງານການເມືອງ-ແນວຄິດເປັນວຽກງານສຳຄັນ ໃນການນຳພາ-ຊີ້ນຳ ໂດຍຫັນເປັນແຜນການ, ແຜນງານອັນລະອຽດ ສອດຫ້ອຍເຂົ້າໃນທຸກຂົງເຂດວຽກງານ ແນໃສ່ສ້າງພະນັກງານ, ສະມາຊິກພັກ ໃຫ້ມີຄວາມໜັກແໜ້ນທາງດ້ານການເມືອງ, ມີຈັນຍາທຳ, ມີຄວາມສັດຊື່ບໍລິສຸດ ແລະ ເປັນເຈົ້າການ ຈັດຕັ້ງປະຕິບັດໜ້າທີ່ວຽກງານທີ່ໄດ້ຮັບການມອບໝາຍ ດ້ວຍຄວາມຮັບຜິດຊອບສູງ ແລະ ຍຶດໝັ້ນຕໍ່ອຸດົມການສັງຄົມນິຍົມ. ໃນເງື່ອນໄຂໃໝ່ຂອງການປະຕິວັດ ພັກເຮົາໄດ້ເລັ່ງທວງໃຫ້ຖັນແຖວສະມາຊິກພັກ, ພະນັກງານທຸກຄົນມີຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ມີຄວາມຮູ້, ຄວາມສາມາດ, ມີທາດແທ້ຫຼັກໝັ້ນການເມືອງຂອງຊົນຊັ້ນກຳມະກອນທີ່ໜັກແໜ້ນ, ມີຄວາມກະຕືລືລົ້ນຫ້າວຫັນບຸກບືນ ສູ້ຊົນຝຶກຝົນຫຼໍ່ຫຼອມກໍ່ສ້າງຕົນເອງ ແລະ ອອກແຮງຄົ້ນຄວ້າຮໍ່າຮຽນ ເພື່ອຍົກລະດັບຄວາມຮູ້ທຸກດ້ານຢ່າງບໍ່ຢຸດຢັ້ງ. ເນື້ອແທ້ແມ່ນໝາຍເຖິງທັດສະນະຫຼັກໝັ້ນຊົນຊັ້ນ, ທັດສະນະຫຼັກໝັ້ນມິດ-ສັດຕູ ແລະ ຄວາມເດັດດ່ຽວໜຽວແໜ້ນ ຕໍ່ອຸດົມການສັງຄົມນິຍົມຂອງສະມາຊິກພັກ, ພະນັກງານແຕ່ລະຄົນ ໂດຍຖືເອົາວຽກງານການເມືອງ-ແນວຄິດເປັນພື້ນຖານ,ເປັນກົກ, ເປັນໜ້າທີ່ສຳຄັນ, ເປັນວຽກງານແຖວໜ້າທີ່ຕ້ອງເຮັດກ່ອນ ແລະ ເຮັດເປັນປະຈຳ ສອດຫ້ອຍເຂົ້າໃນທຸກຂົງເຂດວຽກງານຂອງພັກ-ລັດ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ, ເປັນປັດໄຈຮັບປະກັນທຸກໄຊຊະນະຂອງການປະຕິວັດ .

ໂດຍເຫັນໄດ້ບົດບາດສຳຄັນຂອງວຽກງານການເມືອງ-ແນວຄິດ ຄະນະບໍລິຫານງານພັກເມືອງທົ່ງສາ ໄດ້ເອົາໃຈໃສ່ນຳພາ-ຊີ້ນຳຈັດຕັ້ງດຳເນີນການສຶກສາອົບຮົມການເມືອງ-ແນວຄິດໃຫ້ສະມາຊິກພັກ, ພະນັກງານ ເພື່ອສ້າງຄວາມຮັບຮູ້-ເຂົ້າໃຈແນວທາງ, ແຜນນະໂຍບາຍຂອງພັກ, ລະບຽບພັກ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງລັດໃນແຕ່ລະໄລຍະ ເພື່ອໃຫ້ສະມາຊິກພັກ, ພະນັກງານມີຫຼັກໝັ້ນການເມືອງທີ່ໜັກແໜ້ນ ທັງເປັນເຈົ້າການເຂົ້າຮ່ວມພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ດ້ວຍຄວາມຮັບຜິດຊອບນັບມື້ນັບສູງຂຶ້ນ. ປະຈຸບັນອົງຄະນະພັກເມືອງທົ່ງສາ ມີ 103 ການຈັດຕັ້ງຮາກຖານພັກ ໃນນັ້ນມີ 8 ຄະນະພັກຮາກຖານ, ມີ 95

ໜ່ວຍພັກ (ທຽບໃສ່ກອງປະຊຸມໃຫຍ່ຄັ້ງທີ VIII ເພີ່ມຂຶ້ນ 3 ຄະນະພັກຮາກຖານ 7 ໜ່ວຍພັກ) ໃນນີ້, ໜ່ວຍພັກຮາກຖານບ້ານ 40 ໜ່ວຍ, ໜ່ວຍພັກສຳນັກງານ 25 ໜ່ວຍ, ໜ່ວຍພັກໂຮງໝໍ 3 ໜ່ວຍ, ໜ່ວຍພັກກຳລັງປະກອບອາວຸດ 8 ໜ່ວຍ, ໜ່ວຍພັກໂຮງຮຽນ 19 ໜ່ວຍ; ມີສະມາຊິກພັກທັງໝົດ 1.533 ສະຫາຍ, ຍິງ 470 ສະຫາຍ, ໃນນີ້ ສະມາຊິກສຳຮອງ 54 ສະຫາຍ, ຍິງ 29 ສະຫາຍ (ທຽບໃສ່ກອງປະຊຸມໃຫຍ່ ເພີ່ມຂຶ້ນ 228 ສະຫາຍ, ຍິງ 82 ສະຫາຍ); ມີພະນັກງານ-ລັດຖະກອນ 688 ທ່ານ, ຍິງ 334 ທ່ານ; ໃນນັ້ນ, ລະດັບວິຊາສະເພາະຊັ້ນຕົ້ນ 13 ທ່ານ, ຍິງ 11 ທ່ານ; ຊັ້ນກາງ 205 ທ່ານ, ຍິງ 122 ທ່ານ, ຊັ້ນສູງ 270 ທ່ານ, ຍິງ 135 ທ່ານ; ປະລິນຍາຕີ 193 ທ່ານ, ຍິງ 63 ທ່ານ, ເໜືອປະລິນຍາຕີ 4 ທ່ານ, ຍິງ 1 ທ່ານ; ປະລິນຍາໂທ 3 ທ່ານ, ຍິງ 2 ທ່ານ.

ໄລຍະຜ່ານມາ ອົງຄະນະພັກເມືອງຫົງສາ ໄດ້ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດໃຫ້ສະມາຊິກພັກ, ພະນັກງານ ດ້ວຍຫຼາຍເນື້ອໃນ, ຫຼາຍວິທີການໃນການຈັດຕັ້ງເຜີຍແຜ່ມະຕິ, ຄຳສັ່ງ, ຂໍ້ກຳນົດ, ກົດລະບຽບພັກ, ກົດໝາຍ ແລະ ເອກະສານທີ່ສຳຄັນ ເປັນຕົ້ນແມ່ນມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ສະໄໝທີ XI ຕິດພັນກັບມະຕິກອງປະຊຸມໃຫຍ່ ຄັ້ງທີ VII ຂອງອົງຄະນະພັກແຂວງ, ມະຕິກອງປະຊຸມໃຫຍ່ ຄັ້ງທີ VIII ຂອງອົງຄະນະພັກເມືອງ ໄດ້ທັງໝົດ 19 ຄັ້ງ, ມີຜູ້ເຂົ້າຮ່ວມ 4.637 ຄົນ, ຍິງ 1.919 ຄົນ; ໄດ້ຈັດປາຖະກະຖາວັນສຳຄັນຕ່າງໆຂອງຊາດ-ຂອງພັກ ຈຳນວນ 26 ຄັ້ງ, ມີຜູ້ເຂົ້າຮ່ວມທັງໝົດ 6.315 ເທື່ອຄົນ, ຍິງ 2.558 ເທື່ອຄົນ; ສົ່ງສະມາຊິກພັກ, ພະນັກງານໄປຍົກລະດັບວິຊາສະເພາະ, ທິດສະດີການເມືອງ-ການປົກຄອງ ຢູ່ພາຍໃນປະເທດ 11 ທ່ານ, ຍິງ 4 ທ່ານ; ສສ ຫວຽດນາມ 5 ທ່ານ, ຍິງ 1 ທ່ານ; ໄດ້ສຳເລັດການເປີດບຳລຸງທິດສະດີການເມືອງ ແລະ ການປົກຄອງ ຂັ້ນຕົ້ນ (ລະບົບ3ເດືອນ) ໃຫ້ພະນັກງານ-ລັດຖະກອນພາຍໃນເມືອງໄດ້ 2 ຊຸດ ມີນັກສຶກສາຈຳນວນ 96 ທ່ານ, ຍິງ 30 ທ່ານ; ຈັດຝຶກອົບຮົມທິດສະດີການເມືອງ-ການປົກຄອງ ລະບົບ 10 ວັນ ໃຫ້ເລຂາພັກບ້ານ, ນາຍບ້ານ ແລະ ຂະແໜງການຂອງບ້ານ ໄດ້ 1 ຊຸດ ມີນັກສຳມະນາກອນເຂົ້າຮ່ວມ 43 ທ່ານ, ຍິງ 3 ທ່ານ; ນຳເອົາເອກະສານທີ່ສຳຄັນຕ່າງໆຕິດພັນກັບການກວດກາໜ່ວຍພັກປະຈຳປີ ສຶກສາອົບຮົມນຳພາການເມືອງ-ແນວຄິດໃຫ້ສະມາຊິກພັກນຳໄປ ເຊື່ອມຊຶມຢູ່ຮາກຖານບ້ານ ສຳເລັດ 32 ບ້ານ, ມີຄົນເຂົ້າຮ່ວມ 796 ສະຫາຍ, ຍິງ 186 ສະຫາຍ.

ຜ່ານການສຶກສາອົບຮົມການເມືອງ-ແນວຄິດດ້ວຍຫຼາຍຮູບການ, ຫຼາຍແບບທີ່ອຸດົມສົມບູນ ໄປຄຽງຄູ່ກັບການກໍ່ສ້າງໄລຍະຍາວ ແລະ ໄລຍະສັ້ນ ເຮັດໃຫ້ຖັນແຖວສະມາຊິກພັກ, ພະນັກງານໃນທົ່ວເມືອງມີແນວຄິດອຸ່ນອຽນ, ມີແນວຄິດ-ການເມືອງໜັກແໜ້ນ, ເຂົ້າໃຈຕໍ່ແນວທາງຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ, ສ້າງໄດ້ຄວາມເປັນເອກະພາບທາງດ້ານແນວຄິດ, ປັບປຸງທັດສະນະຫຼັກໝັ້ນ, ເຊີດຊູນ້ຳໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ, ຍົກສູງສະຕິລະວັງຕົວຕໍ່ກົນອຸບາຍຫັນປ່ຽນໂດຍສັນຕິ ຂອງອິດທິກຳລັງປໍລະປັກ ແລະ ກຸ່ມຄົນບໍ່ດີ, ສາມາດຕີຖອຍທັດສະນະແນວຄິດທີ່ຜິດເຂວ, ມີຄວາມຮູ້ຄວາມສາມາດ ເຮັດສຳເລັດໜ້າທີ່ຕາມການຈັດຕັ້ງມອບໝາຍໃຫ້ ຢ່າງມີປະສິດທິພາບ, ສາມາດຕອບສະໜອງໄດ້ຄວາມຕ້ອງການ ຂອງໜ້າທີ່ວຽກງານໄດ້ມີຜົນສຳເລັດ; ຜ່ານການປະເມີນຕີລາຄາສະມາຊິກພັກ ສາມາດສ້າງສະມາຊິກພັກແຂງໄດ້ 1.138 ສະຫາຍ, ຍິງ 370 ສະຫາຍ ເທົ່າກັບ 86,60%, ກາງ 172 ສະຫາຍ, ຍິງ 39 ສະຫາຍ ເທົ່າກັບ 13,08%, ອ່ອນ 4 ສະຫາຍ ເທົ່າກັບ 0,3% ແລະ ບໍ່ແບ່ງ 219 ສະ

ຫາຍ, ຍິງ 61 ສະຫາຍ ເທົ່າກັບ 14,28% . ຜ່ານການປະເມີນຜົນພະນັກງານ-ລັດຖະກອນ ໄດ້ປະເພດດີຫຼາຍ 62 ທ່ານ, ປະເພດດີ 317 ທ່ານ, ປະເພດກາງ 309 ທ່ານ .

ຄຽງຄູ່ກັບຜົນສຳເລັດທີ່ກ່າວມານັ້ນ, ທຽບໃສ່ກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານໃນໄລຍະໃໝ່ ເຫັນວ່າຍັງບໍ່ທັນຕອບສະໜອງໄດ້ກັບສະພາບທີ່ແທ້ຈິງ ແລະ ຍັງມີບາງດ້ານທີ່ຍັງຄ້າງຄາ ເປັນຕົ້ນ:

ໜຶ່ງ, ການສຶກສາອົບຮົມການເມືອງ- ແນວຄິດໃນໄລຍະຜ່ານມາ ໄດ້ຈັດຕັ້ງປະຕິບັດດ້ວຍຫຼາຍຮູບຫຼາຍແບບ ແຕ່ບໍ່ເລິກເຊິ່ງ, ບໍ່ແທດເຖິງທຸກເປົ້າໝາຍ, ບາງຄັ້ງຍັງຂາດວັກຂາດຕອນ; ພະນັກງານການນຳ ແລະ ພະນັກງານຫຼັກແຫຼ່ງສ່ວນຫຼາຍ ແມ່ນໄດ້ຜ່ານການຄົ້ນຄວ້າຮ່ຳຮຽນ ຍົກລະດັບທາງດ້ານທິດສະດີການເມືອງ ແລະ ການປົກຄອງ ແຕ່ພະນັກງານວິຊາການທີ່ເຮັດວຽກຕົວຈິງ ຍັງບໍ່ທັນໄດ້ຜ່ານທິດສະດີຂອງພັກ ເຮັດໃຫ້ຄວາມຮູ້, ຄວາມສາມາດບໍ່ທັນກວ້າງຂວາງ ແລະ ເລິກເຊິ່ງ. ດັ່ງນັ້ນ, ຈຶ່ງເຮັດໃຫ້ເກີດມີປະກົດການຫຍໍ້ທໍ້, ມີແນວຄິດປຽບທຽບຊັ່ງຊາ; ສະມາຊິກພັກ, ພະນັກງານຈຳນວນໜຶ່ງຂາດຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ ແລະ ການຄຸ້ມຄອງຂອງລັດ, ເກີດມີແນວຄິດສວຍໂອກາດດ້ານຕ່າງໆ ເຊິ່ງເປັນການລະເມີດລະບຽບພັກ, ກົດໝາຍຂອງລັດ.

ສອງ, ສະມາຊິກພັກ, ພະນັກງານຈຳນວນໜຶ່ງ ມີແນວຄິດເອື່ອຍອີງແນວຄິດຄອງເດີມ, ຂາດຄວາມຮູ້-ຄວາມສາມາດໃນການຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມຂອງລັດ, ຄວາມຕື່ນຕົວໃນການແກ້ໄຂບັນຫາຕ່າງໆຍັງບໍ່ສູງເທົ່າທີ່ຄວນ ຍັງຕົກເລ່ຫຼ່ຽມກົນອຸບາຍຂອງພວກຄົນບໍ່ດີ ເຮັດໃຫ້ເກີດມີປະກົດການລະເມີດກົດລະບຽບພັກ ແລະ ກົດໝາຍຂອງລັດ.

ສາມ, ສະມາຊິກພັກ, ພະນັກງານຈຳນວນໜຶ່ງຍັງຂາດຄວາມກະຕືລືລົ້ນ ຕໍ່ການຈັດຕັ້ງປະຕິບັດໜ້າທີ່ວຽກງານ, ລໍຖ້າແຕ່ຄຳສັ່ງ, ບໍ່ທັນເປັນເຈົ້າການຄົ້ນຄວ້າປະດິດສ້າງໃນວຽກທີ່ຕົນຮັບຜິດຊອບ, ໃນຫຼາຍວຽກມີລັກສະນະຊັກຊ້າແກ່ຍາວ ເຮັດໃຫ້ການຈັດຕັ້ງປະຕິບັດບັນດາຄາດໝາຍ ບໍ່ບັນລຸຕາມແຜນທີ່ກຳນົດໄວ້.

ເພື່ອຍົກສູງດ້ານການເມືອງ-ແນວຄິດໃຫ້ແກ່ສະມາຊິກພັກ, ພະນັກງານແຕ່ລະຂັ້ນຢູ່ເມືອງຫົງສາ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງຂຶ້ນກວ່າເກົ່າ ຄວນເອົາໃຈໃສ່ປັບປຸງ, ແກ້ໄຂບາງວຽກງານທີ່ສຳຄັນຄື:

1). ຄວນເພີ່ມທະວີການສຶກສາອົບຮົມການເມືອງ-ແນວຄິດໃຫ້ກວ້າງຂວາງ, ເລິກເຊິ່ງ ແລະ ແທດເໝາະກັບບັນດາເປົ້າໝາຍ ດ້ວຍການເຊື່ອມຊຶມມູນເຊື້ອຂອງພັກ, ຂອງຊາດໃຫ້ສະມາຊິກພັກ, ພະນັກງານທຸກຄົນ ໃຫ້ມີຄວາມຮູ້, ຄວາມສາມາດ, ກຳແໜ້ນ ແລະເຊື່ອໝັ້ນຕໍ່ແນວທາງ, ແຜນນະໂຍບາຍຂອງພັກ, ສຶກສາອົບຮົມການຈັດຕັ້ງພັກໃຫ້ເປັນແບບຢ່າງນຳໜ້າ ໃນການຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ, ລະບຽບພັກ, ກົດໝາຍຂອງລັດຢ່າງເຂັ້ມງວດ, ສ້າງແບບແຜນວິທີເຮັດວຽກທີ່ມີວິທະຍາສາດ, ຕິດແທດກັບໜ້າວຽກຕົວຈິງ ແລະ ມີແບບແຜນດຳລົງຊີວິດທີ່ປອດໃສຂາວສະອາດ.

2). ເພີ່ມທະວີຄວາມເອົາໃຈໃສ່ການຍົກລະດັບຄຸນນະພາບຂອງສະມາຊິກພັກ, ພະນັກງານ ໃຫ້ມີຄວາມຮູ້, ຄວາມສາມາດ ແລະ ເຂົ້າໃຈແຈ້ງຕໍ່ໜ້າທີ່ຄວາມຮັບຜິດຊອບຂອງຕົນ ທີ່ການຈັດຕັ້ງມອບໝາຍ, ເອົາໃຈໃສ່ແກ້ໄຂບັນຫາຕ່າງໆໃຫ້ຖືກຕ້ອງສອດຄ່ອງກັບແນວທາງ, ແຜນນະໂຍບາຍຂອງພັກ-ລັດ.

3). ຄະນະພັກ, ຄະນະນຳ ຖືເອົາການສຶກສາອົບຮົມການເມືອງ-ແນວຄິດ ເປັນໜ້າທີ່ສຳຄັນ ແລະ ເປັນຄວາມຮັບຜິດຊອບໂດຍກົງ, ຖືເອົາວຽກງານດັ່ງກ່າວເປັນບັນຫາກົກຂອງທຸກວຽກງານ ຍ້ອນວ່າສະມາຊິກ

ພັກ, ພະນັກງານ ມີບົດບາດສຳຄັນ ຕັດສິນຜົນໄດ້ຜົນເສຍຂອງໜ້າທີ່ວຽກງານ ແລະ ຈັດຕັ້ງປະຕິບັດໜ້າທີ່ວຽກງານ ໃຫ້ບັນລຸຕາມແຜນທີ່ກຳນົດໄວ້.

ສັງລວມແລ້ວ, ການຍົກສູງຄຸນນະພາບການສຶກສາອົບຮົມການເມືອງ-ແນວຄິດໃຫ້ແກ່ສະມາຊິກພັກ, ພະນັກງານ ເປັນວຽກງານທີ່ສຳຄັນທີ່ສຸດໃນການປະຕິບັດໜ້າທີ່ການເມືອງຂອງພັກ ໃຫ້ບັນລຸຈຸດປະສົງທີ່ໄດ້ກຳນົດໄວ້ ກໍຄືເຮັດໃຫ້ສະມາຊິກພັກ, ພະນັກງານ ມີຄຸນທາດການເມືອງທີ່ໜັກແໜ້ນ; ສະນັ້ນ, ຄະນະພັກທຸກຂັ້ນ ຄວນສືບຕໍ່ຈັດຕັ້ງປະຕິບັດວຽກງານສຶກສາອົບຮົມການເມືອງ-ແນວຄິດ ໃຫ້ເປັນປົກກະຕິ ແລະ ຕໍ່ເນື່ອງ; ຫັນເອົາວຽກງານດັ່ງກ່າວ ເປັນແຜນຍຸດທະສາດ, ແຜນງານ, ໂຄງການລະອຽດ ທີ່ສອດຫ້ອຍໄປໃນທຸກຂົງເຂດວຽກງານ, ໃຫ້ທົ່ວເຖິງທຸກເປົ້າໝາຍ ເພື່ອເຮັດໃຫ້ສະມາຊິກພັກ, ພະນັກງານ ມີຄວາມຮັບຜິດຊອບສູງ ໃນການປະຕິບັດໜ້າທີ່ການເມືອງຂອງຕົນ ຕາມທີ່ໄດ້ຮັບມອບໝາຍຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງ...ຯ

ຍົກສູງວຽກງານກໍ່ສ້າງ-ບຳລຸງພະນັກງານ...

ຕໍ່ຈາກໜ້າ 25

ສີ່, ຄະນະພັກທຸກຂັ້ນ ຕ້ອງສ້າງແຜນກຳນົດພະນັກງານຢ່າງລະອຽດຊັດເຈນ, ແຜນກໍ່ສ້າງ-ບຳລຸງຍົກລະດັບພະນັກງານຕ້ອງສອດຄ່ອງກັບແຜນກຳນົດພະນັກງານ, ການບຳລຸງພະນັກງານຕ້ອງສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຕົວຈິງ, ຕ້ອງມີເປົ້າໝາຍສ້າງເພື່ອປະກອບເຂົ້າໃສ່ຕຳແໜ່ງໃດ, ຢູ່ບ່ອນໃດ, ຫຼີກເວັ້ນສະພາບທີ່ວ່າສ້າງແລ້ວ ບໍ່ນຳໃຊ້ເຂົາເຈົ້າອັນເປັນສາເຫດເຮັດໃຫ້ພະນັກງານດັ່ງກ່າວມີແນວຄິດຄອນແຄນ, ຕໍ່າຄ້ອຍນ້ອຍໃຈ ແລະ ໃນທີ່ສຸດກໍ່ເສຍພະນັກງານທີ່ດີໄປ.

ຫ້າ, ຄະນະພັກທຸກຂັ້ນຕ້ອງສ້າງແຜນການກຳນົດພະນັກງານນຳພາ-ຄຸ້ມຄອງຢ່າງລະອຽດ, ຊັດເຈນ ໂດຍຕິດພັນກັບການກໍ່ສ້າງ, ບຳລຸງພະນັກງານນຳພາ-ຄຸ້ມຄອງຢ່າງຈະແຈ້ງ ໂດຍເລີ່ມຈາກໜ້າທີ່ການເມືອງ ແລະ ຄວາມຮຽກຮ້ອງຕ້ອງການຂອງຂະແໜງໃດໜຶ່ງ ຂັ້ນແຂວງ ແລະ ຂັ້ນເມືອງ; ຕ້ອງມີເປົ້າໝາຍສ້າງເພື່ອປະກອບເຂົ້າໃນຕຳແໜ່ງໃດໜຶ່ງ, ຄວນຫຼີກເວັ້ນສະພາບທີ່ວ່າສ້າງແລ້ວບໍ່ນຳໃຊ້ເຂົາເຈົ້າເຂົ້າໃນວຽກງານ ອັນນີ້ເປັນສາເຫດພາໃຫ້ເກີດມີພະນັກງານເຫຼືອບໍ່ພໍ ແລະ ຂາດກຳລັງໃຈ.

ສັງລວມແລ້ວ, ການຍົກສູງວຽກງານກໍ່ສ້າງ ແລະ ບຳລຸງພະນັກງານນຳພາ-ຄຸ້ມຄອງ ໃຫ້ມີຄຸນນະພາບ ເພື່ອຕອບສະໜອງໄດ້ກັບໜ້າທີ່ການເມືອງຂອງພັກ-ລັດ ແລະ ເປັນວຽກງານໜຶ່ງທີ່ສຳຄັນ; ສະນັ້ນຈຶ່ງຮຽກຮ້ອງໃຫ້ຄະນະພັກ, ການນຳທຸກຂັ້ນຕ້ອງກຳແໜ້ນທັດສະນະການນຳພາ-ຊີ້ນຳຂອງພັກ ໃນແຕ່ລະໄລຍະ, ກຳແໜ້ນທິດທາງ, ແນວທາງນະໂຍບາຍຂອງພັກທີ່ວາງໄວ້ໃນແຕ່ລະຂົງເຂດ ເພື່ອນຳໄປຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍບັນດາມະຕິ, ຄຳສັ່ງ ເພື່ອໄປໝູນໃຊ້ເຂົ້າໃນການກໍ່ສ້າງ ແລະ ບຳລຸງພະນັກງານນຳພາ-ຄຸ້ມຄອງ ໃຫ້ມີຄຸນນະພາບ, ຖືກຈຸດ, ຖືກເປົ້າໝາຍ ແລະ ສອດຄ່ອງກັບເງື່ອນໄຂສະພາບແວດລ້ອມຂອງແຂວງ ທັງຮັບປະກັນໃນການກໍ່ສ້າງພະນັກງານນຳພາ-ຄຸ້ມຄອງ ຢູ່ແຂວງຫຼວງນ້ຳທາ ໃຫ້ມີຄຸນນະພາບປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ໃຫ້ນັບມື້ດີຂຶ້ນເລື້ອຍໆ...ຯ

ສົງຄາມຜ່ານໄປຄວາມຕາຍຍັງຢູ່ ບົນເສັ້ນທາງໂຮ່ຈີມິນ ໃນຜືນແຜ່ນດິນລາວ

(ລາງວັນຊະນະເລີດແຂ່ງຂັນບົດຂຽນ ເນື່ອງໃນໂອກາດສະເຫຼີມສະຫຼອງວັນສ້າງຕັ້ງ ວາລະສານກໍ່ສ້າງພັກ ຄົບຮອບ 30 ປີ)

ໂດຍ: ສູນທອນ ທອງຊະນະ

ດັ່ງທີ່ຮູ້ນຳກັນແລ້ວວ່າ ກ່ອນທີ່ຈັກກະພັດລ່າເມືອງຂຶ້ນຝຣັ່ງເຂົ້າມາຮຸກຮານລາວ ລະບົບການຄົມມະນາຄົມແມ່ນຍັງຫຼ້າຫຼັງ. ພາຍຫຼັງສຳເລັດການຮຸກຮານພວກເຂົາໄດ້ເລີ່ມເປີດບັນດາສາຍທາງຂົນສົ່ງໃໝ່, ສ້ອມແປງ ແລະ ຍົກລະດັບບັນດາສາຍທາງເກົ່າ ໂດຍສະເພາະແມ່ນສ້າງສາຍທາງຕິດຕໍ່ລະຫວ່າງເຂດໃຈກາງການເມືອງ, ການທະຫານແຕ່ພາກເໜືອ ຜ່ານພາກກາງ, ລົງຮອດພາກໃຕ້ຂອງລາວ ແລະ ໄດ້ສ້າງເສັ້ນທາງຍ່າງຈຳນວນໜຶ່ງແຕ່ຫວຽດນາມເຂົ້າມາປະເທດລາວ ເພື່ອແນໃສ່ຮັບປະກັນການເຄື່ອນຍ້າຍກຳລັງປາບປາມຂະບວນການປະຕິວັດຂອງປະເທດລາວ ແລະ ຫວຽດນາມ ເປັນຕົ້ນແມ່ນທາງເລກ 6 ແຕ່ຊຳເໜືອ ຫາ ແຂວງເຊີນລາ, ຮວາບິ້ງ ໄປເຖິງ ຮ່າໂນ້ຍ; ທາງເລກ 7 ແຕ່ທົ່ງໄຫຫີນ ຊຽງຂວາງ ຜ່ານໜອງແຮດ ໄປເຖິງ ເມືອງວິ້ງ-ເຫງ້ານ; ທາງເລກ 8 ຈາກເມືອງທ່າແຂກ ຜ່ານຫຼັກຊາວ, ນາແປ ໄປເຖິງ ຮົ່ງລິ້ງ-ຮ່າຕິ້ງ; ທາງເລກ 9 ແຕ່ສະຫວັນນະເຂດ ຜ່ານດົງເຫັນ, ພະລານ ໄປເຖິງ ດົງຮ່າ-ກວາງຈິ; ທາງເລກ 12 ແຕ່ເມືອງມະຫາໄຊ ຜ່ານບ້ານນາເຜົ່າ ໄປເຖິງ ເມືອງຕ້ຽນຮວາ-ກວາງບິ້ງ ແລະ ທາງເລກ 13 ແຕ່ຫຼວງພະບາງ, ວຽງຈັນ, ປາກເຊ ຜ່ານກະແຈະ, ຊຽງແຕງ ໄປເຖິງໄຊງ່ອນ. ຕະຫຼອດໄລຍະເວລາ 9 ປີຂອງການຕໍ່ຕ້ານພວກລ່າເມືອງຂຶ້ນ ເສັ້ນທາງດັ່ງກ່າວເປັນເສັ້ນທາງຕິດຕໍ່ພົວພັນ, ໄປ-ມາຫາສູ່ກັນຕາມແນວຊາຍແດນລາວ-ຫວຽດນາມ ແລະ ທັງສອງຟາກສາຍພູຫຼວງລ້ວນແຕ່ເຄີຍຖືກນຳໃຊ້ໂດຍບັນດານັກປະຕິວັດລຸ້ນທຳອິດຂອງລາວ-ຫວຽດນາມ. ໃນປີ 1954-1959 ບັນດາເສັ້ນທາງສາຍພູຫຼວງໄດ້ຖືກງົດໃຊ້ຊົ່ວຄາວ ໂດຍອີງຕາມສັນຍາເຊີແນວ 1954 ກ່ຽວກັບອິນດູຈີນ. ພາຍຫຼັງພວກລ່າເມືອງຂຶ້ນຝຣັ່ງໄດ້ປະລາໄຊ ແລະ ກຽມຖອນຕົວອອກຈາກອິນດູຈີນ ຈາກນັ້ນຈັກກະພັດອາເມຣິກາກໍ່ເລີ່ມແຊກແຊງເຂົ້າມາຮຸກຮານອິນດູຈີນແທນທີ່ພວກລ່າເມືອງຂຶ້ນແບບເກົ່າ ດ້ວຍຮູບການຂອງລັດທິລ່າເມືອງຂຶ້ນແບບໃໝ່.

ເສັ້ນທາງສາຍພູຫຼວງເບື້ອງດິນແດນຫວຽດນາມ ມີປະຫວັດການພັດທະນາຢ່າງຍາວນານ ແຕ່ເດືອນສິງຫາ 1945 ໂດຍປະທານ ໂຮ່ຈີມິນ ໄດ້ເຫັນຄວາມສຳຄັນທາງຍຸດທະສາດຂອງເສັ້ນທາງສາຍພູຫຼວງ ເພື່ອດຳເນີນສົງຄາມຕໍ່ຕ້ານອັນຍາວນານໃນທົ່ວປະເທດ. ໃນໄລຍະເວລາເລີ່ມຕົ້ນການປະຕິວັດ ເພື່ອຫຼົບຫຼີກສາຍຕາສາຍລັບຂອງຝຣັ່ງ ແລະ ຍີ່ປຸ່ນ, ນັກປະ

ຕິວັດຫວຽດນາມ ເຊິ່ງເຂົ້າມາປະເທດໃກ້ຄຽງຄື: ລາວ, ກຳປູເຈຍ, ປະເທດໄທ ລ້ວນແຕ່ຕ້ອງຜ່ານເສັ້ນທາງສາຍພູຫຼວງ. ເດືອນທັນວາ 1946 ເມື່ອສົງຄາມພວກລ່າເມືອງຂຶ້ນຝຣັ່ງເລີ່ມຕົ້ນ ເສັ້ນທາງລຳລຽງສາຍພູຫຼວງກໍ່ໄດ້ເລີ່ມປະຕິບັດການຢ່າງຕໍ່ເນື່ອງ ຈາກເຂດທີ່ໝັ້ນການຕໍ່ຕ້ານຫວຽດບັກ ລົງສູ່ເຂດປ່າດົງອູມິງ ຢູ່ພາກໃຕ້ຫວຽດນາມ. ຕະຫຼອດໄລຍະ 9 ປີຂອງສົງຄາມຕ້ານຝຣັ່ງບັນດາເອກະສານແນະນຳທາງດ້ານຍຸດທະສາດ ແລະ ແນວທາງການເມືອງທີ່ເຄັ່ງຮ້ອນອື່ນໆ ລ້ວນແຕ່ສົ່ງຜ່ານເສັ້ນທາງສາຍພູຫຼວງ.

ເສັ້ນທາງສາຍພູຫຼວງ ບົນພື້ນແຜ່ນດິນລາວທ່ານ ສະໝານ ວິຍະເວດ ໄດ້ສະຫຼຸບໄວ້ວ່າ: ໂດຍການຍຶດໝັ້ນຄຳເວົ້າທີ່ເປັນອຳມະຕະຂອງປະທານ ໂຮ່ຈິມິນທີ່ກ່າວໄວ້ວ່າ: ຊ່ວຍເຫຼືອເພື່ອນ ປຽບເໝືອນຊ່ວຍເຫຼືອຕົນເອງ, ດັ່ງນັ້ນ ລູກຫຼານຜູ້ປະເສີດຂອງປະຊາຊົນຫວຽດນາມ ລຸ້ນຕໍ່ລຸ້ນໄດ້ມາຮ່ວມການປະຕິວັດ, ຮ່ວມສູ້ຮົບ, ເອົາເລືອດເນື້ອເຫື່ອໄຄທັງນ້ຳຕາໄຫຼທາແຜ່ນດິນເພື່ອໃຫ້ 2 ຊາດມີເອກະລາດ ຈົນຮອດດຽວນີ້ ກະດູກກໍ່ເອົາບໍ່ທັນໝົດ ! ສຳລັບລູກຫຼານຜູ້ປະເສີດຂອງປະຊາຊົນລາວ, ພັກລາວ, ແນວລາວຮັກຊາດ, ປະຊາຊົນລາວບັນດາເຜົ່າກໍ່ຊາບຊຶ້ງກ່ຽວກັບຄຳເວົ້າອຳມະຕະຂອງປະທານ ໂຮ່ຈິມິນ ດ້ວຍເຫດນັ້ນ ຈຳເປັນຕ້ອງຊ່ວຍເພື່ອນໄຂທາງສາຍພູຫຼວງທາງຕາເວັນຕົກ ເຊິ່ງຕໍ່ມາກໍ່ເອີ້ນເປັນເສັ້ນທາງໂຮ່ຈິມິນ. ເສັ້ນທາງດັ່ງກ່າວໄດ້ຜ່ານຕາມເມືອງຕ່າງໆຂອງ 7 ແຂວງ ຢູ່ລຽບຕາມສາຍພູຫຼວງຄື: ເມືອງຄຳເກີດ (ແຂວງບໍລິຄຳໄຊ), ເມືອງບົວລະພາ, ເມືອງນາກາຍ, ເມືອງຍົມມະລາດ, ເມືອງມະຫາໄຊ (ແຂວງຄຳມ່ວນ), ເມືອງວິລະບູລີ, ເມືອງເຊໂປນ, ເມືອງພີນ, ເມືອງນອງ (ແຂວງສະຫວັນນະເຂດ), ເມືອງຕຸ້ມລານ, ເມືອງຕະໂອ້ຍ, ເມືອງສະໝ້ວຍ (ແຂວງສາລະວັນ), ເມືອງທ່າແຕງ, ເມືອງລະມາມ (ແຂວງເຊກອງ), ເມືອງໄຊເສດຖາ, ເມືອງຊານໄຊ, ເມືອງພູວົງ (ແຂວງອັດຕະປື). ເສັ້ນທາງໂຮ່ຈິມິນ ບໍ່ພຽງແຕ່ຕິດພັນກັບຈຸໜ່ວຍນັກປະຕິວັດຫວຽດນາມຊຸດທຳອິດ ແຕ່ມັນຍັງມີສ່ວນຮ່ວມຂອງຊົນເຜົ່າຕ່າງໆທີ່ອາໄສຢູ່ສອງຟາກຂ້າງສາຍພູຫຼວງ ເຊັ່ນ: ຊົນເຜົ່າຕະໂອ້ຍ, ວັນກຽວ ແລະ ຢາຮາຍຢູ່ທາງພາກຕາເວັນອອກ ແລະ ຍັງມີພະນັກງານ, ນັກຮົບ ແລະ ປະຊາຊົນລາວບັນດາເຜົ່າຢູ່ທາງພາກຕາເວັນຕົກໄດ້ເຂົ້າຮ່ວມຕໍ່ຕ້ານກຳລັງຂອງສັດຕູຢ່າງຕໍ່ເນື່ອງ, ທັງໄດ້ຊ່ວຍລຳລຽງອາວຸດຍຸດໂທປະກອນ, ຊ່ວຍເບິ່ງແຍງລ້ຽງດູທະຫານຫວຽດນາມ ໃນສະຖານະການທີ່ຄັບຂັນ ແລະ ໃນຍາມເຈັບເປັນດ້ວຍຄວາມຮັກແພງຖະໜອມຄືກັນກັບລູກຫຼານຂອງຕົນ. ເສັ້ນທາງໂຮ່ຈິມິນ ລຽບສາຍພູຫຼວງເບື້ອງຕາເວັນຕົກໃນຍາມສົງຄາມໄດ້ກາຍເປັນສະໜາມຮົບອັນດຸເດືອດ ທີ່ໄດ້ສ້າງຄວາມສູນເສຍທັງຊີວິດ-ຊັບສິນຂອງປະຊາຊົນລາວເປັນຈຳນວນຫຼວງຫຼາຍ ແລະ ເປັນສະໜາມຮົບທີ່ທະຫານຫວຽດນາມໄດ້ສາມັກຄີກັບທະຫານ ແລະ ປະຊາຊົນລາວຕໍ່ສູ້ບົນຈິດໃຈສາກົນ, ຖານະມິດສະຫາຍອ້າຍນ້ອງດ້ວຍຢາດເຫື່ອ, ນ້ຳຕາ, ຢາດເລືອດ ແລະ ຊີວິດຂອງເຂົາເຈົ້າໄດ້ເຈືອຈານເຂົ້າກັນ ເພື່ອໄຊຊະນະຂອງການປະຕິວັດປົດປ່ອຍ ແລະ ທ້ອນໂຮມປະເທດຊາດ.

ພາລະກຳປະຫວັດສາດຂອງເສັ້ນທາງໂຮ່ຈິມິນທີ່ເກີດຈາກການຕໍ່ສູ້, ການບຸກເບີກ ແລະ ການປົກປັກຮັກສາ ເຊິ່ງໄດ້ສະແດງອອກໃນແຕ່ລະໄລຍະໂດຍສັງເຂບດັ່ງນີ້:

1. ໄລຍະທີໜຶ່ງ ແຕ່ປີ 1959-1964: ໃນວັນທີ 20 ພຶດສະພາ 1959 ກອງທະຫານຫວຽດນາມ ເຂດສາຍພູຫຼວງເລກ 559 ຖືກສ້າງຕັ້ງຂຶ້ນ ແລະ ມີພຽງໜຶ່ງກອງພັນຂະໜາດ 600 ຄົນ ທີ່ໄດ້ຍ່າງຢ່າງງຽບໆ

ຕາມເສັ້ນທາງດັ່ງກ່າວ ໂດຍຮັບປະກັນການຫຼີກເວັ້ນພົບປະກັບຜູ້ຄົນ ແລະ ສາຍຕາຂອງສັດຕູ ແລະ ຖືວ່າພາລະກິດນີ້ເປັນຄວາມລັບສຸດຍອດ ແລະ ເສັ້ນທາງໂຮ່ຈິມິນ ເລີ່ມຕົ້ນເປັນຮູບເປັນຮ່າງດ້ວຍວິທີນີ້ແຫຼະ. ມາຮອດໄລຍະຕໍ່ຕ້ານຈັກກະພັດອາເມລິກາ ຈຶ່ງມີກຸ່ມນັກສ້າງທາງຫວຽດນາມເຂົ້າມາ ແຕ່ລະກຸ່ມປະກອບມີ 15 ຄົນ ໂດຍໄດ້ຜ່ານການຝຶກອົບຮົບເປັນຢ່າງດີ ແລະ ສໍາຄັນທີ່ສຸດແມ່ນເປັນຄົນໜຸ່ມແໜ້ນ ອາຍຸພຽງແຕ່ 18-20 ປີ ທີ່ມີຄວາມຈົງຮັກພັກດີທີ່ສຸດ ແລະ ທັງເປັນຜູ້ມີປະສົບການໃນເສັ້ນທາງລໍາລຽງສາຍພູຫຼວງ. ກໍ່ເປັນທີ່ແນ່ນອນວ່າ ການດໍາລົງຊີວິດຢູ່ໃນເຂດພູເຂົາ ແລະ ປ່າດົງຂອງສາຍພູຫຼວງ ຄວາມຕາຍອາດເກີດຂຶ້ນໄດ້ໃນທຸກເວລາ ດ້ວຍຫຼາຍປັດໄຈ ເປັນຕົ້ນແມ່ນ ຂາດອາຫານ, ຂາດເຄື່ອງນຸ່ງຫົ່ມ, ເຈັບໄຂ້ຍ້ອນຂາດຢາປົວພະຍາດ. ຄຽງຄູ່ກັບຄວາມທຸກໂຫຍ ກໍ່ຍັງມີພະຍາດຕ່າງໆ ລະບາດ ເຊັ່ນ: ໂລກຕັບ, ໄຂ້ຍຸງ ແລະ ພະຍາດອື່ນໆຕາມລະດູການ ສິ່ງທີ່ໜັກໜ່ວງກວ່າໝູ່ນັ້ນກໍ່ແມ່ນການບຸກໂຈມຕີທາງອາກາດຂອງສັດຕູ. ຕະຫຼອດໄລຍະຕົກເປັນຫົວເມືອງຂຶ້ນຂອງຝຣັ່ງ ປະຊາຊົນໄດ້ເສຍສ່ວຍເປັນເງິນໝັ້ນ 12.449 ໝັ້ນ, ເຂົ້າສານ 289 ໂຕນ, ສັດລ້ຽງ (ຄວາຍ, ງົວ, ໝູ) 1.418 ໂຕ, ແຮງງານເປັນກຸລີ (ຄົນຮັບຈ້າງ) ແລະ ມີພະນັກງານປະຕິວັດເສຍຊີວິດ 9 ຄົນ, ທະຫານ 27 ຄົນ ແລະ ປະຊາຊົນ 54 ຄົນ. ສາຍພູຫຼວງ ເປັນຊາຍແດນຮ່ວມກັນລະຫວ່າງແຂວງສະຫວັນນະເຂດກັບແຂວງກວາງຈິ ແລະ ແຂວງກວາງບິ້ງຂອງຫວຽດນາມ ເຊິ່ງມີຊາຍແດນຍາວ 135,8 ກິໂລແມັດ, ກວມເອົາ 2 ເມືອງຄື: ເມືອງເຊໂປນ ແລະ ເມືອງນອງ. ເມືອງເຊໂປນແມ່ນເມືອງໜຶ່ງທີ່ກວມເອົາສາຍພູຫຼວງຫຼາຍກວ່າໝູ່ ໂດຍຕິດຈອດກັບເມືອງເລ້ຖຸ້ຍ (ແຂວງກວາງບິ້ງ) ແລະ ເມືອງເຮືອງຮວາ (ແຂວງກວາງຈິ) ເຊິ່ງປະກອບມີ 4 ດ່ານຄື: ດ່ານສາກົນແດນສະຫວັນ-ລາວບາວ, ດ່ານລາໂກ-ຕະລຸງ (ຄ້າຍທະຫານ 605), ດ່ານບ້ານໃໝ່-ບ້ານແຈ້ງ. ສ່ວນເມືອງນອງມີຊາຍແດນຕິດກັບເມືອງເຮືອງຮວາ (ແຂວງກວາງຈິ), ປະກອບມີ 1 ດ່ານທ້ອງຖິ່ນຄື: ດ່ານບ້ານແດນວິໄລ-ຕາແສງແທັງ (ຄ້າຍທະຫານ 613); ປະຊາຊົນທີ່ອາໄສຢູ່ໃນຂົງເຂດທີ່ກ່າວມານີ້ສ່ວນຫຼາຍແມ່ນເຜົ່າມະກອງ ແລະ ເຜົ່າຕຣີ.

ມາຮອດປີ 1964 ການສ້າງເສັ້ນທາງສໍາລັບລົດຍົນຍາວຫຼາຍສິບກິໂລແມັດ ເພື່ອເຊື່ອມຕໍ່ທາງຫຼວງເລກ 9 ແລະ ບ້ານສະດີ ໂດຍຂ້າມນໍ້າທີ່ບ້ານດົງ ໃນເວລານັ້ນ ນັກຮົບ 2.000 ຄົນ ໃນກອງພົນນ້ອຍ 98 ເຊິ່ງກໍາລັງສ້າງທາງຢ່າງຂຸ້ນຂ້ຽວ ແຕ່ກໍ່ປະສົບກັບບັນຫາຂາດແຄນ ໃນຂະນະທີ່ສະໜາມຮົບຈິທຽນ ກໍ່ຕ້ອງການສໍາພາລະທີ່ຈໍາເປັນສຸກເສີນ ຍ້ອນສາເຫດທີ່ນໍ້າເຊບັ້ງຫຽງຍິ່ງນອງ ລົດຂົນສົ່ງບໍ່ສາມາດຂ້າມໄປ-ມາໄດ້. ຢືນຢູ່ຕໍ່ໜ້າກັບຄວາມຮຽກຮ້ອງຕ້ອງການຂອງສະໜາມຮົບ ຄະນະບັນຊາກອງກໍາລັງ 559 ໄດ້ຕົກລົງສ້າງເຮືອແພໄມ້ແປ້ນເພື່ອຄ່ຽນສົ່ງລົດຂ້າມນໍ້າ ແຕ່ບັນດານັກສ້າງທາງຂອງກອງພັນ 98 ບໍ່ມີຄວາມຊໍານິຊໍານານກ່ຽວກັບວິຊາຊ່າງໄມ້ຈັກຄົນ. ແຕ່ກໍ່ໂຊກດີທີ່ມີນາງສາວເສືອງ ແລະ ຊຸມແມ່ຍິງໜຸ່ມກຸ່ມໜຶ່ງ ທີ່ເປັນສະມາຊິກຊາວໜຸ່ມກອງລະວັງໜ້າທີ່ມີຄວາມຮູ້ດ້ານນີ້ດີ ຈຶ່ງອາສາສະໝັກເຮັດວຽກທີ່ໜັກໜ່ວງ ແລະ ໃຊ້ເວລາສ້າງແພພຽງ 5 ວັນກໍ່ສໍາເລັດ. ພາຍຫຼັງສໍາເລັດຕະຫຼອດຄືນທໍາອິດນັ້ນ, ກອງພັນຍິງໜຸ່ມກອງລະວັງໜ້ານັ້ນບໍ່ໄດ້ລັບບໍ່ໄດ້ນອນໝົດຄືນ ເພາະຕ້ອງໄດ້ຄ່ຽນລົດຂົນສົ່ງ ຈໍານວນ 60 ຄັນ ແລະ ເຂົ້າອີກ 240ໂຕນລົງໄປພາກໃຕ້ ແລະ ພາຍໃນອີກເຈັດວັນຕໍ່ມາເຂົາເຈົ້າກໍ່ສາມາດຄ່ຽນລົດຂົນສົ່ງ ຈໍານວນ 400 ຄັນ ພ້ອມ

ເຂົ້າອີກ ຈຳນວນ 2.000 ໂຕນລົງສູ່ພາກໃຕ້. ໃນເດືອນເມສາ 1964 ກອງພັນຊາວໜຸ່ມກອງລະວັງໜ້າແຂວງແຫ້ງອານ ໄດ້ບຸກເບີກເສັ້ນທາງຈາກເນີນພູດົ້ງຕ້ຽນ ໄປຫາຈາອານທີ່ທາງເລກ 20 ໃນເວລາແຕ່ງກິນນັ້ນ ເຂົາເຈົ້າໄດ້ປ່ອຍໃຫ້ຄວັນໄຟລອຍຂຶ້ນຟ້າ ແລະພາໃຫ້ເສຍລັບ ຈຶ່ງມີເຮືອບິນຂອງສັດຕູ ຈຳນວນ 3 ລຳມາຖິ້ມລະເບີດໃສ່ກອງພັນ ເຊິ່ງມີກຳລັງ 500 ຄົນ ຕົກຢູ່ພາຍໃຕ້ຄວັນໄຟລະເບີດ ໃນນີ້, ເສຍຊີວິດ 7 ຄົນ ແລະ ໄດ້ຮັບບາດເຈັບ 17 ຄົນ. ນີ້ແມ່ນບົດຮຽນອັນເຈັບແສບ ທີ່ເກີດຈາກຄວາມບໍ່ຮອບຄອບຂອງກຳລັງ ແລະ ຖືກເຜີຍແຜ່ໄປທົ່ວກຳລັງ 559 ເພື່ອບໍ່ໃຫ້ເກີດຂຶ້ນອີກ. ຍ້ອນແນວນັ້ນ, ສັດຕູກໍ່ສົງໄສເຖິງການປະກົດຕົວຂອງຫວຽດກົງໃນຂົງເຂດດັ່ງກ່າວ ພວກເຂົາຈຶ່ງກັບມາຍິງທຳລາຍເຂດດັ່ງກ່າວເປັນເວລາ 100 ວັນຕິດຕໍ່ກັນ ແລະ ເຮັດໃຫ້ມີຜູ້ເສຍຊີວິດຕື່ມ 25 ຄົນ, ບາດເຈັບ 30 ຄົນ ແຕ່ເຖິງປານນັ້ນເສັ້ນທາງກໍ່ສຳເລັດກ່ອນຄາດໝາຍ 3 ວັນ ແລະ ນອກຈາກນັ້ນກໍ່ໄດ້ສຳເລັດການກໍ່ສ້າງ 3 ເສັ້ນທາງແພ່ງຍຸດທະສາດເໜືອ-ໃຕ້ຢູ່ສາຍພູຫຼວງ ດ້ວຍຄວາມທຸກຍາກລຳບາກ, ດ້ວຍຄວາມອຸທິດຕົນ, ເຈັບປວດຕໍ່ການສູ້ຊົນຜ່ານຜ່າອຸປະສັກ ແລະ ການສູນເສຍທີ່ໃຫຍ່ຫຼວງ.

2. ໄລຍະທີສອງ ປີ 1965-1968: ສົງຄາມຍິງທຳລາຍສະກັດກັ້ນການຊ່ວຍໜູນທາງອາກາດ ແລະທາງບົກຂອງອາເມລິກາບິນເສັ້ນທາງຊ່ວຍໜູນຍຸດທະສາດນັບມື້ນັບເພີ່ມຂຶ້ນ ບວກກັບອາວຸດທີ່ທັນສະໄໝ. ກ່ອນປີ 1964 ບໍ່ມີໃຜຈະຄິດຈະຝັນວ່າ ຈະມີເສັ້ນທາງລົດຍົນຖືກກໍ່ສ້າງຂຶ້ນເທິງຈອມພູຕ່າງໆຂອງສາຍພູຫຼວງ. ແຕ່ບໍ່ພໍເທົ່າໃດປີຜ່ານມາ ລະບົບເສັ້ນທາງຫຼວງໄດ້ໄປຮອດໄປເຖິງເຂດສົງຄາມນາມໂບະ ໂດຍຜ່ານທົ່ງພຽງ ແລະ ພູເຂົາຕ່າງໆ. ສະນັ້ນ, ຈຶ່ງສາມາດເວົ້າໄດ້ວ່າທຸກເສັ້ນທາງທີ່ເປັນ ເສັ້ນທາງໂຮ່ຈິມິນ ລ້ວນແລ້ວແຕ່ເປັນເສັ້ນທາງປິດລັບໃນໄລຍະສົງຄາມຕ້ານການຮຸກຮານຂອງພວກສັດຕູ. ອີກເສັ້ນທາງໜຶ່ງທີ່ສຳຄັນເຊິ່ງມີລະຫັດ 128 ເປັນທາງສອງແພ່ງຊື່ A ແລະ B ທັງສອງເສັ້ນທາງຕັດລົງໃຕ້ ໂດຍໃກ້ກັບທາງຫຼວງເລກ 9 ແລະ ຈອບກັບທາງເລກ 20 ໃກ້ກັບພູລະຍົກ. ບົນເສັ້ນທາງສາຍນີ້ ເປັນເສັ້ນທາງທີ່ຈະບໍ່ມີວັນຫຼົງລືມສຽງຄາງຫົ່ມໆຂອງເຊບັ້ງຫຽງ ຫຼື ກໍ່ວທ່າເມ ເຊິ່ງຖືກເຮືອບິນຖິ້ມລະເບີດ B 52 ຂອງສະຫະລັດອາເມລິກາໂຈມຕີຢ່າງດຸເດືອດຂ້ຽວຂາດ ໂດຍບໍ່ສົນໃຈກະຕິກາໃດໆ.

ລົງໃຕ້ໄປເລື້ອຍໆໃນເຂດສາຍພູຫຼວງຕາເວັນຕົກບົນຜືນແຜ່ນດິນລາວ ຈະໄດ້ພົບເສັ້ນທາງເລກ 35 ແລະ ທາງເລກ 49 ເຊິ່ງເຊື່ອມຕໍ່ກັບທາງເລກ 128 ແລະໃກ້ກັບເສັ້ນທາງແຕ່ສະໄໝສົງຄາມຕ້ານລ່າເມືອງຂຶ້ນຝຣັ່ງໃນຄະນະນັ້ນເອີ້ນວ່າ: ເສັ້ນທາງນາວາຣ໌ ແລະ ມີຫຼາຍໆເສັ້ນທາງທີ່ເຊື່ອມຕໍ່ກັບທາງນາວາຣ໌ ເຊິ່ງນຳໄປສູ່ທາງສາມແຍກອິນດູຈີນ ແລະ ສາມແຍກເຊຊູ. ບໍ່ເວົ້າກໍ່ຮູ້ນຳກັນແລ້ວວ່າ ຄວາມເຈັບປວດ ແລະ ຄວາມທໍລະຫົດອົດທົນບໍ່ຈັກຈະພັນລະນາທີ່ກອງພັນ 98 ປະສົບພົບພໍ້ໃນການສ້າງທາງດັ່ງກ່າວ ແຕ່ເດືອນເມສາ ເຖິງເດືອນມິຖຸນາ 1966 ເຮັດໃຫ້ທະຫານເສຍຊີວິດ 15 ຄົນ ແລະ ອີກ 150 ຄົນໄດ້ຮັບບາດເຈັບຈາກການໂຈມຕີທາງອາກາດ ແລະ ຈຳນວນໜຶ່ງກໍ່ເຈັບໄຂ້ໄດ້ປ່ວຍຈາກພະຍາດລະບາດຕ່າງໆ. ສິ່ງທີ່ກ່າວມານີ້ ຍັງບໍ່ໄດ້ກ່າວເຖິງເສັ້ນທາງປີກຍ່ອຍ, ຮ່ອມ, ຊອຍ ທີ່ໃຊ້ໃນການວົນວຽນປ່ຽນຫຼົບຫຼີກຍົນຍິງຂອງສັດຕູ ເຊິ່ງລ້ວນແຕ່ເປັນເສັ້ນທາງທີ່ແລກມາດ້ວຍເລືອດເນື້ອ, ເຫື່ອແຮງ ແລະ ຕ້ອງຖືກປິດລັບດ້ວຍເຫດຜົນນານາປະການ. ນອກນັ້ນ ກໍ່ບໍ່ໄດ້ກ່າວເຖິງຫ້ວຍນ້ຳລຳເຊຈຳນວນຫຼວງ

ຫຼາຍ ທີ່ຖືກນຳໃຊ້ໃນການລຳລຽງຂົນສົ່ງໃນຂົງເຂດສາຍພູຫຼວງ. ຕະຫຼອດໄລຍະບັ້ນໂຈມຕີໃນປີ 1968 ໂດຍຕິດຕໍ່ກັນເປັນເວລາ 170 ວັນ ກຳລັງຂອງພວກເຮົາກໍ່ສາມາດຍາດເອົາໄຊຊະນະຕໍ່ຖານທີ່ໝັ້ນແຄແຊ້ງ-ກອງບັນຊາການຄົບຊຸດ ເຊິ່ງສະຫະລັດຕັ້ງຄວາມຫວັງໄວ້ວ່າ ຈະໃຫ້ເປັນຖານທັບຍຸດທະສາດເຄື່ອນທີ່ສຳຄັນທີ່ສຸດ ເພື່ອຫວັງຄວບຄຸມທັງໝົດ 3 ປະເທດໃນອິນດູຈີນ ແລະ ເພື່ອຕັດເສັ້ນທາງລຳລຽງສຳພາລະຂອງຫວຽດນາມເໜືອ. ສະຫຼຸບແລ້ວ ເມື່ອເວົ້າເຖິງແນວທາງຍຸດທະສາດຂອງການປະຕິວັດລາວ ແຕ່ປີ 1964-1968 ແມ່ນໄລຍະປຸກລະດົມຂະບວນການສົງຄາມປະຊາຊົນ, ກໍ່ສ້າງກຳລັງປະກອບອາວຸດ 3 ປະເພດໃຫ້ເຂັ້ມແຂງ, ເປັນເສົາຄ້ຳໃຫ້ທົ່ວປວງຊົນຕີເອົາຊະນະຍຸດທະສາດ ສົງຄາມພິເສດ ຂອງຈັກກະພັດລ່າເມືອງຂຶ້ນແບບໃໝ່.

3. ໄລຍະທີສາມປີ 1969-1973: ບັ້ນຮົບລາມເຊີນ 719 ປະທານາທິບໍດີສະຫະລັດອາເມລິກາ ຣິຊາດ ນິກເຊີນ ໄດ້ວາງແຜນຍຸດທະສາດຍິ່ງໃຫຍ່ໂດຍອີງໃສ່ຄວາມສຳຄັນຂອງຂົງເຂດພາກໃຕ້ລາວ ເພື່ອຕັດເສັ້ນທາງລຳລຽງໄປສູ່ກຳປູເຈຍ ແລະ ຫວຽດນາມໃຕ້. ແຕ່ໃນຄວາມເປັນຈິງແລ້ວ ກ່ອນໜ້ານັ້ນ ກອງທັບອາກາດສະຫະລັດອາເມລິກາ ກໍ່ໄດ້ດຳເນີນທຳລາຍເສັ້ນທາງລຳລຽງດັ່ງກ່າວມາແລ້ວແບບປິດລັບ ໂດຍບໍ່ປະກາດໃຫ້ປະຊາຊົນອາເມລິກາ ແລະ ໂລກຮັບຮູ້ ເພາະວ່າຍ້ອນ ນິກເຊີນ ຍັງຕ້ອງການຢາກຮັກສາບົດບາດທາງການທະຫານທີ່ເຂັ້ມແຂງ ເພື່ອການເລືອກຕັ້ງອີກໃນສະໄໝຕໍ່ໄປ. ລັກສະນະ ແລະ ຈຸດພິເສດຂອງສົງຄາມຮຸກຮານ 3 ປະເທດອິນດູຈີນນັ້ນ, ເນື້ອແທ້ກໍ່ແມ່ນການຮຸກຮານທີ່ໂຫດຮ້າຍ, ປ່າເຖື່ອນ ເຊິ່ງພວກສັດຕູເອີ້ນວ່າ: ເຮັດສົງຄາມອິນດູຈີນເປັນສົງຄາມຂອງຄົນອິນດູຈີນ ໝາຍຄວາມວ່າ ເອົາຄົນອິນດູຈີນບຸກຕີ, ປາບປາມ ແລະ ຂ້າຄົນອິນດູຈີນ ພາຍຫຼັງສັດຕູປະລາໄຊໃນບັ້ນຮົບຫຼວງພະບາງ ໃນປີ 1962, ບັ້ນຮົບນ້ຳບາກປີ 1968 ແລະ ການປະຕິບັດທິດສະດີຂອງນິກເຊີນມາເປັນເວລາ 2 ປີ (1969-1970) ຈັກກະພັດອາເມລິກາໄດ້ປະລາໄຊຢ່າງໜັກໜ່ວງຢູ່ສະໜາມຮົບລາວ-ຫວຽດນາມ-ກຳປູເຈຍ ຢ່າງຕໍ່ເນື່ອງ. ຍ້ອນແນວນັ້ນ, ການທະຫານອາເມລິກາ ຈຶ່ງໄດ້ກຳນົດທິດທາງດ້ານຍຸດທະສາດແບບໃໝ່ ເຊິ່ງໄດ້ເປີດບັ້ນເຄື່ອນທັບດິວເວແຄນຍອນ 2 ຂຶ້ນຢູ່ສະໜາມຮົບອິນດູຈີນ ເພື່ອບຸກໂຈມຕີທັງ 3 ສະໜາມຮົບພ້ອມກັນ ແລະ ໄດ້ຕັດແບ່ງການຕິດຕໍ່ທາງດ້ານຍຸດທະສາດຂອງການປະຕິວັດ 3 ປະເທດ. ໃນເດືອນ 1 ປີ 1971 ພວກເຂົາບຸກໂຈມຕີເຂົ້າພາກຕາເວັນອອກສ່ຽງເໜືອຂອງກຳປູເຈຍ; ທັບກວາງຈຸ 1 ບຸກຕີເຂົ້າໄຕຫງວຽນ-ຫວຽດນາມ ແລະ ບັ້ນເຄື່ອນທັບລາມເຊີນ 719 ແຕ່ພາກໃຕ້ຫວຽດນາມບຸກໂຈມຕີເຂົ້າຕາມເສັ້ນທາງເລກ 9 ຫາ ພາກກາງຂອງລາວ. ພ້ອມດຽວກັນນັ້ນ ພວກເຂົາກໍ່ປະຕິບັດແຜນການຊ່ວຍໜູນທະຫານລາວ, ກຳລັງພິເສດວາງປາວ, ຊຸກຍູ້ກຳລັງຮັບຈ້າງຂອງໄທ ແລະ ກຳລັງພັນທະມິດຂອງອາເມລິກາຫຼາຍປະເທດ ເພື່ອຍາດເອົາທ່າແຮງຂອງສົງຄາມໃນອິນດູຈີນ.

ການປົດປ່ອຍພູພຽງບໍລະເວນ ຄັ້ງທີ 2 (1971-1972) ໃນວັນທີ 3-17/5/1971 ກຳລັງຫຼວງຂອງພວກເຮົາໄດ້ສົມທົບກັບກຳລັງທ້ອງຖິ່ນແຂວງສະຫວັນນະເຂດ ແລະ ກອງທະຫານອາສາສະໝັກຫວຽດນາມເຂົ້າປົດປ່ອຍເມືອງພະລານ, ເມືອງພິນ ແລະ ປົດປ່ອຍບໍລິເວນດົງເຫັນ ພ້ອມທັງຂົ່ມຂູ່ຖານທັບຈັກກະພັດອາເມລິກາ ແລະ ທະຫານຫຸ່ນລາວຢູ່ເຊໂນ, ໜອງຫີ້ງ, ພູໜອນເທົ່າ ແລະ ແກ້ງກອກ ເຮັດໃຫ້ກອງກຳລັງຂອງຝ່າຍກົງກັນຂ້າມສັ່ນຄອນ ແລະ ຄ່ອຍໆຍອມຈຳນົນ

ເຫື່ອລະກ້າວ. ທ້າຍປີ 1971 ພາຍຫຼັງສັດຕູປະລາໄຊໃນບັ້ນເຄື່ອນທັບຍຸດທະສາດລາມເຊີນ 719 ຈັກກະພັດອາເມລິກາໄດ້ແຍກກຳລັງອອກເປັນ 2 ພາກສ່ວນ ເພື່ອດຳເນີນການເຄື່ອນທັບບຽດຍຶດເອົາບັນດາພື້ນທີ່ຍຸດທະສາດຂອງພາກເໜືອ ແລະ ພາກໃຕ້ຂອງລາວ ເຊັ່ນ: ບຽດຍຶດເຂົ້າເຂດທົ່ງໄຫຫີນ-ຊຽງຂວາງ ແລະ ພູພຽງບໍລິເວນ, ເລົ່າງາມ (ສາລະວັນ) ແລະ ອີກສ່ວນໜຶ່ງຂອງທິດຕາເວັນຕົກແຂວງອັດຕະປື. ໃນປີ 1972 ພາຍຫຼັງບັ້ນຮົບລາມເຊີນ, ສົງຄາມຍັງມີຄວາມຜັນແປ ໂດຍສະເພາະແມ່ນກຳລັງຂອງລາວເອງເບື້ອງຕາເວັນຕົກ (ເມືອງພິນ). ສະນັ້ນ ຈຶ່ງມີແຕ່ກອງພັນ 14, 16, 18, 19 ເຖິງແມ່ນວ່າອາເມລິກາຈະຍອມເຊັນສັນຍາແລ້ວກໍ່ຕາມ ແຕ່ຫຼັງຈາກນັ້ນພວກເຂົາຍັງລະດົມກຳລັງບຸກເຂດປົດປ່ອຍອີກ. ຕໍ່ກັບສະພາບການດັ່ງກ່າວ ສູນກາງແນວລາວສ້າງຊາດໄດ້ສ້າງຕັ້ງດ້ານຮົບເລກ 9 (ກຸ່ມ 23 ພາກໃຕ້) ຂຶ້ນເພື່ອປະສານສົມທົບກັບກຳລັງຫຼວງ, ກອງທະຫານອາສາສະໝັກຫວຽດນາມ ເປີດບັ້ນໂຈມຕີສັດຕູລະດູແລ້ງ-ລະດູຝົນ ໃນ 1971-1972 ເພື່ອປົດປ່ອຍພື້ນທີ່ຍຸດທະສາດພູພຽງບໍລະເວນ, ສາລະວັນ, ອັດຕະປື ແລະ ແຫ່ງອື່ນໆໃນພາກໃຕ້ຂອງລາວ.

4. ໄລຍະທີສີ່ ປີ 1973-1975: ແມ່ນໄລຍະບົນເສັ້ນທາງປະຫວັດສາດແຫ່ງການຕໍ່ສູ້ກູ້ຊາດ, ການປະຕິວັດຊາດປະຊາທິປະໄຕ, ຄວາມຖືກຕ້ອງປອງດອງຊາດ ເພື່ອຕໍ່ຕ້ານການຮຸກຮານ ແລະ ປົດແອກຄອບຄອງຂອງພວກລ່າເມືອງຂຶ້ນແບບເກົ່າ-ແບບໃໝ່ ແລະ ປົດປ່ອຍປະເທດຊາດຢ່າງສົມບູນ ສ້າງຕັ້ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຂຶ້ນຢ່າງສະຫງ່າຜ່າເຜີຍ ໃນວັນທີ 2 ທັນວາ 1975. ສັນຕິພາບທີ່ຍາດມາໄດ້ນັ້ນແມ່ນແລກມາດ້ວຍຢາດເຫື່ອ, ເລືອດເນື້ອ ແລະ ດ້ວຍນໍ້າຕາ ຂອງປະຊາຊົນທັງຜືນແຜ່ນດິນ. ໃນໄລຍະປີ 1973-1975 ນີ້ ລຽບເສັ້ນທາງໂຮ່ຈິມິນ ປະຊາຊົນລາວບັນດາເຜົ່າທີ່ອາໃສຢູ່ເຂດສາຍພູຫຼວງຍັງປະສົບກັບບັນຫາອີກຢ່າງຍາວນານ ເຖິງແມ່ນວ່າ ສົງຄາມຈະສິ້ນໄປແລ້ວກໍ່ຕາມ ແຕ່ກໍ່ຍັງພົບກັບໄພຂົ່ມຂູ່ຈາກລະເບີດບໍ່ທັນແຕກແຕ່ປາງສົງຄາມ ດ້ວຍການຖິ້ມລະເບີດແບບປົດລັບຢ່າງໜັກໜ່ວງຂອງຈັກກະພັດອາເມລິກາ.

ສະຫຼຸບລວມແລ້ວ, ເສັ້ນທາງໂຮ່ຈິມິນ ລຽບສາຍພູຫຼວງເບື້ອງຕາເວັນຕົກໃນສະໄໝສົງຄາມ ແມ່ນກາຍເປັນສະໜາມຮົບອັນດຸເດືອດທີ່ໄດ້ສ້າງຄວາມສູນເສຍທັງຊີວິດ ແລະ ຊັບສິນຂອງປະຊາຊົນລາວບັນດາເຜົ່າເປັນຈຳນວນຫຼວງຫຼາຍ. ທັງເປັນສະໜາມຮົບທີ່ທະຫານຫວຽດນາມ ໄດ້ສາມັກຄີທະຫານ ແລະ ປະຊາຊົນ ລາວຕໍ່ສູ້ບົນຈິດໃຈສາກົນຖານສະຫາຍອ້າຍນ້ອງ, ຢາດເຫື່ອ, ນໍ້າຕາ, ຢາດເລືອດ ແລະ ຊີວິດຂອງສອງຊາດ ໄດ້ເຈືອຈານເຂົ້າກັນເປັນອັນໜຶ່ງອັນດຽວ ເພື່ອໄຊຊະນະຂອງການປະຕິວັດປົດປ່ອຍ ແລະ ທ້ອນໂຮມປະເທດຊາດຂອງພວກເຮົາ. ສາຍພູຫຼວງ ເຊິ່ງປຽບເໝືອນ ກະດູກສັນຫຼັງ ຂອງ 3 ປະເທດໃນແຫຼມອິນດູຈີນ. ນອກຈາກຈະເປັນປ່າດົງອົງກົດ ຫ້ວຍເລິກ-ເຫວຊັນ, ມີປ່າໄມ້ນານາຊະນິດ, ດອກໄມ້ ແລະ ສັດປ່ານານາພັນທີ່ປະກອບດ້ວຍທິວທັດທຳມະຊາດ ແລະ ສິ່ງແວດລ້ອມອັນສວຍສົດງົດງາມແລ້ວ ຍັງເປັນ ຖານທີ່ໝັ້ນ ອັນແໜ້ນໜາ ແລະ ມີຄວາມສຳຄັນຍິ່ງທາງດ້ານຍຸດທະສາດສຳລັບຂະບວນການຕໍ່ສູ້ຂອງປະຊາຊົນສາມຊາດຫວຽດນາມ-ລາວ-ກຳປູເຈຍ ຕ້ານແອກປົກຄອງຂອງລັດທິລ່າເມືອງຂຶ້ນແບບເກົ່າ ກໍ່ຄືການຕໍ່ສູ້ຕ້ານການຮຸກຮານ ແລະ ການຄອບຄອງຂອງລັດທິຈັກກະພັດລ່າເມືອງຂຶ້ນແບບໃໝ່ ພ້ອມດ້ວຍລູກແຫຼ້ງຕີນມືຂອງພວກເຂົາ...ຯ

ຕັ້ງໜ້າສ້າງເສດຖະກິດຄອບຄົວ ເພື່ອຍົກລະດັບຄຸນນະພາບຊີວິດການເປັນຢູ່ໃຫ້ດີຂຶ້ນ

ໂດຍ: ສັນຕິບານ

ການສ້າງເສດຖະກິດຄອບຄົວ ເປັນສິ່ງຈຳເປັນ ແລະ ສຳຄັນຫຼາຍ ເພາະມັນເປັນປັດໄຈພື້ນຖານ ໃນການພັດທະນາປະເທດຊາດໃຫ້ມີຄວາມເຂັ້ມແຂງ ຖ້າແຕ່ລະຄອບຄົວໄດ້ຮັບການພັດທະນາຕາມແນວທາງນະໂຍບາຍຂອງພັກ-ລັດຖະບານວາງໄວ້, ມີຄວາມ

ດຸໝັ່ນອອກແຮງງານ ກໍ່ຈະສາມາດສ້າງແຫຼ່ງລາຍຮັບຢ່າງຕໍ່ເນື່ອງແລ້ວກໍ່ຈະເຮັດໃຫ້ຄອບຄົວຮັ່ງມີເຂັ້ມແຂງ ເປັນການປະກອບສ່ວນເຂົ້າໃນການພັດທະນາປະເທດຊາດ ໃຫ້ຫຼຸດພົ້ນອອກຈາກຄວາມທຸກຍາກໄດ້.

ພັກ-ລັດຖະບານເຮົາ ຍາມໃດກໍ່ໄດ້ເອົາໃຈໃສ່ ແລະ ໄດ້ວາງແນວທາງ, ນະໂຍບາຍ ເພື່ອສ້າງເງື່ອນໄຂເອື້ອອຳນວຍ ແລະ ຊຸກຍູ້ແຕ່ລະຄອບຄົວໃນການສ້າງເສດຖະກິດ-ສັງຄົມໄປສູ່ຄຸນນະພາບໃໝ່ຢ່າງແຂງແຮງ ເພື່ອຍົກລະດັບຄຸນນະພາບຊີວິດການເປັນຢູ່ຂອງປະຊາຊົນໃຫ້ສູງຂຶ້ນ. ການສ້າງເສດຖະກິດຄອບຄົວໃຫ້ເຂັ້ມແຂງ ຈຶ່ງເປັນພື້ນຖານອັນຈຳເປັນ ແລະ ຮີບດ່ວນໃນການແກ້ໄຂຄວາມທຸກຍາກໃນສັງຄົມ; ກ່ອນທີ່ຄອບຄົວຈະມີຢູ່ມີກິນ, ມີຄວາມຮັ່ງມີຜາສຸກໄດ້ນັ້ນ ແຕ່ລະຄອບຄົວ, ແຕ່ລະຄົນ ຕ້ອງໄດ້ພັດທະນາຕົນເອງໃຫ້ມີຫົວຄິດປະດິດສ້າງ, ມີຄວາມດຸ

ໝັ່ນສູ້ຊົນ, ບຸກບືນ ເພື່ອນຳມາສູ່ຄວາມສຳເລັດ; ຖ້າມີຄວາມຕື່ນຕົວຫ້າວຫັນ ແລະ ດຳເນີນຕາມແນວທາງນະໂຍບາຍຂອງພັກ-ລັດຖະບານແລ້ວ ແນ່ນອນວັນໜຶ່ງກໍ່ຈະປະສົບຜົນສຳເລັດ ດັ່ງຄອບຄົວຂອງສະຫາຍພັນໂທ ພູວົງ ອິນທະວົງ ຢູ່ບ້ານມິດສຳພັນ, ເມືອງສະໜາມໄຊ, ແຂວງອັດຕະປື ເຊິ່ງເປັນຕົວແບບໃນການລ້ຽງງົວ ແລະ ເຮັດທຸລະກິດຄອບຄົວ.

ສະຫາຍ ພັນໂທ ພູວົງ ອິນທະວົງ ອາຍຸ 48 ປີ ປະຈຸບັນເປັນຫົວໜ້າພະແນກຄຸ້ມຄອງສຳມະໂນຄົວ, ເປັນຮອງເລຂາໜ່ວຍພັກພະແນກສຳມະໂນຄົວ ເມືອງສະໜາມໄຊ, ແຂວງອັດຕະປື. ສະຫາຍ ໄດ້ເລົ່າສູ່ຟັງວ່າສະຫາຍເຂົ້າການປະຕິວັດ ວັນທີ 10/10/1994 ຖິ່ນກຳເນີດຢູ່ບ້ານທຸມແບ່ງ, ເມືອງນາຊາຍທອງ, ນະຄອນຫຼວງວຽງຈັນ. ໃນລະຫວ່າງປີ 1994 ຫາ 1996 ໄດ້ໄປຮຽນຢູ່ໂຮງຮຽນທິດສະດີໜອງບົວທອງ, ນະຄອນຫຼວງວຽງຈັນ, ຫຼັງຈາກຮຽນຈົບກໍ່ໄດ້ຍົກຍ້າຍມາປະຈຳການຢູ່ກອງບັນຊາການ ປກສ ເມືອງສະໜາມໄຊ ແຂວງອັດຕະປື, ມາຮອດປີ 2000 ໄດ້ສ້າງຄອບຄົວກັບນາງ ສີສຸພັນ ດວງມາລາ ປະຈຸບັນ ມີລູກຮ່ວມກັນ 3 ຄົນ; ສະຫາຍກ່າວວ່າ ໃນເມື່ອກ່ອນຄອບຄົວແມ່ນຢຶດຖືອາຊີບເປັນພະນັກງານ ແລະ ເຮັດນາເປັນອາຊີບຫຼັກ ລາຍຮັບແມ່ນອາໄສແຕ່ເງິນເດືອນທາງດຽວ ພໍແຕ່ກຸ້ມຢູ່ກຸ້ມກິນໃນເວລານັ້ນ, ຕໍ່ມາສະພາບເສດຖະກິດຄອບຄົວພົບຄວາມພົບຄວາມຫຍຸ້ງຍາກ ຍ້ອນມີພາລະ ແລະ ການໃຊ້ຈ່າຍເພີ່ມຂຶ້ນ, ລາຍຮັບບໍ່ພຽງພໍກັບຄວາມຕ້ອງການ ສະນັ້ນ, ຕົນເອງໃນນາມເປັນພະນັກງານລັກຜູ້ໜຶ່ງ ທີ່ພໍມີຄວາມຮູ້ຄວາມສາມາດ ແລະ ກໍໄດ້ແນວທາງນະໂຍບາຍຂອງພັກ-ລັດຖະບານ ຈຶ່ງໄດ້ຄົ້ນຄິດຊອກຫາທາງອອກ ໂດຍຫັນເອົາແນວທາງນະໂຍບາຍດັ່ງກ່າວມາຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ ເພື່ອພັດທະນາຄອບຄົວຕົນເອງໃຫ້ຫຼຸດພົ້ນອອກຈາກຄວາມທຸກຍາກ ຈຶ່ງໄດ້ປຶກສາກັບຄອບຄົວວ່າຈະເຮັດຫຍັງເສີມໃຫ້ເໝາະສົມກັບເງື່ອນໄຂ ແລະ ທ່າແຮງທີ່ມີຢູ່ ເພື່ອສ້າງແຫຼ່ງລາຍຮັບເພີ່ມໃຫ້ຄອບຄົວດີຂຶ້ນ; ມາຮອດປີ 2001 ຈຶ່ງໄດ້ລົງ ທຶນຊື້ງົວ 5 ໂຕ, ແມ່ 3 ໂຕ ໃນມູນຄ່າ 2.500.000 ກີບ ມາລ້ຽງ ດ້ວຍກ້ອນທຶນທີ່ເກັບອອມໄດ້ ຍ້ອນເຫັນວ່າເງື່ອນໄຂເອື້ອຍອຳນວຍ ມີເນື້ອທີ່ຮອງຮັບ ແລະ ຕົນເອງກໍ່ມັກຮັກໃນການລ້ຽງສັດໃຫຍ່ແບບທຳມະຊາດ ແບບລ້ຽງປ່ອຍ, ມາຮອດປີ 2003 ເຫັນວ່າໄດ້ຮັບຜົນດີ ງົວກໍ່ໄດ້ເພີ່ມຂຶ້ນທຸກປີຈາກ 5 ໂຕເປັນ 10 ໂຕ ຈຶ່ງໄດ້ຊື້ມາຕື່ມອີກ 5 ໂຕ ລວມເປັນ 15 ໂຕ. ຈາກນັ້ນມາງົວກໍ່ໄດ້ມີການຂະຫຍາຕົວຂຶ້ນເລື້ອຍໆ ມາຮອດປະຈຸບັນມີງົວທັງໝົດ 90 ກວ່າໂຕ. ການຂາຍແມ່ນຂາຍອອກເປັນຊຸດ ບໍ່ໄດ້ຂາຍຍ່ອຍ ໂດຍມີພໍ່ຄ້າມາຮັບຊື້ຢູ່ກັບທີ່, ລາຍຮັບຈາກການຂາຍງົວສະເລ່ຍແລ້ວປີໜຶ່ງປະມານ 85 ລ້ານກີບ ສະເພາະກຳໄລ. ຍ້ອນເຫັນວ່າມີຜົນຕອບຮັບດີ ແລະ ມີກຳໄລເປັນທີ່ເພິ່ງພໍໃຈ ສະຫາຍຈຶ່ງໄດ້ຂະຫຍາຍເນື້ອທີ່ ໂດຍຊື້ດິນເພີ່ມອີກ 5 ເຮັກຕາ ແລະ ລ້ອມຮົ້ວປູກຫຍ້າລ້ຽງງົວ.

ວິທີການລ້ຽງສ່ວນຫຼາຍແມ່ນລ້ຽງປ່ອຍ ຕອນເຊົ້າປ່ອຍໃຫ້ງົວໄປຫາກິນຫຍ້າເອງ ຕອນແລງຈຶ່ງຕ້ອນເຂົ້າຄອກ ການລ້ຽງແບບທຳມະຊາດນີ້ເຫັນວ່າສະດວກດີ ບໍ່ຈຳເປັນຕ້ອງມີເນື້ອທີ່ຫຼາຍ ຕົ້ນທຶນ ແລະ ແຮງງານກໍບໍ່ເປືອງ. ຜົນສຳເລັດຄືດັ່ງກ່າວ ຖ້າທຽບໃສ່ຄວາມຮຽກຮ້ອງຕ້ອງການຕົວຈິງຂອງຄອບຄົວແລ້ວ ຍັງບໍ່ທັນສ້າງຄວາມເພິ່ງພໍໃຈໃຫ້ກັບຄອບຄົວໄດ້ເທື່ອ ແລະ ຄວາມຈະເລີນເຕີບໂຕຂອງສັດລ້ຽງ

ກໍ່ຍັງບໍ່ທັນຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງຕະຫຼາດເທື່ອ ຍ້ອນການລ້ຽງຍັງອາໃສແບບທຳມະຊາດຫຼາຍ, ເຕັກນິກວິທີການລ້ຽງແບບວິທະຍາສາດຍັງບໍ່ທັນສູງ, ການບົວລະບັດການດູແລຮັກສາ ເປັນຕົ້ນການສັກຢາປິ່ນປົວ ແລະ ປ້ອງກັນພະຍາດຍັງບໍ່ທັນມີບົດຮຽນເທົ່າທີ່ຄວນ; ສະນັ້ນ, ໃນຕໍ່ໜ້າ ຈະໄດ້ໄປຖອດຖອນບົດຮຽນນຳຫ້ອງການກະສິກຳ-ປ່າໄມ້ເມືອງ, ພະແນກກະສິກຳ-ປ່າໄມ້ແຂວງ ແລະ ຜູ້ທີ່ມີຄວາມຮູ້, ມີປະສົບການ ເພື່ອນຳເອົາບົດຮຽນມາປັບປຸງ, ໝູນໃຊ້ເຂົ້າໃນວິທີການລ້ຽງໃຫ້ຖືກຕ້ອງຕາມເຕັກນິກວິທະຍາສາດ ເປັນຕົ້ນວິທີການດູແລປິ່ນປົວສັດ ແລະ ສັກຢາກັນພະຍາດຕ່າງໆ.

ຈາກຜົນສຳເລັດດັ່ງກ່າວ ໄດ້ເຮັດໃຫ້ຄອບຄົວມີລາຍຮັບດີຂຶ້ນເລື້ອຍໆ ສາມາດມີທຶນຮອນສົ່ງເສີມລູກໄດ້ສຶກສາຮ່ຳຮຽນ, ມີເຮືອນຊານແໜ້ນໜາຖາວອນ, ມີລົດຂີ່ ແລະ ລົດຂົນສົ່ງນ້ຳດື່ມ-ນ້ຳກ້ອນ 3 ຄັນ ແລະ ມີທຶນສ້າງໂຮງງານນ້ຳດື່ມ, ນ້ຳກ້ອນ ເພື່ອເສີມຂະຫຍາຍທຸລະກິດຂອງຄອບຄົວ. ທັງໝົດນັ້ນ ຍ້ອນຄອບຄົວມີຄວາມປຸ້ມລຸມສາມັກຄີກັນ, ມີຄວາມມັກຮັກໃນອາຊີບ, ມີຄວາມດຸໝັ່ນອົດທົນ, ທີ່ສຳຄັນ ແມ່ນຍ້ອນມີແນວທາງຂອງພັກ-ລັດຖະບານ ກໍ່ຄືໄດ້ຮັບການຊຸກຍູ້ສົ່ງເສີມຈາກຂັ້ນເທິງ ເປັນຕົ້ນຫ້ອງການກະສິກຳເມືອງ, ພະແນກກະສິກຳແຂວງ ແລະ ອົງການປົກຄອງບ້ານ ເອົາໃຈໃສ່ໃຫ້ຄຳແນະນຳຢ່າງໃກ້ຊິດ.

ຖຽງຄູ່ກັບຜົນສຳເລັດດັ່ງກ່າວນັ້ນກໍ່ຍັງພົບຄວາມຫຍຸ້ງຍາກຫຼາຍດ້ານເຊັ່ນການປິ່ນປົວພະຍາດສັດລ້ຽງ ແລະ ສະຖານທີ່ລ້ຽງສັດມີຈຳກັດ. ໃນອະນາຄົດ ແມ່ນມີແຜນຂະຫຍາຍເນື້ອທີ່ປູກຫຍ້າລ້ຽງສັດຈາກ 5 ເຮັກຕາໃຫ້ໄດ້ 10 ເຮັກຕາ ສືບຕໍ່ລ້ຽງງົວໃຫ້ຫຼາຍກາຍເປັນສິນຄ້າ ເພື່ອຕອບສະໜອງຕະຫຼາດໃຫ້ຫຼາຍຂຶ້ນ ສືບຕໍ່ປັບປຸງວິທີ ແລະ ເຕັກນິກການລ້ຽງແບບໃໝ່ແບບວິທະຍາສາດ, ທັງເຮັດທັງຖອດຖອນບົດຮຽນໄປນຳ ແລະ ຈະສູ້ຊົນລ້ຽງງົວ ເພື່ອຂາຍເປັນສິນຄ້າປີໜຶ່ງໃຫ້ມີລາຍຮັບ100 ລ້ານກີບຂຶ້ນໄປ...ຯ

ຍ້ອນຫຍັງ ໝູ່ຄະນະ, ພະນັກງານນຳພາ-ຄຸ້ມຄອງ ສ່ວນຫຼາຍ ຈຶ່ງລະເມີດຫຼັກການລວມສູນປະຊາທິປະໄຕ ?

ແປ ແລະ ຮຽບຮຽງໂດຍ: ຄຳພອນ ລໍສະຫວັດ

ໃນຊຸມປີຜ່ານມາມໍ່ໆນີ້, ພາຍຫຼັງກອງປະຊຸມແຕ່ລະສະໄໝ, ຄະນະກວດກາສູນກາງພັກໄດ້ເຜີຍແຜ່ບົດສະຫຼຸບກ່ຽວກັບການເຄື່ອນໄຫວວຽກງານຂອງຕົນຂຶ້ນເທິງສື່ມວນຊົນ (ສື່ອອນໄລ), ໃນນັ້ນມີບົດສະຫຼຸບກ່ຽວກັບການປະຕິບັດວິໄນ, ໜັງສືສະເໜີຄະນະບໍລິຫານງານສູນກາງພັກ, ກົມການເມືອງ, ຄະນະເລຂາທິການສູນກາງພັກປະຕິບັດວິໄນຕໍ່ພະນັກງານ-ສະມາຊິກພັກຜູ້ທີ່ລະເມີດລະບຽບວິໄນ.

ພະນັກງານ-ສະມາຊິກພັກ, ປະຊາຊົນຈຳນວນຫຼາຍໄດ້ຊົມເຊີຍເຖິງການເຜີຍແຜ່ການເຄື່ອນໄຫວຂອງພັກຢ່າງໂປ່ງໃສ, ໃນນັ້ນມີແຈ້ງການທີ່ລະບຸເຖິງຊື່ພະນັກງານ-ສະມາຊິກພັກຜູ້ທີ່ລະເມີດລະບຽບວິໄນເພາະສໍ້ລາດບັງຫຼວງ, ຟຸມເຟືອຍ, ຂາດຄວາມຮັບຜິດຊອບສ້າງຄວາມເສຍຫາຍຮ້າຍແຮງຕໍ່ພັກ, ໃນໄລຍະ 5-6 ປີຜ່ານມາ, ເກີດມີເຫດການຄະນະປະຈຳ, ເລຂາຄະນະພັກທີ່ຂຶ້ນກັບສິດອຳນາດຂອງສູນກາງ, ຂຶ້ນກັບສິດຄຸ້ມຄອງຂອງກົມການເມືອງ, ຄະນະເລຂາທິການສູນກາງພັກໄດ້ລະເມີດຫຼັກການລວມສູນປະຊາທິປະໄຕ; ສະພາບເຫດການດັ່ງກ່າວເປັນເຫດການເຕືອນໄພເພາະຄະນະພັກ, ເລຂາຄະນະພັກລະເມີດຫຼັກການພື້ນຖານແລະສຳຄັນທີ່ສຸດຂອງພັກ.

ໃນແຈ້ງການສະບັບລ່າສຸດ ພາຍຫຼັງກອງປະຊຸມໃຫຍ່ຄັ້ງທີ IV, ວັນທີ14-16/06/2021 ຂອງຄະນະກວດກາສູນກາງພັກໃຫ້ຮູ້: ໃນໄລຍະປີ 2015-2020 ຄະນະປະຈຳພັກແຂວງບິ່ງເຢືອງ (Bình Dương) ແລະ ຄະນະບໍລິຫານງານພັກ, ຄະນະກຳມະການປະຊາຊົນແຂວງບິ່ງເຢືອງ (Bình Dương) ໄດ້ລະເມີດຫຼັກການລວມສູນປະຊາທິປະໄຕ ແລະ ແບບແຜນວິທີເຮັດວຽກ, ຂາດຄວາມຮັບຜິດຊອບ, ປະລະການນຳພາ-ຊີ້ນຳ, ບໍ່ມີການຕິດຕາມ, ກວດກາ, ປະປ່ອຍໃຫ້ການຈັດຕັ້ງພັກ, ສະມາຊິກພັກຈຳນວນໜຶ່ງລະເມີດຂໍ້ກຳນົດຂອງພັກ ແລະ ກົດໝາຍຂອງລັດໃນການຄຸ້ມຄອງ, ນຳໃຊ້ທີ່ດິນ, ງົບປະມານ, ຊັບສິນຢູ່ບໍລິສັດຜະລິດ ແລະ ສົ່ງອອກ-ນຳເຂົ້າບິ່ງເຢືອງ (Bình Dương) ສ້າງຄວາມເດືອດຮ້ອນໃຫ້ສັງຄົມ, ສ້າງຄວາມເສຍຫາຍຢ່າງໃຫຍ່ຫຼວງຕໍ່ພັກ, ສະມາຊິກພັກຖືກດຳເນີນຄະດີອາຍາ, ສົ່ງຜົນກະທົບບໍ່ດີຕໍ່ຄວາມໄວ້ວາງໃຈຂອງຄະນະພັກ ແລະ ອຳນາດການປົກຄອງທ້ອງຖິ່ນ; ການລະເມີດຫຼັກການລວມສູນປະຊາທິປະໄຕໄດ້ເກີດຂຶ້ນຢູ່ໃນຄະນະບໍລິຫານງານພັກຂອງບັນດາກະຊວງ, ຂະແໜງການ, ແຂວງ, ນະຄອນດັ່ງນີ້: ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ກະຊວງໂຍທາທິການ ແລະ ຂົນສົ່ງ, ກຸ່ມບໍລິສັດນ້ຳມັນ ແລະ ອາຍແກັສຫວຽດນາມ, ກຸ່ມບໍລິສັດເຄມີຫວຽດ

ນາມ, ທະນາຄານແຫ່ງລັດຫວຽດນາມ (ໃນໄລຍະປີ 2011-2016) ກອງບັນຊາການ ປກສ ແຂວງ ດົ່ງນາຍ (Đồng Nai).

ໃນມະຕິກອງປະຊຸມຂອງຄະນະບໍລິຫານງານສູນກາງພັກ ຄັ້ງທີ IV (ສະໄໝທີ XII) ຄະນະບໍລິຫານງານສູນກາງພັກໄດ້ຊີ້ໃຫ້ເຫັນຢ່າງຊັດເຈນເຖິງຂໍ້ຈຳກັດ, ຈຸດອ່ອນໃນການປະຕິບັດ ຫຼັກການລວມສູນປະຊາທິປະໄຕຢູ່ຫຼາຍບ່ອນຖືກປ່ອຍປະລະເລີຍ, ທັງປະຕິບັດລະບອບຕິຊົມຕົນເອງ, ຕິຊົມກັນກໍ່ບໍ່ເຂັ້ມງວດ[1] .

ມາຮອດກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XIII ຂອງພັກກອມມູນິດຫວຽດນາມ, ພັກກອມມູນິດຫວຽດນາມສືບຕໍ່ຊີ້ແຈງສະຖານະການ ແລະ ສະພາບການປະຕິບັດຫຼັກການລວມສູນປະຊາທິປະໄຕໃນໄລຍະຜ່ານມາ; ການປະຕິບັດບັນດາຫຼັກການກໍ່ສ້າງພັກ, ເປັນຕົ້ນແມ່ນຫຼັກການລວມສູນປະຊາທິປະໄຕຢູ່ບາງການຈັດຕັ້ງພັກຍັງບໍ່ທັນເຂັ້ມງວດ, ຍັງມີການລະເມີດວິໄນ.

ຕັ້ງແຕ່ມີການລະເມີດຫຼັກການລວມສູນປະຊາທິປະໄຕໃນໄລຍະຜ່ານມາ, ພະນັກງານ-ສະມາຊິກພັກ, ປະຊາຊົນຕັ້ງບັນຫາຂຶ້ນວ່າ: ເປັນຫຍັງນັບມື້ນັບມີຄະນະປະຈຳພັກ, ພະນັກງານນຳພາ-ຄຸ້ມຄອງ ຂັ້ນຍຸດທະສາດທີ່ຂຶ້ນກັບສິດຄຸ້ມຄອງຂອງກົມການເມືອງ, ຄະນະເລຂາທິການສູນກາງພັກລະເມີດຫຼັກການທີ່ສຳຄັນທີ່ສຸດໃນການເຄື່ອນໄຫວຂອງພັກ?;

ກ່ອນອື່ນໝົດ, ຫຼັກການລວມສູນປະຊາທິປະໄຕປຽບດັ່ງເສົາຄໍ້າຂອງພັກ, ເປັນໂຄງສ້າງຂອງການຈັດຕັ້ງ, ແບບແຜນວິທີເຮັດວຽກ, ສ້າງຄວາມເປັນເອກະພາບດ້ານຄວາມຮັບຮູ້, ດ້ານການຈັດຕັ້ງປະຕິບັດ, ຈັດການ ແລະ ແກ້ໄຂສາຍພົວພັນພາຍໃນພັກ, ຕົ້ນຕໍແມ່ນວຽກງານພະນັກງານ, ມະຫາຊົນ, ປະຊາຊົນ ແລະ ວຽກງານຕ່າງປະເທດ.

ໃນຄວາມຈິງແລ້ວ, ທາດແທ້ ແລະ ຄວາມສຳຄັນຂອງຫຼັກການດັ່ງກ່າວປະທານ ໂຮ່ຈິມິນ ໄດ້ອະທິບາຍໄວ້ໃນບົດລາຍງານຂອງເພິ່ນຢ່າງລະອຽດຈະແຈ້ງແລ້ວແຕ່ປີ 1948, ໄລຍະນັ້ນຫຼັກການລວມສູນປະຊາທິປະໄຕເອີ້ນວ່າ: ວິທີການເຮັດວຽກນຳພາເປັນໝູ່ຄະນະບຸກຄົນຮັບຜິດຊອບ[2] ເປັນເນື້ອໃນຢູ່ໃນບົດລາຍງານຂອງປະທານ ໂຮ່ຈິມິນ ໄດ້ ໃຊ້ນາມປາກກາ X.Y.Z ແລະ ຕີພິມຂຶ້ນເທິງໜັງສືພິມຊື່ເທິດ (sự thật) ສະບັບເລກທີ 100, ລົງວັນທີ 23-09-1948; ປະທານ ໂຮ່ຈິມິນ ໄດ້ອະທິບາຍຢ່າງຈະແຈ້ງ ແລະ ໃຫ້ເຂົ້າໃຈງ່າຍ ດັ່ງນີ້: ນຳພາເປັນໝູ່ຄະນະແມ່ນປະຊາທິປະໄຕ; ບຸກຄົນຮັບຜິດຊອບແມ່ນລວມສູນ; ນຳພາເປັນໝູ່ຄະນະ, ບຸກຄົນຮັບຜິດຊອບແມ່ນປະຊາທິປະໄຕລວມສູນ ແລະ ປະທານ ໂຮ່ຈິມິນ ກໍ່ໄດ້ເວົ້າເຖິງຄວາມຮັບຜິດຊອບຢ່າງຊັດເຈນວ່າ: ຜູ້ໃດຮັບຜິດຊອບຈັດຕັ້ງປະຕິບັດ, ແຕ່ບໍ່ຈັດຕັ້ງປະຕິບັດຕາມສຽງສ່ວນຫຼາຍຕັດສິນ, ບໍ່ປະຕິບັດຕາມໜ້າທີ່ຂອງຕົນ ຜູ້ນັ້ນກໍ່ບໍ່ສົມຄວນທີ່ຈະເປັນຜູ້ນຳ[3].

ດັ່ງນັ້ນ, ເພື່ອໃຫ້ເຂົ້າໃຈງ່າຍ ແລະ ຖືກຕ້ອງຕາມທາດແທ້ຂອງຫຼັກການລວມສູນປະຊາທິປະໄຕ ຕໍ່ມາຈຶ່ງເອີ້ນວ່າ: ນຳພາເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ.

ໃນປະຈຸບັນ, ໝູ່ຄະນະ, ຄະນະປະຈຳພັກ, ສະມາຊິກພັກທີ່ເປັນສະມາຊິກໃນຄະນະປະຈຳພັກ ແລະ ເລຂາຄະນະພັກແຕ່ລະຂັ້ນທີ່ຂຶ້ນກັບສູນກາງ ສ່ວນຫຼາຍແມ່ນມີວຸດທິການສຶກສາລະດັບສູງ, ປະສົບການເຮັດວຽກຫຼາຍ, ຜ່ານຫຼາຍສະພາບແວດລ້ອມ, ໄດ້ສຶກສາຮ່ຳຮຽນ-ຄົ້ນຄວ້າ, ຜ່ານປະສົບການຢູ່ຫຼາຍໂຮງຮຽນກໍ່ຄືປະສົບການໃນການດຳລົງຊີວິດຕົວຈິງ...ສະນັ້ນ, ຈຶ່ງບໍ່ສາມາດເວົ້າໄດ້ເລີຍວ່າຕົນເອງບໍ່ຮູ້, ບໍ່ຈື່, ບໍ່ເຂົ້າໃຈ, ເນື້ອໃນບໍ່ແຈ້ງ, ບໍ່ເຂົ້າ ໃຈຄວາມຕ້ອງການຂອງຫຼັກການ

ລວມສູນປະຊາທິປະໄຕ.

I. ການລະເມີດຫຼັກການລວມສູນປະຊາທິປະໄຕໃນໄລຍະຜ່ານມາ ແມ່ນຍ້ອນສາເຫດດັ່ງນີ້:

1. ໝູ່ຄະນະ, ພະນັກງານນຳພາ-ຄຸ້ມຄອງ ເປັນຕົ້ນແມ່ນຜູ້ເປັນຫົວໜ້າຂາດຄວາມຮັບຜິດຊອບ, ເຮັດຕາມອຳເພີໃຈຕົນເອງໂດຍບໍ່ແຈ້ງໃຫ້ໝູ່ຮັບຮູ້, ບໍ່ມີຄວາມເປັນແບບຢ່າງໃນການປະຕິບັດຫຼັກການລວມສູນປະຊາທິປະໄຕໃນການເຄື່ອນໄຫວຂອງພັກ; ພວກເຮົາບໍ່ໄດ້ຂາດແຄນນິຕິກຳ, ຄຳແນະນຳໃນການຈັດຕັ້ງປະຕິບັດຫຼັກການລວມສູນປະຊາທິປະໄຕ, ພຽງແຕ່ຂາດຄວາມຮັບຜິດຊອບ, ຂາດຄວາມເປັນແບບຢ່າງໃນການປະຕິບັດຫຼັກການຂອງພັກ; ການລະເມີດຫຼັກການປະຊາທິປະໄຕຂອງຄະນະປະຈຳພັກ, ຂອງຜູ້ເປັນຫົວໜ້າໃນໄລຍະຜ່ານມາ ສ່ວນຫຼາຍແມ່ນພົບເຫັນຢູ່ຂົງເຂດທີ່ດິນ, ຊັບພະຍາກອນ, ການອະນຸມັດ ແລະ ການປະຕິບັດໂຄງການ, ໂຄງການພັດທະນາເສດຖະກິດ-ສັງຄົມ, ການຕີລາຄາ, ແຜນກຳນົດ, ເລື່ອນຕຳແໜ່ງ, ນຳໃຊ້ພະນັກງານ...ໃນຂົງເຂດທີ່ກ່າວຂ້າງເທິງລ້ວນແລ້ວແຕ່ມີນິຕິກຳສະເພາະ, ຂໍ້ກຳນົດ, ຄຳແນະນຳຢ່າງຄົບຖ້ວນ, ເຂັ້ມງວດ ແລະ ໜັກແໜ້ນ...ຍ້ອນເຫດຜົນຫຼາຍຢ່າງ, ໃນນັ້ນມີຜົນປະໂຫຍດສ່ວນຕົວ, ຜົນປະໂຫຍດກຸ່ມກ້ອນ, ສາຍພົວພັນຄອບຄົວ, ຜົວ-ເມຍ, ລູກ, ສາຍພົວພັນສະໜິດສະໜົມປອງດອງກັນ ຈົນບໍ່ຄຳນຶງເຖິງອັນຜິດ-ອັນຖືກຈົນ ລືມ ປະຕິບັດຫຼັກການສຳຄັນຂອງພັກ; ການລະເມີດ ແລະ ຂໍ້ບົກພ່ອງທີ່ຊັດເຈນ, ເຮັດໃຫ້ໃຫ້ປະຊາຊົນຕິດຕາມເບິ່ງ ກໍ່ຮູ້ໄດ້ວ່າ ຜິດ ຫຼື ຖືກ.

2. ປ່ອຍປະລະເລີຍການນຳພາ-ຊີ້ນຳວຽກງານຕິດຕາມ, ກວດກາການປະຕິບັດຫຼັກການສຳຄັນຂອງພັກ; ໃນແຈ້ງການ ຂອງຄະນະກວດກາສູນກາງພັກກ່ຽວກັບການລະເມີດຫຼັກການປະຊາທິປະໄຕ ຈຸດອ່ອນສ່ວນຫຼາຍແມ່ນຕິດພັນກັບການ ນຳພາ-ຊີ້ນຳ ແລະຖືເບົາ ຫຼື ປ່ອຍປະລະເລີຍວຽກງານຕິດຕາມ, ກວດກາ; ການນຳພາ-ຊີ້ນຳ ແລະ ຕິດຕາມ, ກວດກາ ເປັນສອງດ້ານພື້ນຖານຕິດພັນກັນຢ່າງແໜ້ນແຟ້ນ; ພັກກອມມູນິດຫວຽດນາມຖອດຖອນບົດຮຽນໄດ້ວ່າ: ຖ້າມີການນຳພາກໍ່ຕ້ອງມີການກວດກາ, ຖ້າບໍ່ມີການກວດກາກໍ່ຖືວ່າບໍ່ໄດ້ນຳພາ(4); ປະທານ ໂຮ່ຈີມິນ ສະຫຼຸບຖອດຖອນບົດຮຽນຕົວຈິງ: 9/10 ຈຸດອ່ອນຂອງວຽກງານພວກເຮົາແມ່ນຍ້ອນຂາດການຕິດຕາມ, ກວດກາ(5); ບັນຫາປ່ອຍປະລະເລີຍຕໍ່ວຽກງານນຳພາ, ຕິດຕາມ, ກວດກາຢູ່ນີ້ແມ່ນຂຶ້ນກັບຂອບເຂດຄວາມຮັບຜິດຊອບຂອງເລຂາຄະນະພັກ, ທັງເປັນຜູ້ນຳພາ-ຊີ້ນຳວຽກງານຕິດຕາມ, ກວດກາ ແລະ ນຳພາສະຫາຍສະມາຊິກໃນຄະນະປະຈຳພັກ, ຜູ້ຮັບຜິດຊອບວຽກງານກວດກາ ເມື່ອພົບເຫັນການລະເມີດແຕ່ບໍ່ກ້າເວົ້າຫຍັງ, ເຮັດບໍ່ລ້ອນໜ້າທີ່ຂອງຕົນ;

3. ໝູ່ຄະນະ, ຄະນະປະຈຳ, ສະມາຊິກໃນຄະນະພັກ, ຜູ້ເປັນຫົວໜ້າບໍ່ປະຕິບັດລະບອບຕິຊົມຕົນເອງ, ຕິຊົມກັນ; ເພາະບໍ່ມີຄວາມຊື່ສັດ, ໂປ່ງໃສ ແລະ ບໍ່ມີມິດຕະພາບໃນການຕິຊົມຕົນເອງ, ຕິຊົມກັນ, ຈົ່ງຈຽມ, ເຫັນແກ່ຜົນປະໂຫຍດສ່ວນຕົວຫຼາຍກ່ອນຜົນປະໂຫຍດສ່ວນລວມ...ສະນັ້ນ, ໃນກອງປະຊຸມຂອງຄະນະພັກກ່ອນທີ່ຈະພິຈາລະນາຮັບຮອງມະຕິ ຈຶ່ງມີທັງສະຫາຍທີ່ຮູ້ແຕ່ບໍ່ກ້າເວົ້າ ຫຼື ເວົ້າແຕ່ເວົ້າບໍ່ໝົດ, ບໍ່ເວົ້າເຖິງການລະເມີດຂອງຜູ້ອື່ນ, ບາງຄັ້ງກໍ່ມີກໍລະນີ ປິດປາກແລ້ວຮັບສິນບົນ ແລະ ລົງຄະແນນສຽງເຫັນດີເຫັນພ້ອມຜ່ານມະຕິ; ຕໍ່ກັບຜູ້ເປັນຫົວໜ້າຫຼາຍຄັ້ງມີການສວຍໂອກາດໃຊ້ສິດອຳນາດໃນໜ້າທີ່ຕຳແໜ່ງຂອງຕົນປິດບັງເຈດຕະນາຂອງໝູ່ຄະນະເພື່ອຫາຜົນປະໂຫຍດສ່ວນຕົວ; ແຕ່ໃນຄວາມເປັນຈິງ, ເລຂາຄະນະພັກກໍ່ຮູ້

ເຖິງການລະເມີດຫຼັກການຂອງພັກ ແຕ່ກໍ່ຍັງຕັ້ງໃຈຊ່ວຍປົກປັງ, ຮອດຕອນພົບເຫັນການລະເມີດດັ່ງກ່າວກໍ່ໄດ້ສົ່ງຜົນສະທ້ອນທີ່ບໍ່ດີຕໍ່ຄວາມໄວ້ວາງໃຈຂອງໝູ່ຄະນະ ແລະ ບຸກຄົນແລ້ວ; ຖ້າເວົ້າແບບປະທານໂຮ່ຈີມິນ ບຸກຄົນແບບນີ້ ບໍ່ສົມຄວນທີ່ຈະເປັນຜູ້ນຳ.

4. ປະຊາທິປະໄຕຍັງບໍ່ທັນເປີດກວ້າງຢ່າງແທ້ຈິງໃນການປະຕິບັດຫຼັກການລວມສູນປະຊາທິປະໄຕ; ປະຈຸບັນ, ການເປີດເຜີຍເປັນປັດໄຈໜຶ່ງທີ່ສຳຄັນໃນການປະຕິບັດຫຼັກການຂອງພັກ ໂດຍສະເພາະແມ່ນຫຼັກການລວມສູນປະຊາທິປະໄຕ; ແນ່ນອນວ່າຕ້ອງມີບັນຫາພາຍໃນພັກທີ່ຈຳເປັນຕ້ອງຮັກສາເປັນຄວາມລັບຕາມທີ່ໄດ້ລະບຸໄວ້ໃນຂໍ້ກຳນົດ, ແຕ່ກໍ່ມີບາງບັນຫາທີ່ບໍ່ມີໃນຂໍ້ກຳນົດ ວ່າໃຫ້ຮັກສາເປັນຄວາມລັບ, ລວມທັງໃນວຽກງານພະນັກງານຕ້ອງໄດ້ເປີດເຜີຍເພື່ອໃຫ້ປະຊາຊົນສາມາດຕິດຕາມ, ກວດກາການຈັດຕັ້ງປະຕິບັດໄດ້; ບົດຮຽນປະສົບຈາກຄວາມເປັນຈິງເຮັດໃຫ້ຮູ້ວ່າການເປີດເຜີຍພະນັກງານ-ສະມາຊິກພັກຜູ້ທີ່ລະເມີດລະບຽບວິໄນ ໃນໄລຍະຜ່ານມາບໍ່ໄດ້ເຮັດໃຫ້ພັກອ່ອນແອລົງ, ແຕ່ກັບເພີ່ມທະວີຄວາມໄວ້ເນື້ອເຊື່ອໃຈ ຂອງສະມາຊິກພັກ ແລະ ປະຊາຊົນຕໍ່ພັກ, ເຮັດໃຫ້ພັກເຂັ້ມແຂງຂຶ້ນ.

5. ພວກເຮົາຍັງບໍ່ທັນມີກົນໄກສະເພາະໃນການເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນ ໃນວຽກງານກໍ່ສ້າງພັກຢ່າງແທ້ຈິງ; ເຖິງວ່າພັກໄດ້ຮັບຮອງເອົາບາງກົນໄກ, ຂໍ້ກຳນົດກ່ຽວກັບວຽກງານຈັດຕັ້ງການເມືອງ-ສັງຄົມຢ່າງເປັນທາງການ ແລະ ປະຊາຊົນກໍ່ໄດ້ເຂົ້າຮ່ວມປະກອບຄຳເຫັນກັບຄະນະພັກຕໍ່ບັນຫາສິດ, ອຳນາດໃນການຕິດຕາມ, ກວດກາພະນັກງານ-ສະມາຊິກພັກ, ແຕ່ວ່າຂໍ້ກຳນົດນີ້ຍັງບໍ່ທັນໄດ້ພິຈາລະນາຮັບຮອງຢ່າງເປັນທາງການ, ສະນັ້ນ, ການປະກອບຄຳເຫັນກ່ຽວກັບວຽກງານຕິດຕາມ, ກວດກາຂອງປະຊາຊົນ ຍັງມີຂໍ້ຈຳກັດຫຼາຍ, ຍັງບໍ່ມີປະສິດທິພາບ; ວຽກງານປະຕິບັດຫຼັກການລວມສູນປະຊາທິປະໄຕໃນບັນດາການຈັດຕັ້ງພັກຍັງບໍ່ທັນມີກົນໄກ ເພື່ອໃຫ້ປະຊາຊົນສາມາດຕິດຕາມ, ກວດກາໄດ້ເປັນສາເຫດທີ່ບໍ່ສາມາດຄົ້ນພົບ, ຕ້ານ ແລະ ສະກັດກັ້ນ, ປະຕິບັດວິໄນຕໍ່ຜູ້ລະເມີດໄດ້ຢ່າງທັນການ, ເປັນສາເຫດພາໃຫ້ເກີດມີການລະເມີດເປັນເວລາດົນນານ, ກວ່າຈະພົບເຫັນ ແລະ ປະຕິບັດວິໄນຕໍ່ຜູ້ລະເມີດດັ່ງກ່າວ ກໍ່ໄດ້ສ້າງຄວາມເສຍຫາຍຢ່າງໃຫຍ່ຫຼວງຕໍ່ພັກເຮົາແລ້ວ...ໆ

ແປຈາກ: (1) ຄະນະບໍລິຫານງານສູນກາງພັກ, ມະຕິສະບັບເລກທີ 04-NQ/TW (ສະໄໝທີ XII) ວ່າດ້ວຍການເພີ່ມທະວີກໍ່ສ້າງ, ບູລະນະພັກ; ຕ້ານ ແລະ ສະກັດກັ້ນການປ່ຽນທາດທາງດ້ານແນວຄິດການເມືອງ, ຄຸນສົມບັດສິນທຳປະຕິວັດ, ແບບແຜນດຳລົງຊີວິດ ແລະ ປະກົດການປ່ຽນແປງດ້ວຍຕົນເອງ, ຫັນປ່ຽນດ້ວຍຕົນເອງຢູ່ພາຍໃນ; ວາລະສານກໍ່ສ້າງພັກ (ອີເລັກໂຕນິກ), ລົງວັນທີ 14-11-2016.

(2) ເອກະສານກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XIII, ເຫຼັ້ມທີ 1, NXB CTQG, H. 2021, ໜ້າທີ 90.

(3) ວິທະຍານິພົນໂຮ່ຈີມິ່ງສະບັບຄົບຊຸດ, NXB CTQG, H.2002, ເຫຼັ້ມທີ 5, ໜ້າທີ 505, 521.

(4) ພັກກອມມູນິດຫວຽດນາມ, ເອກະສານກອງປະຊຸມທົ່ວປະເທດ ຄັ້ງທີ V, NXB ຊື່ເທິດ, H.1982, ເຫຼັ້ມທີ 3, ໜ້າທີ່ 122-123, ບົດລາຍງານວຽກງານກໍ່ສ້າງພັກ ຫ້ອງການຄະນະຈັດຕັ້ງສູນກາງພັກຜ່ານຢູ່ກອງປະຊຸມ.

ວາລະສານກໍ່ສ້າງພັກ, ສະບັບ 261 ພະຈິກ 2023

ຜູ້ຊີ້ນຳ

ທ່ານ ປອ ວິສຸກ ພົມພິທັກ
ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ

ຄະນະບັນນາທິການ

ທ່ານ ພອນສະຫວັນ ໄຊຊະນະ ຫົວໜ້າ
ທ່ານ ວິລັດ ສຸມີຈັນ ຮອງ
ທ່ານ ນ. ແກ້ວໃຈ ແສງມີໄຊ ຮອງ
ທ່ານ ນ. ແກ້ວຕາ ພັນດານຸວົງ
ທ່ານ ຄອນຄຳ ໂສລັດຕະນະວົງ

ບັນນາທິການ, ອອກແບບ ແລະ ຈັດໜ້າ

ທ່ານ ແສງອາລຸນ ຈັນທາທອນ
ທ່ານ ບານ ມູນປະເສີດ
ທ່ານ ນ. ພິດສະໄໝ ວີໄລຮັກ
ທ່ານ ນ. ແສງຄຳ ຈິດຕະວົງ

- ຫ້ອງການ 02/ ຄຈສພ, ທະບຽນພິມ 255/ສມຊ.
- ບກ ໂທ: (021) 840420, 840421.
- E-Mail: Korsangphakmagazine@gmail.com
- ແຈ້ງບົດສົ່ງທາງ E-Mail: 020 59846399

ຮັບຜິດຊອບບໍລິຫານ-ຈຳໜ່າຍ

ທ່ານ ນ. ແສງອອນ ແກ້ວມີມັນລັດ
ທ່ານ ນ. ແສງແກ້ວ ພົມມະວົງ
ທ່ານ ພອນສະຫວັນ ລາຊະບັນເທົາ (ຈຳໜ່າຍ)
ທ່ານ ນ. ຈັນອາລີຈິດ ສໍພາບມີໄຊ
ທ່ານ ນ. ອານຸລັກ ຈິດຕິລາດ

ສາລະບານ

ນາມປາກກາ	ຫົວຂໍ້ບົດ	ໜ້າ
	ຄຳສອນ	
ບກ	- ປະທານ ໄກສອນ ພົມວິຫານ ເວົ້າເຖິງຄຸນສົມບັດ-ຄວາມພາກພຽນຂອງພະນັກງານ	1
	ທິດສະດີ ແລະ ພຶດຕິກຳ	
ແຈັກ ມຸຂະພົນ	-ມີແຕ່ຍົກສູງຄວາມເປັນແບບຢ່າງນຳໜ້າ ໃນການເຄົາລົບກົດໝາຍ ຂອງພະນັກງານ	2
ໄຊສະຫວາດ ສຸດທິວົງ	-ປັບປຸງການຈັດຕັ້ງຮາກຖານພັກ ຢູ່ເມືອງແບງ ແຂວງອຸດົມໄຊ ໃຫ້ມີຄວາມປອດໃສ	6
ສີສຸພັນ ວົງວິໄລ	-ຍົກສູງບົດບາດວຽກງານກາແດງ ຢູ່ແຂວງບໍລິຄຳໄຊ	11
	ຄົ້ນຄວ້າ-ແລກປ່ຽນ	
ມີໄຊ ພູນມີໄຊ	-ບາງສິ່ງທ້າທາຍໃນການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍ	17
ທອງແກ້ວ ສິດທິພົງ	-ຍົກສູງວຽກງານກໍ່ສ້າງ-ບຳລຸງພະນັກງານນຳພາ-ຄຸ້ມຄອງ ຢູ່ແຂວງຫຼວງນ້ຳທາ	21
ກົງແກ້ວ ອິນທະວົງ	-ຍົກສູງຄຸນນະພາບການບຳລຸງ-ກໍ່ສ້າງທິດສະດີການເມືອງ ໃຫ້ພະນັກງານ,ສະມາຊິກພັກ	26
ສາຍຝົນ ກັນຍາ	-ຍົກສູງຄຸນທາດການເມືອງໃຫ້ຖັນແຖວພະນັກງານ-ສະມາຊິກພັກ	31
ບຸນທັນ ພວງແກ້ວ	-ຍົກສູງຄຸນນະພາບການສຶກສາອົບຮົມການເມືອງ-ແນວຄິດໃຫ້ສະມາຊິກພັກ,	37
	ຄວາມຮູ້ຮອບຕົວ	
ສູນທອນ ທອງຊະນະ	-ສົງຄາມຜ່ານໄປຄວາມຕາຍຍັງຢູ່ ບົນເສັ້ນທາງໂຮ່ຈິມິນ ໃນຜືນແຜ່ນດິນລາວ	41
	ວຽກດີຄົນເດັ່ນ	
ສັນຕິບານ	-ຕັ້ງໜ້າສ້າງເສດຖະກິດຄອບຄົວ ເພື່ອຍົກລະດັບຄຸນນະພາບຊີວິດການເປັນຢູ່ໃຫ້ດີຂຶ້ນ	47
	ບົດຮຽນຕ່າງປະເທດ	
ຄຳພອນ ລໍສະຫວັດ	-ຍ້ອນຫຍັງ ໝູ່ຄະນະ, ພະນັກງານນຳພາ-ຄຸ້ມຄອງ ສ່ວນຫຼາຍຈຶ່ງລະເມີດ	50
	-ສາລະບານ	54